ໂຣມເລື່ອງສັ້ນ ໂດຍ ດອກຄູນ ນະ ຊຽງຂວາງ



# ປິດສະໜາ... ຮັກ

# ປິດສະໜາ

# “ຮັກ”

ໂດຍ ດອກຄູນ ນະ ຊຽງຂວາງ



ໂຣມເລື່ອງສັ້ນ: **ປິດສະໜາ... “ຮັກ”**

ໂດຍ: ດອກຄູນ ນະ ຊຽງຂວາງ

ຄະນະທີ່ປຶກສາ: ສຸບັນ ຈັນທະມິດ

ກາບແກ້ວ ທຳມະວົງ

ບັນນາທິການ: ດວງເດືອນ ບຸນຍາວົງ

ພິສູດອັກສອນ: ທອງຄູນ ເພັດດາລາ

ສິລະປະອອກແບບ: ທອງຄູນ ເພັດດາລາ

ພິມທີ່: ປະລິນດາ ການພິມ

ພິມຄັ້ງທີ໑: ມິຖຸນາ ໒໐໑໗

ຈຳນວນ: ໑໐໐໐ ຫົວ

@ສະຫງວນລິຂະສິດ, ທອງຄູນ ເພັດດາລາ. ໒໐໑໗

Facebook: ດອກຄູນ ນະ ຊຽງຂວາງ

E-mail: dokkhounpdl@gmail.com

**ຂໍ້ມູນທາງບັນນານຸກົມຂອງ ຫໍສະໝຸດແຫ່ງຊາດ**

**ທອງຄູນ ເພັດດາລາ**

**ປິດສະໜາ... ຮັກ/ທອງຄູນ ເພັດດາລາ, -- ວຽງຈັນ : ສຳນັກພິມ ດອກເກດ, 2017**

**96 ໜ້າ: ປະກອບພາບ; 18 ຊມ**

**1. ໂຣມເລື່ອງສັ້ນ. I. ຊື່ເລື່ອງ**

**895.91913 --dc21**

**ISBN 978-9932-07-080-0**

**ເລກທະບຽນພິມຈຳໜ່າຍ: 124/ພຈ02062017**



## ສາລະບັນ

ຄຳນຳສຳນັກພິມ ໔
ຄຳຂອບໃຈ ໖

໑. ປາຢ້າງ ໃກ້ ແມວ.................................... ໙
໒. ຕັດເຍື່ອ ເຫຼືອໃຍ.................................... ໑໖
໓. ປິດສະໜາ... ຮັກ.................................... ໒໔
໔. ຖອຍ ເພື່ອ ກ້າວ.................................... ໓໐
໕. ຕົ້ນຮັກ.................................... ໓໖
໖. ຟ້າຫຼັງຝົນ ຂອງ ຄົນຫຼັງເຂົາ.................................... ໔໖
໗. ພິດງູ.................................... ໕໓
໘. ທາງຜ່ານ.................................... ໕໙
໙. ມໍລະສຸມ.................................... ໖໓
໑໐. ສັນຍາຮ້າງ.................................... ໖໙
໑໑. ຄວາມໄວ້ໃຈ.................................... ໗໕
໑໒. ຝັນສະຫຼາຍ.................................... ໘໑
໑໓. ພາສາລາວ (ພາກປະຖົມ).................................... ໘໘

# ຄຳນຳຂອງສຳນັກພິມ

ເຊີນຊີມ  ສີມືໃໝ່...!

ເລື່ອງຂອງຄວາມຮັກ ມີໃຫ້ຂຽນເຖິງຢ່າງບໍ່ສຸດບໍ່ສ້ຽງເປັນ ເພາະຄວາມຮັກເກີດຂຶ້ນທຸກຂະນະຈິດ ທຸກແຫ່ງຫົນ ກັບທຸກເພດໄວ ແຕ່ຫຼາຍເທື່ອ ຄວາມຮັກກໍຍັງເປັນສິ່ງທີ່ເຂົ້າໃຈຍາກ ແລະມີສິ່ງໃຫ້ຄົ້ນຄິດຮື່ນຕອງຢູ່ສະເໝີ.

ຄວາມຮັກຈຶ່ງເປັນປົດສະໜາ ສຳລັບຫຼາຍໆຄົນ ແລະຫຼາຍໆຄົນກໍຍັງມ່ວນນຳການດິ່ງເລິກລົງໄປໃນປົດສະໜາດັ່ງກ່າວ.

"ປົດສະໜາ...ຮັກ" ຈາກປາຍປາກກາຂອງ "ດອກຄູນ ນະ ຊຽງຂວາງ" ອາດຈະຍັງບໍ່ເປັນທີ່ລົ້ງຕາລົ້ງຫູທ່ານຜູ່ອ່ານເທື່ອ ແຕ່ສຳນັກພິມດອກເກດຍິນດີ ແລະສະໜັບສະໜູນທຸກການປະດິດແຕ່ງທີ່ຜ່ານການເຝິກຝົນຮ່ຳຮຽນດ້ວຍຕົນເອງບໍ່ລອກກ່າຍ ຫຼືຮຽນແບບຜົນງານຂອງຜູ່ອື່ນ ຈົນເກືອບບໍ່ມີສ່ວນເຫຼືອເປັນຂອງຕົນເອງ.

ດ້ວຍໄວອັນໜຸ່ມນ້ອຍ ແລະປະສົບການສົດໆຮ້ອນໆຂອງໄວໜຸ່ມ ບວກກັບການໄດ້ມານອນແຊ່ຢູ່ໃນແຫຼ່ງຄວາມຮູ້ຄື"ຫໍສະໝຸດມະຫາສິລາວີຣະວົງສ໌"ທີ່ບ້ານໄຮ່ "ສວນໄຜ່ພັນກໍ", ດອກຄູນໃຊ້ເວລາອ່ານສຶກສາຜົນງານຂອງນັກຂຽນລາວຫຼາຍຄົນຢູ່ເປັນເວລາດົນພໍສົມຄວນ ແລ້ວກໍໄດ້ສົນທະນາແລກປ່ຽນຄວາມຄິດເຫັນກັບ "ດອກເກດ" ນັກຂຽນອາວຸໂສ ແລະເພື່ອນຮຸ່ນຮາວຄາວດຽວກັນຜ່ານທາງ face book ແດ່ ຜ່ານສຽງໂອ້ລົມແດ່ ຈຶ່ງສາມາດສັນສ້າງຜົນງານທີ່ບົ່ງບອກເຖິງພອນສະຫວັນໃນຕົວອອກມາດັ່ງທີ່ເຫັນຢູ່ ໂດຍເກັບກຳເອົາທັງເລື່ອງທີ່ຜ່ານໄປແລ້ວ ເລື່ອງຂອງຄົນອ້ອມຂ້າງ ແລະແມ່ນແຕ່ເລື່ອງຂອງໂຕໝາ ໂຕແມວທີ່ຕົນເອງໃກ້ຊິດມາບອກເລົ່າ ແຝງຄະຕິໄດ້ຢ່າງພໍເໝາະພໍດີ.



ນອກຈາກເລື່ອງຂອງຄົນຂອງສັດແລ້ວ ດອກຄູນຍັງກ້າຫານກ່າວເຖິງເລື່ອງໜັກໆ ທີ່ກຳລັງເປັນທີ່ສົນໃຈຂອງຄົນໃນວົງການພາສາອັກສອນ ທັງພາຍໃນ ແລະຕ່າງປະເທດຄືເລື່ອງພາສາລາວໃນການສື່ສານ ເຊິ່ງເລື່ອງນີ້ກໍທ້າທາຍກັບຄວາມສາມາດຂອງນັກຂຽນມືໃໝ່ຢູ່ ຈຶ່ງຄວນຕົບມືໃຫ້ ເພາະມັນສະແດງໃຫ້ເຫັນເຖິງຄວາມຫ່ວງໃຍຢາກຮູ້ຢາກສຶກສາຄົ້ນຄວ້າຕໍ່ໄປ ແລະສິ່ງນີ້ກໍຄວນເປັນຄຸນສົມບັດປະຈຳໂຕຂອງຜູ່ທີ່ໄດ້ຊື່ວ່າ "ນັກຂຽນ" ທຸກຄົນ.

ມີນັກຂຽນເກີດຂຶ້ນໃໝ່ ກໍໝາຍຄວາມວ່າມີເລື່ອງໃໝ່ໆໃຫ້ອ່ານໃຫ້ທົດລອງຊີມຄືກັບອາຫານເຍື່ອງໃໝ່ປຸງແຕ່ງດ້ວຍສີມືຄົວຄົນໃໝ່ທີ່ເຝິກຝົນສີມືມາພໍສົມຄວນ ຮັບຮອງວ່າທ່ານຜູ່ອ່ານຈະບໍ່ຜິດຫວັງ , ບໍ່ເຊື່ອ ກໍລອງເບິ່ງ.!

ເມສາ  ຄ.ສ. ໒໐໑໗

ສຳນັກພິມ  ດອກເກດ



# ຄຳຂອບໃຈ

ຂ້າພະເຈົ້າພາກພຽນຮ້ອຍຕໍ່ທຸກເລື່ອງລາວໃນປຶ້ມເຫຼັ້ມນີ້ ມາດົນພໍສົມຄວນ ຄົງດ້ວຍປະສົບການ ແລະປາຍປາກກາຍັງໃໝ່ແດ່ ຈຶ່ງໄດ້ພະຍາຍາມຄ່ອຍຝົນໃຫ້ມັນອອກມາຄົມທີ່ສຸດ ເພື່ອຄົນອ່ານຈະໄດ້ບໍ່ຜິດຫວັງ.

ເຊື່ອວ່າທຸກຄົນຄົງເຄີຍຜ່ານເຫດການທີ່ເຮັດໃຫ້ສຸກ ເສົ້າ ສົມຫວັງ ແລະຜິດຫວັງປະປົນກັນໄປ ຂ້າພະເຈົ້າກໍເປັນໜຶ່ງທີ່ຜ່ານທຸກຄວາມຮູ້ສຶກນັ້ນມາ ບາງເລື່ອງກໍເຄີຍຜ່ານເຂົ້າມາໃນຊີວິດ ບາງເລື່ອງກໍໄດ້ພົບພໍ້ຈາກຄົນອ້ອມຂ້າງ ຈາກສັງຄົມພາຍນອກ ແຕ່ທຸກເລື່ອງລາວເຫຼົ່ານັ້ນເປັນທັງຄວາມຊົງຈຳທີ່ດີ ແລະເປັນບົດຮຽນອັນລ້ຳຄ່າ ແລະ ກໍຍັງເປັນແຮງບັນດານໃຈໃຫ້ຂ້າພະເຈົ້າຈັບປາກກາຂຶ້ນມາຂຽນ ຄົງເພາະບາງເລື່ອງບໍ່ສາມາດເວົ້າອອກສຽງໄດ້ ຈຶ່ງໄດ້ອາໄສຕົວອັກສອນຮ້ອຍຕໍ່ທຸກເລື່ອງລາວນັ້ນອອກມາແທນ ແລະທຸກຄວາມຮູ້ສຶກເຫຼົ່ານັ້ນສາມາດປ່ຽນມາເປັນທັງຄວາມບັນເທີງ ແລະບົດຮຽນໃຫ້ແກ່ຜູ້ທີ່ໄດ້ອ່ານ. ເພາະຂ້າພະເຈົ້າເຊື່ອວ່າ **"ມົນສະກົດຂອງຕົວໜັງສືມີລິດເດດທີ່ແຮງກ້າ"** ມົນສະກົດທີ່ບໍ່ມີສຽງຮ້ອງ ແຕ່ດັງກ້ອງໄປທົ່ວໂລກ ມົນສະກົດທີ່ສາມາດປ່ຽນແປງຊີວິດຄົນເຮົາໄດ້ ໂດຍປາສະຈາກເຫດ ແລະຜົນໃດໆທັງສິ້ນ.

ແຕ່ຖ້າມີພຽງປາຍປາກກາ ກັບເລື່ອງລາວກໍຄົງບໍ່ສາມາດຕີພິມອອກມາເປັນເຫຼັ້ມໄດ້ ຖ້າປາສະຈາກການຊ່ວຍເຫຼືອທີ່ຢູ່ເບື້ອງຫຼັງ. ດັ່ງນັ້ນຂ້າພະເຈົ້າຈຶ່ງຖືໂອກາດນີ້ ຂໍຂອບໃຈມາຍັງທ່ານ ອາຈານ ດວງເດືອນ ບຸນຍາວົງ ຫຼື"ດອກເກດ"



ນັກຂຽນອາວຸໂສ ທີ່ເປັນທັງຕົ້ນແບບ ແລະເປັນຄູຜູ້ທຳອິດທີ່ໃຫ້ຄຳປຶກສາ ແນະນຳວິທີການຂຽນໃຫ້ແກ່ຂ້າພະເຈົ້າ ຕັ້ງແຕ່ມື້ແຮກທີ່ລົງມືຈັບປາກກາຂຽນ ແລະຂໍຂອບໃຈ ທ່ານ ສຸບັນ ຈັນທະນິດ ແລະທ່ານ ກາບແກ້ວ ທຳມະວົງ ທີ່ໄດ້ຊ່ວຍເຫຼືອໃຫ້ຄຳຊີ້ແນະເຮັດໃຫ້ປຶ້ມເຫຼັ້ມນີ້ອອກມາສົມບູນຍິ່ງຂຶ້ນ.

ແລ້ວທີ່ຂາດບໍ່ໄດ້ກໍແມ່ນ ຂໍຂອບໃຈບັນດາທ່ານທີ່ຈັບປຶ້ມເຫຼັ້ມນີ້ຂຶ້ນມາອ່ານ ຫວັງວ່າທ່ານຈະໄດ້ຮັບຄວາມສຸກຈາກເລື່ອງສັ້ນໃນປຶ້ມເຫຼັ້ມນີ້ ນັກຂຽນກໍຫວັງພຽງວ່າຜູ້ອ່ານຈະອ່ານດ້ວຍຄວາມເພີດເພີນເໝືອນດັ່ງນັ່ງເບິ່ງຮູບເງົາໃນໂຮງຮູບເງົາທີ່ເອີ່ຍພຽງວ່າ "ຈົບແລ້ວຫວາ..! ຄືຈົບໄວແທ້...! ເມື່ອເຖິງເວລາທີ່ທ່ານຕ້ອງລຸກອອກຈາກໂຮງຮູບເງົາໄປ ແຕ່ໃຈຍັງຄຶດຢາກເບິ່ງພາກຕໍ່ໄປຢູ່ ຂ້າພະເຈົ້າກໍຫວັງວ່າທ່ານຈະເອີ່ຍແບບດຽວກັນນັ້ນ ເມື່ອໜ້າເຈ້ຍໃບສຸດທ້າຍຖືກພັບລົງ ແລ້ວທ່ານບໍ່ຮູ້ສຶກເສຍດາຍເວລາທີ່ອ່ານ ເພາະນັ້ນຄືຄວາມສຸກ ແລະຄວາມສຳເລັດທີ່ຜູ້ຂຽນຕ້ອງການ.

ດ້ວຍຄວາມເຄົາລົບ

ດອກຄູນ ນະ ຊຽງຂວາງ






## ປາຢ້າງ ໃກ້ ແມວ

ແສງຕາເວັນຍາມເຊົ້າເປັ່ງປະກາຍລົງມາສູ່ພື້ນແຜ່ນດິນສ່ອງຜ່ານປ່ອງຢ້ຽມ ລອດຜ້າກັ້ງກະທົບໃສ່ໃບໜ້າດວງຕາທີ່ກຳລັງຫຼັບຢູ່ໃຫ້ຕື່ນ. “ໂອ່ຍ..! ຈັ່ງແມ່ນແຈ້ງໄວ ຍັງນອນບໍ່ອີ່ມຊ້ຳ ຄ້ານລຸກເດ!” ເວົ້າແລ້ວຕາຂ້ອຍກໍມ້ອຍຫຼັບລົງອີກ.
“ແຕ້ມໆ ຕື່ນໄດ້ແລ້ວ ສວາຍລະເດນີ ນອນກິນບ້ານກິນເມືອງແທ້ ລຸກໄວໆມາກິນເຂົ້າຖ້າດິນລະນິ ມື້ນີ້ມີຈືນປາທູຂອງມັກໂຕເລີຍ” ຂ້ອຍໄດ້ຍິນສຽງຖົ່ວງອກໝູ່ຮັກໝູ່ແພງຂ້ອຍແວ່ວມາເຂົ້າຫູ ຂ້ອຍຄ່ອຍໆໂງເງລຸກຂຶ້ນຍ່າງເຊເຂົ້າໄປໃນເຮືອນຄົວເພື່ອຫາກິນເຂົ້າ.
“ຕັ້ງແມ່ນວ່າແຊບເນາະປາທູນິ! ກິນຈັກເທື່ອກະບໍ່ເບື່ອ ຖ້າບໍ່ໝົດລະເຊົາບໍ່ເປັນ” ຂ້ອຍທັງເວົ້າທັງຫຍ້ຳເຂົ້າໄປນຳ.
“ກິນກ່ອນຈັ່ງເວົ້າກໍໄດ້ ບໍ່ມີໃຜຍາດໂຕເວົ້າດອກ ເບິ່ງດຸເຂົ້າເຮ່ຍອອກປາກຊະໆເທື່ອໜ້າຖ້າຕື່ນສວາຍຊິບໍ່ປຸກເດີ ຊິກິນຜູ້ດຽວໝົດ” ຖົ່ວງອກເວົ້າໃຫ້ຂ້ອຍ.



“ກະລອງກິນປະໝົດຕິລະ ໄດ້ເຫັນດີກັນແທ້” ຂ້ອຍເວົ້າຢອກຊື່ໆດອກ ເພາະຮູ້ດີວ່າຈັ່ງໃດຖົ່ວງອກມັນກໍບໍ່ກິນປະຂ້ອຍດອກ.

ແຕ່ຂ້ອຍຕ້ອງຢຸດຫຍ້ຳເຂົ້າໄປຊົ່ວຂະນະ ເມື່ອສາຍຕາເຫຼືອດໄປເຫັນສາວງາມຮູບຊົງເຕັມສັດສ່ວນ ໜ້າທົ່ງດັ່ງຄືມ ຕາມົນໆ ປາກແດງປ່ອຍຫູ່ອຍທີ່ຢູ່ດ້ານນອກເຮືອນຄົວ ຂ້ອຍຈຶ່ງເບິ່ງທຸກກິລິຍາບົດຂອງລາວຢ່າງບໍ່ລະສາຍຕາ.
“ຢຸດເລີຍເດີຢ່າຄຶດທີ່ຈະເຮັດແນວບໍ່ດີອີກເດີ ຈັກໜ້ອຍເພິ່ນຮູ້ລະເຮົາຊິບໍ່ມີຮອດບ່ອນໃຫ້ຊຸ້ນຫົວນອນໃດ໋” ຖົ່ວງອກເອີ່ຍປາກຫ້າມທັນທີເມື່ອເຫັນອາການດັ່ງກ່າວຂອງຂ້ອຍ.

ຂ້ອຍ ກັບ ຖົ່ວງອກອາໄສຢູ່ເຮືອນນຳເອື້ອຍນາງມາດົນເຕີບແລ້ວ ພວກເຮົາຮັກແພງກັນດີ ສະໜິດສະໜົມກັນພໍສົມຄວນ ແຕ່ເຖິງວ່າພວກເຮົາຈະສະໜິດກັນພຽງໃດ ພວກເຮົາກໍບໍ່ເຄີຍໃຊ້ຄຳເວົ້າກູມຶງຈັກເທື່ອ ມີແຕ່ເອີ້ນກັນວ່າ “ເຮົາ ກັບ ໂຕ” ເທົ່ານັ້ນ. ຄົງດ້ວຍຄວາມອີ່ຕົນພວກເຮົາ ເອື້ອຍນາງລູກສາວເຈົ້າຂອງເຮືອນຈຶ່ງໄດ້ເອົາພວກເຮົາມາຢູ່ນຳຕາງເຝົ້າເຮືອນເຝົ້າຊານໃຫ້ ເພາະຄອບຄົວລາວຢູ່ນຳກັນແຕ່ສາມຄົນ ພໍ່ ແມ່ ລູກ, ແຕ່ລະມື້ທຸກຄົນແມ່ນອອກໄປວຽກກັນໝົດ ກໍມີແຕ່ຂ້ອຍ ກັບຖົ່ວງອກເຝົ້າເຮືອນໃຫ້ ຖານະຄອບຄົວລາວກໍພໍປານກາງແຕ່ລາວກໍຍັງໃຈດີລ້ຽງດູພວກເຮົາໄວ້.
“ສາວນັ້ນມາແຕ່ໃສຫວະ? ເຮົາຄືບໍ່ເຄີຍເຫັນ” ຂ້ອຍເອີ່ຍຖາມຖົ່ວງອກ.
“ຄືຊິແມ່ນມານຳເອື້ອຍນາງຫັ້ນແຫຼະ ເຮົາກໍບໍ່ຮູ້ ບໍ່ໄດ້ຍິນເພິ່ນເວົ້າລົມຫຍັງກັນ” ຖົ່ວງອກຕອບພ້ອມເວົ້າຕໍ່:
“ໂຕຢ່າເດີ ຢ່າເຮັດໃຫ້ພວກເພິ່ນຜິດຫວັງອີກເດີ ເພິ່ນໃຫ້ບ່ອນຢູ່ ເຂົ້າກິນນີ້ກໍບຸນລົ້ນຫົວແລ້ວ ຖ້າໂຕເຮັດຫຍັງໃຫ້ສາວນັ້ນເຮົາເອົາໂຕຕາຍຄັກໆ”
“ເອີ.! ເຮົາຮູ້ຢູ່ດອກນ່າ ເຮົາກະຖາມເບິ່ງຊື່ໆ” ຂ້ອຍຕອບຖົ່ວງອກພ້ອມຍ່າງງົກໆອອກໄປນັ່ງຢູ່ຕັ່ງລະບຽງໜ້າບ້ານບ່ອນນອນປະຈຳຂອງຂ້ອຍ.

ຖົ່ວງອກມັນດຸໝັ່ນມັກຊອກຢູ່ຫາກິນ, ຕື່ນເດິກລຸກເຊົ້າ, ຊື່ສັດຈົງຮັກພັກດີ ບໍ່ເຄີຍມີຈັກເທື່ອວ່າຊິລັກເລັກຂະໂມຍນ້ອຍ ຕີນສັ້ນມືຍາວ ຍ້ອນເຫດນີ້ພວກເພິ່ນຈຶ່ງຮັກຖົ່ວງອກຫຼາຍ ທີ່ມັນໄດ້ຊື່ຖົ່ວງອກນີ້ ຄົງເປັນເພາະວ່າໂຕມັນນ້ອຍໆ

ດຳໆຂາວແຕ່ແຂ້ວ ແລະມີໜວດປົ່ງອອກມາສີ່ຫ້າເສັ້ນ ແຕ່ມີຢູ່ສອງເສັ້ນເປັນສີຂາວ ຂ້ອຍແນມເບິ່ງໜ້າມັນເທື່ອໃດກໍອົດຫົວບໍ່ໄດ້ ທັງທີ່ມັນເອງກໍຍັງໜຸ່ມນ້ອຍບໍ່ໜ້າຈະທັນມີໜວດຂາວບ່າ ສົງໄສວ່າແມ່ນຜູ້ເຖົ້າເກີດເປັນມັນຄັກໆ ຊັ້ນມັນບໍ່ຮູ້ຈັກຄວາມປານນີ້ດອກ. ບາງເທື່ອຂ້ອຍກໍອິດສາມັນໃດ໋ ທີ່ເພິ່ນຮັກມັນບໍ່ຮ້າຍບໍ່ເວົ້າໃຫ້ມັນຈັກເທື່ອ ມີບາງເທື່ອກໍຄຶດຊັງມັນ ທີ່ມັນເຮັດດີໂພດເຊິ່ງຕ່າງກັບຂ້ອຍຢ່າງຂາດຂັ້ນ ແຕ່ເອື້ອຍນາງ ແລະຄອບຄົວກໍຍັງຮັກຂ້ອຍຢູ່.

ໃນຄືນນັ້ນເອງຂ້ອຍນອນບໍ່ຫຼັບ ເປັນກະວົນກະວາຍ ຄຶດເຫັນແຕ່ໃບໜ້າຮູບຮ່າງ ຂອງສາວນັ້ນຢູ່ບໍ່ເຊົາ ລັກມີຄວາມຫວັງຢູ່ໃນໃຈວ່າມື້ໃດມື້ໜຶ່ງສາວງາມນັ້ນຕ້ອງຕົກເປັນຂອງຂ້ອຍຢ່າງແນ່ນອນ ແລ້ວສະໝອງກໍຄຶດໄປຕ່າງໆນາໆຄຶດໄປຈົນໄກ່ຂັນກົກຂ້ອຍຈຶ່ງຫຼັບຕາລົງ.

ເຊົ້າມື້ໃໝ່ອາກາດແຈ່ມໃສຄືກັບທຸກມື້ ຂ້ອຍອອກມາຢືດເສັ້ນຢືດເອັນຮັບເອົາອາກາດບໍລິສຸດຢູ່ເດີນບ້ານ.

“ມື້ນີ້ເຮົາຊິໄປຊອກຫາກິນ ໂຕໄປນຳເຮົາເບາະ?” ຖົ່ວງອກເອີ່ຍຖາມ.

“ຖ້າເຮົາໄປນຳໂຕໃຜຊິຢູ່ເຝົ້າເຮືອນ ເພິ່ນກະໄປວຽກໝົດ ເຮົາວ່າໂຕໄປຜູ້ດຽວສາມື້ອື່ນເຮົາຈັ່ງຊິໄປໃຫ້ໂຕເຝົ້າເຮືອນປຸ່ງນ” ຂ້ອຍຟ້າວຕອບປະຕິເສດໂດຍທຳທ່າວ່າເປັນຫ່ວງເຮືອນ ແຕ່ຄວາມຈິງແລ້ວຂ້ອຍຄ້ານໄປ ທີ່ສຳຄັນແມ່ນຢາກຢູ່ກັບສາວງາມນັ້ນສອງຕໍ່ສອງຫຼາຍກວ່າ.

“ເອີໆ ກະແມ່ນໃດ໋ເນາະ ເຮົາກະລືມຄຶດໄປ ຊັ້ນໂຕຢູ່ເຮືອນ ເຝົ້າເຮືອນດີໆເດີຢ່າເຮັດຫຍັງໂລເລໃດ໋ ເຮົາຊິໄປບຶດດຽວກໍມາດອກ ໄປກ່ອນ” ເວົ້າແລ້ວຖົ່ວງອກກໍອອກເຮືອນໄປ.

ໃນທີ່ສຸດສະຫວັນກໍເປີດທາງໃຫ້ ໂອກາດມາຮອດແລ້ວ ບໍ່ມີໃຜຢູ່ເຮືອນເລີຍຈັກຄົນ ຖົ່ວງອກກໍອອກໄປລະ ຂ້ອຍຍິ້ມກິນຢູ່ໃນໃຈ ເມື່ອທາງສະດວກແລ້ວຂ້ອຍກໍຟ້າວຢ່າງເລາະເບິ່ງທົ່ວເຮືອນ ແຕ່ສາວນັ້ນໄປໃສຫວະ! ມື້ວານນີ້ຍັງເຫັນຢູ່ ຫຼືວ່າລາວໄປວຽກນຳເອື້ອຍນາງບໍ່? ຮື! ຖ້າຂ້ອຍບໍ່ຕື່ນສວາຍກໍຄົງຮູ້ແລ້ວວ່າລາວໄປໃສ “ບຸນມີແຕ່ກຳບັງແທ້ໆ” ຂ້ອຍຈົ່ມເຫຼືອໃຈກັບໂຕເອງທັງຖອນຫາຍໃຈບາດໃຫຍ່ໆຢ່າງກົ້ມໜ້າອອກໄປຫຼັງບ້ານ ແຕ່ຟ້າກໍເຫັນໃຈ ຂ້ອຍຍິ້ມອອກ



ມາດ້ວຍຄວາມດີໃຈສຸດຂີດ ເມື່ອສາວງາມທີ່ຂ້ອຍຊອກຫາທົ່ວເຮືອນລາວນອນຕາກແດດຢູ່ນີ້ ຮ່າງກາຍເກືອບບໍ່ມີເຄື່ອງປົກຄຸມຢູ່ເລີຍ ຜິວຂາວໆຮຸ່ນອວບໆສະກິດໃຫ້ຂາຂ້ອຍຍ່າງເຂົ້າໄປຫາໃກ້ໆ.

“ຈຸ໊ໆໆໆ.. ຢ່າປາກດັງເດີ” ຂ້ອຍບອກກັບລາວ.

ຂ້ອຍນອນລົງໃກ້ໆລາວ ສາຍຕາຈົ້ງເບິ່ງໂດຍບໍ່ຫຼຽວໜີໄປໃສແມ່ນແຕ່ວິນາທີດຽວ.

“ເຈົ້າຄືມາຜູ້ງາມແທ້ເດ ຜິວຂາວນວນພໍປານຍອງຝ້າຍ ກິ່ນກາຍຫອມຫວນປານດອກລຳດວນຍາມເຊົ້າ ເຮັດໃຫ້ຂ້ອຍຢາກກືນກິນເຈົ້າເຂົ້າໄປໝົດໂຕບໍ່ຢາກເຫຼືອໄວ້ໃຫ້ໃຜເລີຍ ຮີມສົບໜາໆ ແດງກ່ຳພໍປານໝາກມອນສຸກເຫັນແລ້ວຢາກລອງກັດຊິມເບິ່ງເດວ່າຊິຫວານສ່ຳໃດ?” ດວງຕາມົນໆ ດຳໆສະກິດໃຫ້ມືຂ້ອຍຍື້ໄປຈັບໃບໜ້າຂອງລາວ ຄ່ອຍໆລູບໄລ້ລົງໄປເກືອບທົ່ວຮ່າງກາຍ ລາວບໍ່ວ່າຫຍັງຈັກຄຳ ສະແດງວ່າລາວກໍຄົງຈະພໍໃຈ (ຂ້ອຍຄຶດເອົາເອງ).

“ຂ້ອຍຫຼົງມັກເຈົ້າຕັ້ງແຕ່ມື້ທຳອິດທີ່ເຫັນແລ້ວ ຖ້າຂ້ອຍບໍ່ໄດ້ເຈົ້າຂ້ອຍຄົງຕ້ອງເປັນບ້າຕາຍແທ້ໆ. ເນາະໆ ຍອມໃຫ້ຂ້ອຍໄດ້ກືນກິນເຈົ້າສາເນາະ ຈັກໜ້ອຍມີໃຜກັບມາເຫັນລະຂ້ອຍຕາຍແທ້ໆ” ຂ້ອຍເອີ່ຍຖາມລາວ ແຕ່ລາວກໍບໍ່ຕອບຫຍັງເຮັດໜ້າຕາຊື່ໆ ລາວຄົງຈະຕົກລົງ (ຂ້ອຍຄຶດເອົາເອງອີກ).

ເວົ້າແລ້ວຂ້ອຍກໍບໍ່ລໍຊ້າ ໂດດເຂົ້າໄປກັດປາກລາວຢ່າງແຮງ ມັນຊ່າງຫວານນົວພໍປານນ້ຳເຜິ້ງເດືອນຫ້າເອົາໂລດ ຂ້ອຍກຳລັງຈະກັດລົງແກ້ມແລ້ວກໍຈະໄລ້ໄປເທື່ອລະໜ້ອຍໃຫ້ໝົດໂຕ ແຕ່ສະຫວັນກໍຫຼິ້ນຕະຫຼົກກັບຂ້ອຍ ຄວາມສຸກໄດ້ດັບວູບລົງກັບໝ້ອງເມື່ອ:

“ໂອ້ຍ! ຕາຍຄັກໆກູ. ບັກດ່າງມຶງຂຶ້ນມາເຮັດຫຍັງມຶງປະກູແມ້” ແມວ..! ຂ້ອຍຮ້ອງຂຶ້ນດ້ວຍສຽງທີ່ເຈັບປວດ ເລັບຍາວໆແຫຼມໆຊ່ອຍຫຍັງບໍ່ໄດ້ເລີຍ ຂ້ອຍໄດ້ແຕ່ນອນແນບນິ້ງຄາປາກບັກດ່າງຢູ່ພື້ນເຮືອນ.

“ກູຈອບເບິ່ງມຶງມາດົນແລ້ວ ເຫັນມຶງມີແຕ່ລັກກິນປາເພິ່ນຕະຫຼອດ ຈັກຊິຢູ່ໃຫ້ເປືອງເຂົ້າປາເພິ່ນເຮັດຫຍັງ ມື້ນີ້ກູຊິເອົາມຶງຕາຍຄາປາກກູນີ້ແຫຼະ” ບັກດ່າງມັນເວົ້າພ້ອມທັງງັບແຂ້ວມັນໃສ່ໂຕຂ້ອຍແຮງຂຶ້ນໆ.



“ໂອ້ຍ ຕາຍແທ້ໆໃຜກະບໍ່ຢູ່ ບໍ່ມີໃຜມາຊ່ອຍເລີຍ” ຂ້ອຍຈົ່ມໃນໃຈດ້ວຍຄວາມເຈັບປວດ ແຕ່ແລ້ວກໍ…

“ແມວ.!” ສຽງຮ້ອງມາແຕ່ໄກ ຕີນໜ້າທັງສອງງ້າງເລັບຍາວໆແຫຼມໆອອກໂດດຈົກໜ້າບັກດ່າງຢ່າງແຮງ ຈົນມັນວາງຂ້ອຍອອກຈາກປາກທັນທີ.

“ເຈົ້າຊິມາຊ່ອຍມັນເຮັດຫຍັງ ມັນຂີ້ຄ້ານຄືຫຍັງນິ ມີແຕ່ລັກກິນປາ ໃຫ້ຂ້ອຍກັດມັນຕາຍສາລະແລ້ວນ່າ” ບັກດ່າງເວົ້າກັບຖົ່ວງອກ ແຕ່ສາຍຕາມັນເຫຼືອດມາໃສ່ຂ້ອຍຄືຊິຢາກໂດດມາກັດອີກ.

“ແລ່ນໄວແຕ້ມພຸ້ນຂຶ້ນໄປຢູ່ຂື່ເຮືອນພຸ້ນ ໄວໆ” ເມື່ອຍິນຖົ່ວງອກມັນບອກຂ້ອຍກໍຟ້າວແລ່ນຂຶ້ນໄປ ເພາະຖ້າຢູ່ລຸ່ມມີຫວັງໄດ້ໄປນອນລົມກັບຮາກໝາກມ່ວງແທ້ ກໍແນວໝາບັກດ່າງມັນທັງໂຕໃຫຍ່ໂຕຕຸ້ຍ ຖືກກັດບາດໜຶ່ງແຂ້ວມັນເກືອບຈຳຮອດກະດູກ. ແຕ່ຖົ່ວງອກເວົ້າຫຍັງກັບບັກດ່າງຫວະ ມັນຈັ່ງຍອມລົງເຮືອນໄປແລ້ວບັກດ່າງມັນຄືບໍ່ກັດຖົ່ວງອກລະ..? ແຕ່ຢ່າເທາະຈັ່ງໃດກະລອດຕາຍລະກູຂອບໃຈໂຕຫຼາຍໆເດີຖົ່ວງອກ” ຂ້ອຍເວົ້າທັງຄາງເຈັບເມື່ອຖົ່ວງອກມັນຂຶ້ນມາຫາຂ້ອຍ.

“ໂອ່.. ໝາຂຶ້ນມາເຮືອນໃດ໋ນິເນາະ ເບິ່ງຮອຍຕີນຈຸ້ມນຳຂັ້ນໄດນີ້” ສຽງເອື້ອຍນາງເວົ້າຂຶ້ນມາແຕ່ຕີນຂັ້ນໄດ ແລະເວົ້າຂຶ້ນຢ່າງຕົກໃຈພ້ອມແລ່ນໄປນຳວ່າ:

“ໂອ່ຍ.! ຕາກປາໄວ້ແຕ່ເຊົ້າລືມມ້ຽນບໍ່ແມ່ນແມວລັກເອົາໄປກິນໝົດລະເບາະໂອ່! ໄຄແຕ່ຍັງຢູ່ເນາະ ແມວຢູ່ເຮືອນນີ້ຕັ້ງຄຳຮູ້ແທ້ໃດ໋ ລືມປາໄວ້ຢູ່ນອກກໍບໍ່ລັກກິນ ຄຳຮູ້ແນວນີ້ຊິໄດ້ໃຫ້ຫົວປາໃຫຍ່ເປັນຂອງລາງວັນແຫຼະນິ” ເອື້ອຍນາງທັງເວົ້າທັງຍິ້ມພ້ອມຈັບເອົາປາເຂົ້າມາໄວ້ໃນເຮືອນ ໃນຂະນະທີ່ຂ້ອຍນອນໂຕສັ່ນເບິ່ງຢູ່ເທິງຂື່ເຮືອນ.

“ແຕ້ມ ເຮົາວ່າລົງໄປຫາເອື້ອຍນາງໃຫ້ເພິ່ນເອົາຢາໃສ່ໃຫ້ໂຕດີເບາະ ເຮົາເຫັນໂຕມີເລືອດອອກນຳໃດ໋” ຖົ່ວງອກເວົ້າແລ້ວກໍພາກັນລົງໄປຫາເອື້ອຍນາງ. ພໍແຕ່ລາວເຫັນໂຕຂ້ອຍມີເລືອດອອກ ກໍຟ້າວໄປເອົານ້ຳລ້າງບາດພ້ອມຢາມາໃສ່ໃຫ້ຂ້ອຍທັນທີ.

“ຖືກບັກດ່າງກັດແມ່ນບໍ່ນິ ເຫັນຮອຍຕີນມັນຂຶ້ນມາແຕ່ຂັ້ນໄດພຸ້ນ ເບິ່ງດຸບາດໃຫຍ່



ບໍ່? ດີແຕ່ແຂ້ວມັນບໍ່ເຂົ້າເລິກເນາະ ອີກສອງສາມມື້ກໍເຊົາແລ້ວລະ ມື້ແລງຊິເອົາຫົວປາໃຫຍ່ໃຫ້ກິນເດີ ເປັນລາງວັນຂອງແມວຄຳຮູ້ເຝົ້າເຮືອນບໍ່ລັກກິນປາ” ລາວທັງເວົ້າທັງເອົາຢາໃສ່ໃຫ້ຂ້ອຍດ້ວຍຄວາມເປັນຫ່ວງ.

“ແມວ” ຂ້ອຍບອກລາວໄປວ່າ “ຂອບໃຈຫຼາຍໆ” ແຕ່ລາວຊິເຂົ້າໃຈບໍ່ກະບໍ່ຮູ້.

ເຫດການໃນເທື່ອນີ້ເກືອບຂ້ອຍເອົາຊີວິດບໍ່ລອດ ຖ້າບໍ່ໄດ້ຖົ່ວງອກມາຊ່ອຍຂ້ອຍຄົງຕາຍໄປແລ້ວ ແລະບັກດ່າງວ່າຂ້ອຍຂີ້ຄ້ານມັນຈຶ່ງຢາກກັດຂ້ອຍໃຫ້ຕາຍ ຂ້ອຍເປັນແນວນັ້ນແທ້ບໍ່? ແຕ່ມື້ນີ້ເອື້ອຍນາງເພິ່ນຍ້ອງຂ້ອຍວ່າຄຳຮູ້ເຝົ້າເຮືອນບໍ່ລັກກິນປາ ແລະເບິ່ງລາວຊົງຮັກຊົງຫ່ວງຂ້ອຍຫຼາຍ ແລ້ວຊິເຮັດຈັ່ງໃດດີນໍ້ ເພື່ອບໍ່ໃຫ້ບັກດ່າງມັນຊັງຂ້ອຍຄືກັບຖົ່ວງອກບໍ່ເຫັນມັນຢາກກັດພໍດີ້ ແລະຊິເຮັດຈັ່ງໃດໃຫ້ເອື້ອຍນາງລາວຮັກຂ້ອຍແນວນີ້ໄປຕະຫຼອດ ຫຼືເຖິງເວລາທີ່ຂ້ອຍຕ້ອງປ່ຽນນິໄສໃໝ່ ບໍ່ຂີ້ຄ້ານບໍ່ລັກຢູ່ລັກກິນ ເຮັດຄືກັບຖົ່ວງອກເອື້ອຍນາງຈັ່ງຊິຮັກ ແລະບັກດ່າງມັນຈັ່ງຊິບໍ່ຢາກກັດຂ້ອຍອີກ...”

**ແມວ ແມວ ແມວ..!!**



**ເລື່ອງບາງເລື່ອງ ກັບຄົນບາງຄົນ ເຖິງແມ່ນວ່າຈະເຮັດໃຫ້ເຮົາເຈັບຊ້ຳພຽງໃດ ແຕ່ເຮົາກໍຍັງເລືອກທີ່ຈະເກັບຄວາມຮູ້ສຶກນັ້ນໄວ້ເປັນຄວາມຊົງຈຳຂອງໃຈຕະຫຼອດໄປ...**

**໒໔ ເມສາ ໒໐໑໗**



# ຕັດເຍື່ອ... ເຫຼືອໃຍ

ຂ້ອຍຍັງຈື່ໄດ້ດີວ່າມື້ນີ້ໃນເມື່ອສາມປີກ່ອນ ຂ້ອຍກໍເຄີຍມານັ່ງຢູ່ບ່ອນນີ້ ທີ່ມີບັນຍາກາດແບບນີ້ ດວງຕາເວັນໃກ້ຈະລັບຂອບຟ້າສາຍແສງສີທອງເປັ່ງປະກາຍສະທ້ອນໃສ່ຜິວນ້ຳ ໝູ່ນົກສັກກຸນາພາກັນບິນກັບເຮືອນຮັງ ສາຍລົມພັດຜ່ານພໍໃບໄມ້ໄຫວເອນໄປມາ ພາບໃນມື້ນີ້ບໍ່ຕ່າງຫຍັງກັບມື້ນັ້ນ ຍົກເວັ້ນແຕ່ໂຕຂ້ອຍເອງ ຂ້ອຍກັບມາບ່ອນນີ້ອີກຄັ້ງ ມາຕາມຄຳສັນຍາທີ່ວ່າ **"ບໍ່ວ່າຈະມີຫຍັງເກີດຂຶ້ນກໍຕາມຖ້າຫົວໃຈ ແລະຄວາມຮູ້ສຶກທີ່ມີຕໍ່ກັນຍັງຄືເກົ່າໃຫ້ກັບມາຫາກັນຢູ່ບ່ອນນີ້ ໃນວັນທີ ໑໔ ກຸມພາຂອງທຸກປີ"** ພາບໃນອະດີດໄດ້ປາກົດຢູ່ໃນຫົວຂ້ອຍເຕັມໄປໝົດ ພາບຄູ່ຮັກນັ່ງເບິ່ງຕາເວັນຕົກດິນນຳກັນ, ຍ່າງຈັບມືກັນເລາະລຽບແຄມຫາດຊາຍ, ພາບທີ່ແລ່ນໄລ່ຢອກກັນ... ມັນຊ່າງເປັນພາບທີ່ສຸດແສນມີຄວາມສຸກເຫຼືອເກີນ. ແຕ່ຂ້ອຍຕ້ອງນັ່ງນ້ຳຕາຊຶມເມື່ອນຶກເຫັນພາບເຫຼົ່ານັ້ນຂຶ້ນມາເຖິງແມ່ນວ່າມັນຜ່ານມາແລ້ວແລະກໍຜ່ານມາຫຼາຍປີແລ້ວກໍຕາມເວລາບໍ່ໄດ້ຊ່ອຍປົວແຜທີ່ເກີດໃນໃຈຂ້ອຍໄດ້ເລີຍ ຂ້ອຍຈຶ່ງໄດ້ກັບມາ.. ມາພ້ອມກັບຄວາມຫວັງເລິກໆໃນໃຈວ່າຈະໄດ້ພໍ້ເຈົ້າຢູ່ບ່ອນນີ້.

ໃຕ້ສາລາແຄມງື່ມ ເປັນບ່ອນປະຈຳຂອງເຮົາສອງຄົນທີ່ມັກມານັ່ງກິນເຂົ້ານຳກັນ, ໃນຍາມບ່າຍສາຍລົມວີ່ວອນ ອອນຊອນນຳສຽງນົກຮ້ອງ.

"ຢາກນອນເບາະ ເອົານອນລົງນີ້" ເຈົ້າເວົ້າພ້ອມຕົບຂາທີ່ນັ່ງຂັດຕະໝາດຢູ່ນັ້ນ.

ຂ້ອຍເປັນພະນັກງານບັນຊີຢູ່ບໍລິສັດເອກະຊົນແຫ່ງໜຶ່ງ ດ້ວຍຄວາມອິດເມື່ອຍ ແລະທີວນອນຈາກການນັ່ງສະຫຼຸບບັນຊີທ້າຍປີມາໝົດຄືນ ຂ້ອຍບໍ່ລໍຊ້າລົ້ມຫົວລົງນອນໜູນຕັກເຈົ້າທັນທີ ມືຂວາເຈົ້າລູບຜົມຂ້ອຍຄ່ອຍໆ ແວວຕາບອກກັບຮອຍຍິ້ມຫວານໆທີ່ແນມລົງມາພ້ອມກັບຄຳເວົ້າທີ່ວ່າ:

"ຄືຊິເມື່ອຍຫຼາຍນໍ້ ແພງເດ້ ນອນສາອ້າຍຊິກ່ອມນ້ອງເອງ" ສ່ວນຂ້ອຍກໍໄດ້ແຕ່



ຍິ້ມໆຈົນແຂ້ວແຫ້ງພຸ້ນລະ.

"ເພິ່ນເບິ່ງຄູ່ນັ້ນແມ໋ ຈັ່ງແມ່ນຫວານເປັນຕາຮັກ ເປັນຕາອິດສາແທ້ໆ ຄືຊິຮັກກັນຫຼາຍເນາະ" ຂ້ອຍໄດ້ຍິນສຽງແວ່ວມາເຂົ້າຫູ ຈາກຄົນທີ່ນັ່ງຢູ່ຕູບຂ້າງໆລົມກັນກ່ອນທີ່ບັນຍາກາດເຢັນໆຢູ່ແຄມງື່ມຍາມບ່າຍຈະຊວນໃຫ້ຂ້ອຍມ້ອຍຫຼັບໄປ.

ໃນຄ່ຳຄືນທີ່ໜາວເຢັນ ຝົນຕົກລົມບໍ່ຂາດສາຍ ໂຕຂ້ອຍອອກຮ້ອນຮົນແຕ່ໜາວສັ່ນຕະຫຼອດເວລາ, ເຈົ້າຈັບກຸນແຈລົດຈັກພ້ອມໝວກກັນກະທົບໄດ້ກໍຕິດຈັກລົດຂີ່ຜ່ານສາຍຝົນໄປດ້ວຍຄວາມຟ້າວຟັ່ງ ບໍ່ບອກຂ້ອຍຈັກຄຳວ່າໄປໃສຟ້າວໄປຈົນບໍ່ໃສ່ຮອດເສື້ອກັນຝົນຊ້ຳ ຂ້ອຍຄຶດຄຽດໃຫ້ເຈົ້າໃນໃຈທີ່ປະຂ້ອຍຢູ່ຄົນດຽວ ທັງທີ່ຂ້ອຍບໍ່ສະບາຍ. ເຈົ້າອອກໄປຄາວໜຶ່ງກໍກັບມາ.

"ອ້າຍໄປໃສມາ?" ຂ້ອຍເອີ່ຍຖາມທັງທີ່ຍັງນອນໜາວສັ່ນຢູ່ ຕາແນມເບິ່ງໂມງທີ່ຫ້ອຍຢູ່ຝາເປັນເວລາ ໑໑:໓໐ ມ. ພໍດີ.

"ອ້າຍອອກໄປຫາຊື້ຢາມາໃຫ້ນ້ອງ ແຕ່ວ່າຮ້ານໃດກໍປິດໝົດແລ້ວ ນ້ອງເປັນຈັ່ງໃດແດ່ແລ້ວ? ຍັງໜາວຢູ່ຫຼາຍບໍ່? ເຈັບຫົວບໍ່? ເມື່ອຍບໍ່?" ເຈົ້າຖາມສໍ້ຂ້ອຍພໍປານວ່າເຈົ້າເປັນໝໍເອົາໂລດ ແຕ່ກໍເຮັດໃຫ້ຂ້ອຍຍິ້ມອອກ ປ່ຽນຈາກອາລົມທີ່ຢາກຮ້າຍເປັນຕື້ນຕັນໃຈແທນ,ກໍມີພຽງເຈົ້າທີ່ເຊັດໂຕໃຫ້ຂ້ອຍເພື່ອໃຫ້ອາການໄຂ້ຫຼຸດລົງ ເຈົ້ານັ່ງເຝົ້າຂ້ອຍຕະຫຼອດຄືນໂດຍທີ່ເຈົ້າເອງບໍ່ຍອມນອນ ເຈົ້າເຮັດໃຫ້ຂ້ອຍຮູ້ສຶກວ່າເຈົ້າເປັນຫຼາຍກວ່າຄົນຮັກ ເຈົ້າເປັນດັ່ງພໍ່ແມ່ທີ່ຊ່ອຍເຫຼືອໃນຍາມທີ່ຂ້ອຍລຳບາກເປັນໝໍດູແລໃນຍາມທີ່ຂ້ອຍບໍ່ສະບາຍເປັນໝູ່ໃນຍາມຂ້ອຍເຫງົາ ເຈົ້າເປັນຄວາມສຸກເຄິ່ງໜຶ່ງໃນຊີວິດຂ້ອຍ. ແຕ່ຈະວ່າໄປແລ້ວ ຖ້າບໍ່ມີເຫດການໃນມື້ນັ້ນເຮົາກໍຄົງບໍ່ໄດ້ຮູ້ຈັກ ແລະຮັກກັນໃນມື້ນີ້:

.................

"ໂອ໋!ບ່ອນນີ້ເບາະທີ່ເຂົາຮ້ອງເພັງນ້ຳສອງສີຫັ້ນນ່າ?ຊ່າງມາງາມແທ້ຂ້ອຍຖາມດວງດ້ວຍຄວາມຕື່ນເຕັ້ນ ເມື່ອຫຼຽວເຫັນນ້ຳທີ່ໄຫຼຢູ່ສາຍດຽວ ແຕ່ຕ່າງສີກັນ ແລະບໍ່ໄຫຼປົນກັນ.

"ບໍ່ແມ່ນດອກ ເພັງທີ່ເຂົາຮ້ອງນັ້ນຢູ່ປາກຊັນພຸ້ນ, ນີ້ແມ່ນນ້ຳລຶກ ແລະນ້ຳງື່ມໄຫຼມາຈຸກັນ ນ້ຳລຶກເປັນສີຂຸ່ນ ສ່ວນທີ່ເຫັນໃສໆນັ້ນແມ່ນນ້ຳງື່ມ ບ່ອນທີ່ເຮົາຈະໄປ



ແຮ່ງງາມກວ່ານີ້ອີກ" ດວງຕອບທັງຍິ້ມ ຂ້ອຍກໍຍິ້ມຢ່າງໃຈຈົດໃຈຈໍ່ດ້ວຍຄວາມຢາກເຫັນ.

ແລ້ວບໍ່ດົນລົດກໍມາຈອດທີ່ຈຸດໝາຍ ສາຍຕາກວດແນມໄປໂດຍຮອບເຫັນໂງ່ນຫີນໃຫຍ່ນ້ອຍຢາຍຊະທັງຢູ່ໃນນ້ຳ ແລະເທິງບົກ ຕົ້ນໄມ້ໃຫຍ່ນ້ອຍແຜ່ກະຈາຍກິ່ງງ່າ ແລະ ຮາກອອກເທິງໜ້າດິນເປັນສາຍໄຂວ່ກັນປານເສັ້ນເຂົ້າປຸ້ນ ນ້ຳໃສໆທີ່ພວມທັ່ງເຫລົງມາແຕ່ສັນເຂື່ອນ ເກີດເປັນຟອງຟົ້ງກະຈາຍໄປທົ່ວບໍລິເວນກວ້າງຜູ້ຄົນມາກໜ້າຫຼາຍຕາພາກັນມາທ່ຽວປູສາດນັ່ງກັນເປັນຈຸໆບາງຄົນກໍນັ່ງຢູ່ຕູບແຄມນ້ຳຊົມທິວທັດອັນງົດງາມ.

"ຊັ້ນເຮົາປູສາດນັ່ງກ້ອງຮົ່ມໄມ້ນີ້ເນາະ" ດວງເວົ້າພ້ອມທັງວາງເຄື່ອງ ແລະສາດລົງ.

"ນັ່ງນີ້ກະດີ ຊັ້ນຂ້ອຍຊິລົງໄປເບິ່ງລຸ່ມພຸ້ນຈັກຄາວເດີ" ເວົ້າແລ້ວຂ້ອຍກໍຍ່າງລົງເນີນໄປຍັງແຄມນ້ຳ.

"ສາວໆ ບ່ອນຫັ້ນນ້ຳມັນໄຫຼແຮງ ຫີນກໍມື່ນ ນ້ຳກໍເລິກ ຂ້ອຍວ່າບໍ່ລົງໄປດີກວ່າ" ສຽງເອີ້ນຮ້ອງບອກຂາທີ່ກຳລັງຈະກ້າວລົງຢຽບໂງ່ນຫີນ ທີ່ມີນ້ຳໃສໆພວມໄຫຼຜ່ານຢູ່ນັ້ນໃຫ້ຢຸດຂ້ອຍງວາກໜ້າຄືນມາເບິ່ງເຫັນຊາຍໜຸ່ມຄົນໜຶ່ງສູງຂາວຮ່າງໃຫຍ່ ໜ້າທັ່ງດັ່ງຄົມ ຢືນຄ້ຳແອວຢູ່ແຄມຝັ່ງ.

"ໂອ່..! ແມ່ນບໍ່ ຂອບໃຈເດີທີ່ເອີ້ນບອກ" ເວົ້າແລ້ວຂ້ອຍກໍຍ່າງຂຶ້ນເນີນກົງໄປຫາໝູ່ທີ່ນັ່ງຖ້າຢູ່ສາດ, ເປັນເພາະຄວາມບັງເອີນ ຫຼືຟ້າຂີດໄວ້ແລ້ວກໍບໍ່ຮູ້ ຈຶ່ງໄດ້ເຮັດໃຫ້ສິ່ງທີ່ບໍ່ຄາດຄຶດເກີດຂຶ້ນ.

"ນັດ ນີ້ອ້າຍລ້ວນ ລາວເປັນໝູ່ຂອງອ້າຍພັດ" ໂອ່..! ຊາຍຄົນທີ່ເອີ້ນບອກຂ້ອຍຫວ່າງກີ້ນີ້ເປັນໝູ່ຂອງແຟນດວງ ເຮົາໄດ້ຮູ້ຈັກກັນຕອນທີ່ດວງແນະນຳໃຫ້ ເມື່ອເຈົ້ານຳມາສົມທົບພ້ອມກັບອ້າຍພັດ ແລ້ວພວກເຮົາກໍໄດ້ນັ່ງກິນເຂົ້າທີ່ກຽມມາຮ່ວມກັນຢູ່ຫັ້ນ.

"ແລ້ວນີ້ບໍ່ພາກັນຂຶ້ນເມືອຫຼິ້ນເທິງເບາະ?" ເຈົ້າຖາມພ້ອມທັງຊີ້ມືໄປຍັງທາງປ່າພູສູງ.

"ກໍຈະຂຶ້ນໄປຫັ້ນແຫຼະ ໝູ່ນ້ອງຫາກໍມາເທື່ອທຳອິດ ວ່າຊິພາເພິ່ນຂຶ້ນເມືອເບິ່ງເພື່ອເພິ່ນຕິດໃຈທຳມະຊາດແຖວນີ້" ດວງເວົ້າພ້ອມຍິ້ມໃສ່ເຈົ້າ.

“ພໍດີເລີຍຊັ້ນ ບໍ່ເຄີຍມາຕ້ອງຂຶ້ນເນືອເບິ່ງ ມາທ່າລາດບໍ່ເຫັນທະເລລາວປານບໍ່ໄດ້ມາແຫຼະ” ເຈົ້າເວົ້າພ້ອມຍິ້ມໃຫ້ຂ້ອຍ.

“ຊັ້ນລົດພວກນ້ອງຊິຝາກໄວ້ລຸ່ມພີ້ເດີ ບໍ່ກ້າຂັບຂຶ້ນໄປລົດຄືຊິຫຼາຍ”

“ກໍດີຄືກັນ ນັ່ງລົດຂຶ້ນໄປນຳກັນນີ້ລະປະຢັດນ້ຳມັນດີ” ເຈົ້າຕອບດວງພ້ອມຍິ້ມ.

ເມື່ອກິນເຂົ້າແລ້ວ ພວກເຮົາກໍໄດ້ເຄື່ອນຍ້າຍກັນໄປຕໍ່ ຕະຫຼອດທາງຂຶ້ນໄປເປັນພູຊັນ ຄົດໂຄ້ງໄປມາ ແຕ່ມີລົດແລ່ນສວນກັນວື້ນຫວັ່ນໆບໍ່ຂາດສາຍ ຂ້ອຍຕົກໃຈວາບເມື່ອເຫັນລົດຈອດລຽນກັນຊາບລາບຢູ່ແຄມທາງ ນຶກວ່າເກີດອຸບັດຕິເຫດ ແຕ່ພໍເຂົ້າໄປໃກ້ຈຶ່ງຮູ້ວ່າບໍ່ແມ່ນ ຜູ້ຄົນພາກັນຈອດລົດເພື່ອລົງຖ່າຍຮູບຊົມທິວທັດ, ຂ້ອຍກ້າວຂາລົງລົດດ້ວຍໃບໜ້າທີ່ຍິ້ມແຍ້ມ ເມື່ອແນມເຫັນແຕ່ນ້ຳສີຟ້າກວ້າງສຸດສາຍຕາ ມີເກາະດອນນ້ອຍໃຫຍ່ຢັ້ງຢາຍຢູ່ເປັນບ່ອນໆ.

“ນີ້ແຫຼະ ທີ່ເຂົາເອີ້ນວ່າທະເລລາວນ່າ ແລະເຫັນບໍ່ຈຸດຂາວໆຢູ່ກາງນ້ຳພຸ້ນ ນັ້ນແມ່ນຫໍຊົມວິວແລ້ວຈັກໜ້ອຍຊິພາໄປຊົມວິວຢູ່ຫັ້ນແຫຼະ” ເຈົ້າເວົ້າພ້ອມທັງຊີ້ມືບອກຈຸດນັ້ນ.

“ໄປ ຟ້າວລົງໄປເທາະຈັກໜ້ອຍຊິຄ່ຳແຫຼະ ບໍ່ຮູ້ວ່າຊິມີເຮືອຫວ່າງຢູ່ບໍ່ນິ!” ດວງເວົ້າແລ້ວກໍພາກັນເຄື່ອນລົດໄປຕໍ່.

“ໂອ້ຍ.. ຟ້າ! ຊິມີບ່ອນຈອດລົດຢູ່ເບາະນິ?” ຂ້ອຍອຸທານຂຶ້ນເມື່ອເຫັນລົດຈອດເຕັມຢູ່ກາງເດີ່ນ ຄາວໜຶ່ງກໍມີຄົນມາໂບກລົດໃຫ້ເຂົ້າໄປຈອດຢູ່ແຈໆດ້ານໜຶ່ງ.

“ຍັງມີເຮືອຫວ່າງຢູ່ເບາະ?” ເຈົ້າຖາມເມື່ອພະນັກງານຕ້ອນຮັບເຂົ້າມາຫາ.

“ໂດຍ ຍັງມີຢູ່” ພະນັກງານຕອບແລ້ວກໍພາຍ່າງລົງໄປຍັງເຮືອ.

ລຽບຕາມແຄມຝັ່ງມີຮ້ານອາຫານ ແລະເຮືອລຳນ້ອຍໃຫຍ່ຢູ່ຫຼາຍ ແຕ່ຮ້ານໃດກໍມີແຂກເຂົ້າເຕັມ ເຮືອທີ່ອອກໄປກາງນ້ຳກໍຫຼາຍທໍ່ໆກັນ ບັນຍາກາດຄຶກຄື້ນປານປາງບຸນ ເຫັນມີລົດຂອງບໍລິສັດທ່ອງທ່ຽວກໍຫຼາຍຄັນ ບໍ່ຈັກຄົນລາວຄົນຕ່າງຊາດກໍຫຼາຍທໍ່ໆກັນ ກໍແນວວ່າບັນຍາກາດດີປານນີ້ບໍ່ແປກດອກຊິມີແຂກຄົນມາທ່ຽວຫຼາຍ.

“ປົກກະຕິກໍມີຄົນມາທ່ຽວຫຼາຍແບບນີ້ຕະຫຼອດຫວາ?” ຂ້ອຍຖາມຂຶ້ນ.

“ບໍ່ດອກ ມື້ນີ້ເປັນມື້ພັກວັນແມ່ຍິງ ຫຼາຍຄອບຄົວກໍເລີຍມາທ່ຽວ” ພະນັກງານຕອບ



ແລ້ວບໍ່ດົນເຮືອກໍເຄື່ອນຍ້າຍອອກຈາກຝັ່ງ ມຸ່ງໜ້າໄປກາງທະເລໃຫຍ່ໂດຍມີສຽງເພັງເປີດຄ່ອຍໆກ່ອມໃຈໃຫ້ເພີດເພີນໄປຕະຫຼອດທາງ ແລ້ວໃນທີ່ສຸດກໍໄດ້ຂຶ້ນໄປຫໍຊົມວິວ ທິວທັດຊ່າງປະເສີດ ຂ້ອຍດູດດື່ມກິ່ນອາຍນ້ຳທັງທຳມະຊາດເຂົ້າໄວ້ປອດຢ່າງມະຫາສານ ຖ້າຫໍ່ເນືອນຳໄດ້ຂ້ອຍຄົງໄດ້ຫຼາຍຖົງສົມຄວນ, ຍິ່ງຂຶ້ນໄປຊັ້ນສູງສຸດທິວທັດກໍຍິ່ງງາມ ຕະຫຼອດສາຍຕາແນມເຫັນພຽງ ທ້ອງຟ້າກັບໜ້ານ້ຳເປັນສີດຽວກັນ ເກາະດອນນ້ອຍໃຫຍ່ທີ່ມີຕົ້ນໄມ້ສີຂຽວຂຶ້ນຊອນລອນເປັນຕາສະອອນໃຈ ສາຍລົມກໍພັດຢູ່ຕະຫຼອດເວລາ.

“ເປັນຈັ່ງໃດ ມັກຢູ່ບໍ່ບັນຍາກາດແບບນີ້? ເຈົ້າຖາມເມື່ອຍ່າງມາຫາຂ້ອຍ.

“ມັກຫຼາຍ ບໍ່ຄືຢູ່ໃນເມືອງສູດດົມເອົາແຕ່ຄວັນລົດເຂົ້າໄປທຸກມື້ ໄດ້ມາສຳຜັດອາກາດແບບນີ້ແລ້ວພໍຢາກຫໍ່ເອົາເນືອນຳພຸ້ນແຫຼະ.

“ປານນັ້ນພຸ້ນບໍ່? ຂ້ອຍກໍເຮັດວຽກຢູ່ໃນເມືອງຄືກັນ ດົນໆຈັ່ງໄດ້ກັບມາບ້ານ”

“ເຮັດວຽກຢູ່ຫ້ອງການດຽວກັບອ້າຍພັດຫັ້ນບໍ່?”

“ບໍ່ດອກ ຄົນລະຫ້ອງການ ຂ້ອຍກັບພັດເປັນໝູ່ກັນມາແຕ່ສະໄໝຮຽນພຸ້ນແລ້ວ”

“ອະແຮ່ມ! ສອງຄົນນັ້ນນ່າລົມກັນຮອດໃສແລ້ວ ລົງມາເດີເຮືອຊິກັບເຂົ້າຝັ່ງລະໃດ໋” ດວງເອີ້ນບອກມາແຕ່ໄກ ແລ້ວພວກເຮົາກໍຢຸດການສົນທະນາໄວ້ພຽງເທົ່ານັ້ນ ກ່ອນຈະລົງໄປຂຶ້ນເຮືອກັບເຂົ້າຝັ່ງ.

ພຽງແຕ່ໄດ້ໄປເທື່ອດຽວບໍ່ຢາກເຊື່ອເລີຍວ່າ ຄວາມງາມຂອງທຳມະຊາດໄດ້ເຮັດໃຫ້ຂ້ອຍຫຼົງຮັກສະຖານທີ່ແຫ່ງນັ້ນໝົດໃຈ ແລະກໍຄືຊິແມ່ນຟ້າຂີດໄວ້ອີກແລ້ວທີ່ໃຫ້ຫ້ອງການເຈົ້າກັບບ່ອນຂ້ອຍຢູ່ໃກ້ໆກັນ ດ້ວຍເຫດນີ້ເຮົາສອງຄົນຈຶ່ງໄດ້ພໍ້ກັນຢູ່ເລື້ອຍໆ ແລະການພໍ້ກັນເລື້ອຍໆນີ້ກໍຄືຈຸດເລີ່ມຕົ້ນຂອງຮັກເຮົາ.

…………

“ນັດ ຕອນແລງອ້າຍຊິໄດ້ໄປວຽກຢູ່ຕ່າງແຂວງສອງອາທິດເດີ” ເຈົ້າບອກຂ້ອຍຕອນທີ່ເຮົາໄປກິນເຂົ້ານຳກັນ.

“ໂດຍ ຈັ່ງໃດກໍຮັກສາໂຕດີໆເດີ ໄປຮອດແລ້ວໂທຫາແດ່” ຂ້ອຍເອີ່ຍປາກບອກດ້ວຍຄວາມເປັນຫ່ວງ.

ເກືອບທ່ຽງຄືນແລ້ວທີ່ຂ້ອຍລໍຖ້າໂທລະສັບຈາກເຈົ້າໂທມາ ແຕ່ກໍຍັງມິດ



ດ້ວຍຄວາມເປັນຫ່ວງຂ້ອຍບໍ່ລໍຊ້າກົດເບີໂທຫາເຈົ້າທັນທີແຕ່..ຟ້າເອີ່ຍ..!ຂ້ອຍເກືອບວາງສາຍບໍ່ທັນເມື່ອເປັນສຽງແມ່ຍິງຮັບສາຍແລ້ວບອກຂ້ອຍວ່າ: “ຂໍອະໄພມູນຄ່າໂທຂອງທ່ານບໍ່ພຽງພໍກະລຸນາຕື່ມເງິນກ່ອນ…” “ໂອ່ຍ..ນໍ້! ເງິນໝົດແຕ່ຍາມໃດ“ ຂ້ອຍກວດເບິ່ງຍອດເງິນເຫຼືອຢູ່ ໑໘໐ກີບ, ເມື່ອບໍ່ມີເງິນໂທຂ້ອຍກໍສົ່ງຂໍ້ຄວາມໄປເອົາວ່າ: “ທີ່ຮັກ ເຫັນຂໍ້ຄວາມນີ້ແລ້ວໂທກັບຫາແດ່“ ຂໍ້ຄວາມຖືກກົດສົ່ງໄປຍັງປາຍທາງຮຽບຮ້ອຍ ແຕ່ບໍ່ເຖິງນາທີສຽງໂທລະສັບກໍດັງຂຶ້ນ ມີຮູບຄູ່ເຮົາພ້ອມເບີທີ່ບັນທຶກຊື່ວ່າ: “ສຸດທີ່ຮັກ” ໂຊຂຶ້ນຢູ່ໜ້າຈໍ ຂ້ອຍບໍ່ລໍຊ້າກົດຮັບສາຍທັນທີ ແຕ່…

ຂ້ອຍເກືອບຊ໋ອກລົງກັບໜ້ອງ ເມື່ອໄດ້ຍິນສຽງເວົ້າແຈດໆຈາກປາຍສາຍວ່າ:“ອີໜ້າດ້ານ..!ມຶງບໍ່ມີຢາງອາຍເລີຍເນາະ ມຶງບໍ່ມີປັນຍາຫາຜົວເອງຫວະ ຈຶ່ງມາລັກຢູ່ລັກກິນ ມາຫຍຸ້ງວຸ່ນວາຍກັບຜົວກູ” ຂ້ອຍໄດ້ຍິນພຽງເທົ່ານັ້ນ ຫູມັນກໍໜວກໄປແບບອັດຕະໂນມັດ ມີພຽງຄຳວ່າຜົວກູດັງກ້ອງກັງວານຢູ່ ນ້ຳຕາໄຫຼລົງຍາບໆປານນ້ຳປ່າໄຫຼຫຼາກ, ຕີນມືແຂນຂາອ່ອນປວກປຽກປານຄົນເປັນລ່ອຍຄືດັ່ງມີມີດນັບຮ້ອຍພັນດວງແທງມາໃສ່ໃຈ ສາຍຖືກຕັດໄປຕອນໃດບໍ່ຮູ້ ມີພຽງນ້ຳຕາທີ່ເຄື່ອນໄຫວໄດ້ນະຕອນນັ້ນ.

ໃນຂະນະທີ່ຍັງນອນໄຫ້ສະອຶກສະອື້ນຢູ່ນັ້ນ ສຽງເຕືອນຂໍ້ຄວາມຈາກໂທລະສັບກໍດັງຂຶ້ນ ຂ້ອຍຄ່ອຍໆຈັບຂຶ້ນມາເບິ່ງຊ້າໆ ເຫັນຮູບຄູ່ບ່າວສາວໂດຍມີເຈົ້າເປັນເຈົ້າບ່າວນັ່ງເຂົ້າພາຂວັນຄຽງຂ້າງສາວງາມທີ່ເປັນເຈົ້າສາວ ຍັງບໍ່ໝົດຍັງມີຂໍ້ຄວາມຂຽນແນບມາອີກວ່າ “ເຊົາກັບຜົວກູສາຖ້າບໍ່ຢາກເດືອດຮ້ອນ” ນະຕອນນັ້ນຂ້ອຍສັບສົນໄປໝົດ ມັນເກີດຫຍັງຂຶ້ນ? ເປັນແບບນີ້ໄປໄດ້ຈັ່ງໃດ? ຍິງຄົນນັ້ນແມ່ນໃຜ? ເປັນຫຍັງກັບອ້າຍລ້ວນກັນແທ້? ລາວມີເມຍແລ້ວແທ້ ຫຼືບໍ່? ແລະອີກຫຼາຍຮ້ອຍຄຳຖາມທີ່ສຸມມາໃສ່. ບໍ່ເຄີຍຄິດ ບໍ່ຄາດຝັນວ່າຈະມາພໍ້ກັບເລື່ອງແບບນີ້ເຈັບຈົນບໍ່ສາມາດອະທິບາຍເປັນຄຳເວົ້າອອກມາໄດ້ ມີພຽງນ້ຳຕາທີ່ພະຍາຍາມອະທິບາຍຄວາມຮູ້ສຶກນັ້ນຢູ່.

ນ້ຳສຽງ ແລະຮູບພາບນັ້ນຍັງນຳຫຼອກຫຼອນຂ້ອຍຕະຫຼອດເວລາ ບໍ່ວ່າກາງເວັນ ຫຼືຄືນ ຄວາມຮູ້ສຶກມັນອອກຮ້ອນຮົນ ດັ່ງມີໄຟກຳລັງເຜົາໄໝ້ຈິດໃຈຂ້ອຍຢູ່



ເຮົາຈະຍອມໃຊ້ຄຳວ່າ ”ຊູ້” ແບບນີ້ຕະຫຼອດໄປບໍ່? ຄຳວ່າສັກສີຂ້ອຍເອົາໄປຖິ້ມໃສ?” ຄຳຖາມນີ້ດັງອອກມາຈາກໃຕ້ຈິດສຳນຶກ ຈົນໃນທີ່ສຸດຂ້ອຍກໍທົນຕໍ່ຄວາມຮູ້ສຶກນັ້ນບໍ່ໄດ້ ຈຶ່ງຕັດສິນໃຈຍ້າຍໄປເຮັດວຽກຢູ່ຕ່າງແຂວງໂດຍດ່ວນກ່ອນທີ່ເຈົ້າຈະກັບມາ ໂດຍທີ່ບໍ່ບອກລາເຈົ້າຈັກຄຳ ເພາະຂ້ອຍຄິດວ່າເຈົ້າຄົງຮູ້ເຫດຜົນທີ່ຂ້ອຍຈາກໄປໃນເທື່ອນີ້ດີ ຂ້ອຍຫວັງພຽງວ່າເວລາ ແລະຄວາມຫ່າງໄກຂອງເຮົາຈະຊ່ອຍປົວແຜໃຈໃຫ້ຂ້ອຍໄດ້ແລະມື້ໜຶ່ງຂ້ອຍຄົງຈະນຶກເຖິງເລື່ອງລາວຂອງເຮົາ ນຶກເຫັນໃບໜ້າຂອງເຈົ້າໄດ້ໂດຍບໍ່ຮູ້ສຶກເຈັບ ແລະມີນ້ຳຕາ.

ພາບເລື່ອງລາວເກົ່າໆທີ່ຂ້ອຍນັ່ງຄຶດຢູ່ນັ້ນຕ້ອງຢຸດລົງທັນທີ ເມື່ອຊາຍຜູ້ທີ່ຢູ່ໃນຄວາມຊົງຈຳມາຕະຫຼອດເວລາສາມປີ ໄດ້ປາກົດຢູ່ຕໍ່ໜ້າຂ້ອຍອີກເທື່ອໜຶ່ງ ແລະການທີ່ໄດ້ພໍ້ກັນອີກໃນມື້ນີ້ ເຮັດໃຫ້ຂ້ອຍໄດ້ຮູ້ຄວາມຈິງບາງຢ່າງ ຄວາມຈິງທີ່ເຮັດໃຫ້ນ້ຳຕາຂ້ອຍຕ້ອງໄຫຼຍ່າວອອກມາອີກ ຄວາມຈິງທີ່ຂ້ອຍບໍ່ເຄີຍຮູ້ ບໍ່ຍອມຮັບຟັງຄວາມຈິງທີ່ເຈົ້າເອງກໍເຈັບຊ້ຳທຸກລະທົມເກືອບຕາຍ ກິນບໍ່ໄດ້ນອນບໍ່ຫຼັບກັບການຈາກໄປຂອງຂ້ອຍໃນເທື່ອນັ້ນ, ເຈົ້າໄດ້ພະຍາຍາມຕິດຕໍ່ ແລະນຳຫາຂ້ອຍມາໂດຍຕະຫຼອດ ເຈົ້າລໍຖ້າການກັບມາຂອງຂ້ອຍຢູ່ບ່ອນນີ້ທຸກໆມື້ມາພ້ອມຈິດໃຈທີ່ເຈັບຊ້ຳ ມີຄວາມຫວັງພຽງໜ້ອຍວ່າມື້ໜຶ່ງຈະໄດ້ພໍ້ຂ້ອຍອີກ.

ໂອ່ຍ..! ກໍໃຜຈະຄຶດວ່າຮູບພາບໃນມື້ນັ້ນເປັນພຽງພາບຖ່າຍຕອນທີ່ເຈົ້າຂຶ້ນສະແດງງານສິລະປະແຕ່ຄາວຍັງຮຽນພຸ້ນ ແລະໝູ່ເຈົ້າກໍສົ່ງມາລອງໃຈຂ້ອຍຊື່ໆ ທຸກຢ່າງທີ່ເກີດຂຶ້ນເປັນເພາະຂ້ອຍຂາດສະຕິ ໜ້າມືດຕາມົວຫຼົງເຊື່ອພຽງແຕ່ຮູບພາບ ແລະນ້ຳສຽງໃນໂທລະສັບຫຼາຍກວ່າຄົນຮັກທີ່ຢູ່ຄຽງຂ້າງກັນມາຕະຫຼອດຕ້ອງຂອບໃຈຄວາມຊື່ສັດໃນຄວາມຮັກທີ່ເຈົ້າມີໃຫ້ຂ້ອຍແບບສະເໝີຕົ້ນສະເໝີປາຍບໍ່ເຄີຍປ່ຽນແປງ ຂອບໃຈສາຍໃຍເສັ້ນນັ້ນທີ່ຍັງບໍ່ຂາດ ແລະດຶງເຮົາໃຫ້ມາພໍ້ກັນອີກໃນມື້ນີ້.



**ຖ້າປຽບ "ຄວາມຮັກ" ດັ່ງນ້ຳເຢັນໃສຄອຍຫົດລົງໃສ່ດອກໄມ້ທີ່ຫ່ຽວແຫ້ງ ໃຫ້ເກີດມີຊີວິດຊີວາຂຶ້ນ ແລ້ວ "ຄວາມສະເໜຫາ" ປຽບດັ່ງນ້ຳຮ້ອນທີ່ຫົດລົງໃສ່ດອກໄມ້ ແມ່ນຈະງາມຢູ່ພຽງໃດ ສຸດທ້າຍມັນກໍຕາຍຢູ່ດີ "ແລ້ວຄວາມຮູ້ສຶກທີ່ເຈົ້າມີຕໍ່ຂ້ອຍນັ້ນ ເປັນດັ່ງນ້ຳເຢັນ ຫຼືນ້ຳຮ້ອນກັນແທ້!!"**

**໗ ມິຖຸນາ ໒໐໑໗**



# ປິດສະໜາ...ຮັກ

ທ່າມກາງອາກາດອັນຮ້ອນອົບເອົ້າ ແຕ່ຄຶກຄື້ນດ້ວຍສຽງເພັງ ແລະສຽງຜູ້ຄົນທີ່ສົນທະນາກັນຢ່າງມ່ວນຊື່ນໃນງານກິນດອງຂອງທິບ (ໝູ່ຮັກໝູ່ແພງຂ້ອຍເອງ) ພາຍໃນງານມີຜູ້ຄົນມາກໜ້າຫຼາຍຕາ ແຕ່ງໂຕຕາມແບບລາວໆໃສ່ສິ້ນໄໝເສື້ອໄໝ ເອ້ດ້ວຍເຄື່ອງປະດັບເສີມໃສ່ຕື່ມແຮ່ງເປັນຕາສະອອນ ໂດຍສະເພາະເຈົ້າສາວທີ່ໃສ່ສິ້ນໄໝສີຟ້າ ຜືນຂິດລາຍດອກໄມ້ສະລັບດ້ວຍລາຍຈົກດອກປູມນ້ອຍ ຕີນສິ້ນຈົກລາຍນາກຫາງຂອດປະດັບອ້ອມດ້ວຍດອກຫວາຍເປັນຊຸດກັບເສື້ອໄໝໂທນສີດຽວກັນ ຂິດລາຍດອກໄມ້ນ້ອຍໆເຫຼື້ອມຍິບຍັບໆບວກໃສ່ຜ້າບ່ຽງຈົກປະສົມຂິດລາຍດອກໄມ້ໝົດຜືນ ເສີມໃສ່ຜົມທີ່ເກົ້າຂຶ້ນສູງປັກປິ່ນສີທອງໃສ່ຈອມເຫັນແລ້ວສະອອນຕາ "ແລ້ວຊິມີມື້ທີ່ຕົນໄດ້ແຕ່ງແບບນີ້ຢູ່ບໍ່ນໍ້!" ເຈົ້າບ່າວກໍບໍ່ເປັນຮອງນຸ່ງຜ້າກະຕ່ຽວສີແດງບໍ່ມີລາຍ ແຕ່ແຂບຜ້າສີແດງຂິດລາຍດອກເອື້ອນ້ອຍດ້ວຍໄໝຄຳ ຜືນເສື້ອໄໝສີຂາວແຂນຍາວບໍ່ມີລາຍ ເປັນຊຸດກັບຜ້າບ່ຽງສີແດງ ຂິດລາຍດອກນ້ອຍໆ ເຫັນແລ້ວກໍຄືວ່າແປກຕາດີ ແຕ່ກໍສະງ່າໂດດເດັ່ນ.

ໃນຂະນະທີ່ຂ້ອຍກຳລັງ ເລັງສາຍຕາກວາດແນມໄປທົ່ວບໍລິເວນງານ ທັນໃດນັ້ນ ຂ້ອຍກໍຮູ້ສຶກວ່າໃຈເຕັ້ນແຮງຜິດປົກກະຕິ ເມື່ອສາຍຕາເຫຼືອດໄປເຫັນ



ຊາຍຄົນໜຶ່ງ ທີ່ກຳລັງຢືນຖ່າຍຮູບໃຫ້ຄູ່ບ່າວສາວ "ແມ່ນໃຜຫວາຄືບໍ່ເຄີຍເຫັນ ຫຼືຈະເປັນໝູ່ເຈົ້າບ່າວບໍ່?" ຂ້ອຍຕັ້ງຄຳຖາມຂຶ້ນໃນໃຈ ແລ້ວຂ້ອຍກໍໄດ້ຄຳຕອບໃຫ້ກັບຄຳຖາມເມື່ອ:

"ດາ ນີ້ອ້າຍບ່າວ ສອນ ມາແຕ່ເມືອງເໜືອພີ່ນ້ອງທາງຝ່າຍຊາຍ ແລະນີ້ສາວດານ້ອງສາວຢູ່ບ້ານນີ້ແຫຼະ ຍັງໂສດຄືກັນ ຮູ້ຈັກກັນໄວ້ ມີຫຍັງກໍລົມກັນໄປກ່ອນເພື່ອໄດ້ເປັນຄູ່ຕໍ່ໄປ" ເຮົາໄດ້ຮູ້ຈັກກັນກໍຍ້ອນອ້າຍສີແນະນຳໃຫ້ຕອນທີ່ເຈົ້າຍ່າງມາໃກ້ໂຕະທີ່ຂ້ອຍນັ່ງຢູ່ ແລະເຈົ້າຍັງໄດ້ມານັ່ງຮ່ວມໂຕະອາຫານດຽວກັບຂ້ອຍນັ່ງຂ້າງໆຂ້ອຍອີກ ເຮົາກໍມີໂອກາດໄດ້ລົມໄດ້ເວົ້າພໍຮູ້ຈັກກັນແດ່ເລັກໜ້ອຍ.

ບໍ່ວ່າຈະງານດອງ ງານກິນລ້ຽງສ້າງສັນຕ່າງໆ ຕາມປະເພນີລາວແລ້ວແມ່ນຕ້ອງມີລຳວົງສາມັກຄີເພື່ອເພີ່ມຄວາມມ່ວນຊື່ນແລະສານຕໍ່ສາຍສຳພັນກັນ. ເບິ່ງແຕ່ລະຄົນຟ້ອນກໍມີທ່າປະຈຳໂຕ ບາງຄົນກໍຟ້ອນຮຽບຮ້ອຍ ສາວບາງຄົນໃສ່ເກີບສົ້ນສູງຍ່າງກັບພື້ນຂີ້ຊາຍບວກກັບອາການເມົາແດ່ ຟ້ອນໄປກໍໂຫງດຊ້າຍເຫງດຂວາບາງຄົນພິກສົ້ນເກີບເກືອບລົ້ມກໍມີຜູ້ຊາຍບາງຄົນກໍບໍ່ແມ່ນງ່າຍຕາມດົນນ້ຳເຫຼົ້າເຂົ້າປາກວຽນຫາແຕ່ສາວນ້ອຍ ໄຄແຕ່ມີເມຍມານຳເລີຍໂລເລໄດ້ພຽງສາຍຕາ. ແລ້ວຢູ່ໆໃຈຂ້ອຍກໍເຕັ້ນບໍ່ເປັນຈັ່ງຫວະ ເມື່ອເຈົ້າເອີ່ຍຂຶ້ນວ່າ:

"ເພັງນີ້ມ່ວນດີນໍ້ ໃຫ້ກຽດອອກໄປຟ້ອນນຳຂ້ອຍໄດ້ບໍ່?"ເຈົ້າເອີ່ຍປາກຊວນຂ້ອຍອອກໄປຟ້ອນລຳວົງນຳ ຄວາມຈິງກໍຄຶດອາຍຢູ່ຍ້ອນຕົນຟ້ອນບໍ່ເປັນ ແຕ່ຂ້ອຍກໍບໍ່ປະຕິເສດຄຳຊວນ ແລ້ວເຈົ້າກໍລຸກຂຶ້ນນົບຂໍຕາມມາລະຍາດເພື່ອອອກໄປຟ້ອນນຳກັນ ຂ້ອຍກໍຍ່າງນຳຫຼັງເຈົ້າໄປຕິດໆແບບອາຍໆ ໃນຂະນະທີ່ຟ້ອນຂ້ອຍບໍ່ກ້າແມ່ນແຕ່ສູ້ສາຍຕາເຈົ້າ ໄດ້ແຕ່ແນມແລ້ວຍິ້ມພະຍາຍາມຟ້ອນໃຫ້ຖືກຈັງຫວະນຳເຂົາ ເຖິງແມ່ນຊິຟ້ອນບໍ່ເປັນແຕ່ກໍບໍ່ຢາກໃຫ້ເພັງຈົບລົງໄວ ເພາະເບິ່ງລີລາການຟ້ອນຂອງເຈົ້າແລ້ວສະງ່າດີ ຜູ້ຍິງຄືຂ້ອຍຍັງອາຍ. ແຕ່ພໍເພັງທີໜຶ່ງຈົບກໍຕໍ່ໃສ່ເພັງທີສອງເປັນຈັງຫວະເຕັ້ນມ້າຍອງ ຊ້ຳຮ້າຍຂ້ອຍແຮ່ງເຕັ້ນບໍ່ເປັນຈຳຕ້ອງໄດ້ນົບເພື່ອຂໍຈົບການຟ້ອນກ່ອນຈະກັບເຂົ້າບ່ອນນັ່ງຕາມມາລະຍາດ.

ແນ່ນອນງານລ້ຽງຕ້ອງມີການເລີກລາ ເມື່ອຄ້ອຍຄ່ຳລົງແລງແສງຕາເວັນ



ເລີ່ມລັບລົງເລື້ອຍໆໃກ້ເຖິງເວລາທີ່ເຮົາຈະໄດ້ຈາກກັນແລ້ວ"ສາທຸແມ່ໃຫ້ເຈົ້າຂໍເບີໂທຂ້ອຍໄວ້ແດ່ທ້ອນ" ຂ້ອຍພາວະນາຢູ່ໃນໃຈ ແລ້ວໃນທີ່ສຸດຟ້າກໍເປັນໃຈຂ້ອຍໄດ້ຝາກເບີໂທໄວ້ກັບເຈົ້າ ກ່ອນຈະອອກຈາກງານໄປ.

ຫຼັງຈາກງານມື້ນັ້ນເຮົາກໍໄດ້ຕິດຕໍ່ກັນຢູ່ເລື້ອຍໆ ເຖິງແມ່ນເຮົາຈະຢູ່ໄກກັນຕັ້ງຫຼາຍຮ້ອຍກິໂລແມັດ ໄດ້ລົມກັນພຽງແຕ່ທາງໂທລະສັບ ແຕ່ກໍເຮັດໃຫ້ຂ້ອຍຍິ້ມໄດ້ທຸກເທື່ອທີ່ໄດ້ລົມກັບເຈົ້າ ແມ່ນແຕ່ເວລາທີ່ຢູ່ຄົນດຽວຂ້ອຍກໍນັ່ງຍິ້ມໃສ່ໂທລະສັບປານຄົນເປັນບ້າ ຍາມແລງຊິນອນກໍຄຶດເຫັນແຕ່ໃບໜ້າຮອຍຍິ້ມທີ່ສື່ເຖິງຄວາມອົບອຸ່ນແວວຕາທີ່ເປັນມິດມີສະເໜຄຳເວົ້າຄຳວ່າທີ່ເຮັດໃຫ້ຂ້ອຍຢາກໄດ້ຍິນທຸກໆມື້ "ນີ້ບໍ່ທີ່ເຂົາເອີ້ນວ່າຮັກ" ຍິ່ງເວລາຜ່ານໄປດົນຄວາມຄຶດຮອດຄຶດເຖິງກໍຍິ່ງເພີ່ມຂຶ້ນເລື້ອຍໆ ຈາກທີ່ໄດ້ລົມກັນພຽງຢູ່ຂ້າງໆຫູກໍເກີດຢາກພໍ້ໜ້າ ຢາກນັ່ງລົມຢູ່ຂ້າງໆແທນ "ແລ້ວເຈົ້າຊິຮູ້ສຶກແບບດຽວກັບຂ້ອຍບໍ່ນໍ້"ແລ້ວໂອກາດນັ້ນກໍມາຮອດ ເມື່ອຂ້ອຍໄດ້ໄປວຽກຢູ່ຕ່າງແຂວງໃກ້ກັບບ້ານເຈົ້າ.

ເມື່ອໄປເຖິງຈຸດໝາຍ ຂ້ອຍກໍຟ້າວເຮັດວຽກໃຫ້ແລ້ວໄວໆ ເພື່ອຊິໄດ້ມີເວລາໄປຢາມເຈົ້າດົນແດ່ ແຕ່ເຈົ້າກໍຄາວຽກຫັ້ນວຽກນີ້ຢູ່ ໄຄແຕ່ຍັງໄດ້ພໍ້ກັນຢູ່ໜ້ອຍໜຶ່ງ.

"ຊິພາຂ້ອຍໄປຫຼິ້ນໃສນໍ້?" ຂ້ອຍຖາມເມື່ອເຈົ້າມາຮັບຢູ່ບ່ອນພັກ.

"ບອກກ່ອນກໍບໍ່ຕື່ນເຕັ້ນແຫຼະ ໄປຮອດແລ້ວຊິຮູ້ເອງ" ເຈົ້າແນມເບິ່ງໜ້າຂ້ອຍແລ້ວຍິ້ມກ່ອນຈະຂັບລົດອອກໄປ.

ແລ້ວລົດກໍມາຈອດນະສະຖານທີ່ແຫ່ງໜຶ່ງ ທີ່ອ້ອມຮອບດ້ວຍພູຜາປ່າໄມ້ ແລະແສງແດດທີ່ກຳລັງແຜ່ກະຈາຍຄວາມຮ້ອນຢູ່, ແຕ່ກໍຊວນໃຫ້ຂົນຄີງລຸກຍ້ອນມີລົມພັດຕະຫຼອດເວລາ ເຈົ້າປົດໝວກທີ່ໃສ່ຢູ່ນັ້ນມາໃສ່ໃຫ້ຂ້ອຍແທນ ທັງຍື່ນຕຸກນ້ຳເຢັນໃຫ້ພ້ອມກັບຄຳເວົ້າສັ້ນໆທີ່ວ່າ "ອາກາດຮ້ອນ" ກ່ອນຈະຍ່າງນຳໜ້າຂ້ອຍໄປ, ການກະທຳ ແລະຄຳເວົ້າພຽງສັ້ນໆ ແຕ່ກໍເຮັດໃຫ້ຂ້ອຍຍິ້ມຄ້າງຢູ່ຄາວໜຶ່ງກ່ອນຈະຍ່າງນຳເຈົ້າໄປ.

ພໍແຕ່ຂຶ້ນໄປຮອດເນີນພູ ພາບທີ່ແນມເຫັນເຮັດໃຫ້ລືມຄວາມຮ້ອນໄປ

ເລີຍ ທົ່ງຫຍ້າທີ່ກວ້າງໃຫຍ່ສຸດສາຍຕາ ມີສາຍພູສະລັບສັບຊ້ອນກັນຢູ່ປາຍຂອບຟ້າສີຄາມ ປະສານກັບກ້ອນເຜືອສີຂາວຢັ່ງຢາຍເປັນຈຸດໆຢູ່ທົ່ວເວຫາຄືຈັ່ງວ່າມີຄົນຈົງໃຈຈັບມັນໄປວາງໄວ້ຢູ່ນຳກັນ ສົມທົບກັບທົ່ງກວ້າງທີ່ຖືກປະດັບດ້ວຍໄຫຫີນນ້ອຍໃຫຍ່ນັບຫຼາຍຮ້ອຍໜ່ວຍ ທີ່ຢັ່ງຢາຍເດຍລະດາດກັນຢູ່ທົ່ວສາລະທິດ ບາງໄຫກໍແຕກບິ່ນໄປແດ່ຍ້ອນຜ່ານການເວລາ ແຕ່ບາງໄຫກໍຍັງຄົງສະພາບໄວ້ໄດ້ຢູ່ ມີຫຼາຍໄຫທີ່ທັງໃຫຍ່ທັງສູງກາຍຫົວຂຶ້ນໄປ ຄວາມໃຫຍ່ກໍໃຫຍ່ຈົນສາມາດເຂົ້າໄປນັ່ງຢູ່ໃນໄດ້ສະບາຍເລີຍລະ ແລະບາງໄຫກໍມີດອກໄມ້ດອກຫຍ້າປົ່ງຂຶ້ນຜ່ານປາກໄຫເພີ່ມຄວາມງາມຕື່ມ ເບິ່ງແນວໜຶ່ງຄືກັບໄຫປູກດອກໄມ້ຫັ້ນແລ້ວ ຢູ່ກາງທົ່ງອັນກວ້າງຍັງມີຕົ້ນໄມ້ໃບຫຍ້າທີ່ໄຫວໂອນເອນໄປຕາມສາຍລົມປະສານສຽງດົນຕີທຳມະຊາດຂອງນົກທີ່ຮ້ອງຈໍແຈຊວນໃຫ້ຈິດໃຈເພີດເພີນຫຼົງໄຫຼພໍປານຖືກມົນສະກົດຕ້ອງຕາດຶງໃຈ ບໍ່ຢາກໜີໄກຈາກແດນງາມນາມວິລະຊົນແຫ່ງນີ້ໄປເລີຍ ຄົງເປັນເພາະຫຼົງໃນຄວາມງາມຂອງທຳມະຊາດ ຫຼືເພາະຫຼົງສະເໜຂອງຄົນທີ່ພາໄປກໍຍັງບໍ່ຮູ້ ແຕ່ເທົ່າທີ່ສັງເກດກໍຄົງບໍ່ມີແຕ່ຂ້ອຍດອກທີ່ຫຼົງມົນສະເໜຂອງທຳມະຊາດແຫ່ງນີ້ເພາະຊາວຕ່າງຊາດຮວມທັງຄົນລາວກໍຫຼາຍທີ່ໄປທ່ຽວຊົມ.

"ເຄີຍໄດ້ມາຢູ່ບໍ່ ເຫັນແລ້ວເປັນຈັ່ງໃດ?" ເຈົ້າເອີ່ຍຖາມເມື່ອຍ່າງເຂົ້າໄປເຊົາຮົ່ມຢູ່ກ້ອງຕົ້ນໄມ້.

"ບໍ່ເຄີຍມາ ເທື່ອທຳອິດແຫຼະນິ ເຄີຍໄດ້ເຫັນແຕ່ໃນຮູບ ແລະອ່ານປະຫວັດໃນປຶ້ມເທົ່ານັ້ນ ແຕ່ໄດ້ມາເຫັນໂຕຈິງແລ້ວກໍບໍ່ຜິດຫວັງ ທຳມະຊາດຢູ່ນີ້ງາມຫຼາຍ" ຂ້ອຍຕອບພ້ອມຮອຍຍິ້ມທັງສາຍຕາກໍແນມອອກໄປກາງທົ່ງ.

"ແລ້ວບໍ່ຄຶດຢາກມາຢູ່ພີ້ແດ່ເບາະ? ເຈົ້າຖາມສຽງຄ່ອຍໆ.

"ຖ້າມາແລ້ວ ຊິໃຫ້ໄປຢູ່ໃສ ຢູ່ກັບໃຜລະ?" ຂ້ອຍຖາມຄືນພ້ອມແນມເບິ່ງໜ້າເຈົ້າ.

"ກໍມີຫັ້ນແຫຼະຄົນຢາກໃຫ້ມາຢູ່ນຳນ່າ... ອືມ! ຂ້ອຍວ່າເຮົາກັບກ່ອນດີບໍ່ ນີ້ກໍໃກ້ຈະຄ່ຳລະ ມື້ແລງຊິຮັບໄປກິນເຂົ້າ ແລ້ວຊິພາເລາະຊົມຊຽງຂວາງໃນຍາມຄ່ຳວ່າຊິງາມສູ້ວຽງຈັນໄດ້ບໍ່ ເພື່ອຄົນຊິປ່ຽນໃຈຢາກມາຢູ່ພີ້!" ເຈົ້າເວົ້າສຽງອາຍໆແລ້ວ



ກໍຍ່າງນຳໄປຂຶ້ນລົດ.

ໃນຍາມຄ່ຳຄືນບັນຍາກາດມິດງຽບ ຮ້ານອາຫານກິນດື່ມກໍບໍ່ຄຶກຄື້ນຄືຢູ່ວຽງຈັນ ຈະມີກໍແຕ່ແສງດາວທີ່ສ່ອງລົງມາສູ່ດິນແດນວິມານແຫ່ງຄວາມໜາວນີ້ ເຖິງແມ່ນຂ້ອຍບໍ່ມັກອາກາດໜາວປານໃດ ແຕ່ກໍມີຄວາມສຸກທີ່ໄດ້ຢືນຂົນຄົງລຸກຢູ່ກາງສາຍລົມຊົມເມືອງໃນຍາມລາຕີທີ່ປົກຄຸມດ້ວຍອາກາດເຢັນໆ.

"ອາກາດຢູ່ຊຽງຂວາງໜາວກວ່າຢູ່ວຽງຈັນ" ເຈົ້າເວົ້າພ້ອມທັງເອົາຜ້າມາຕູ້ມໃຫ້.

"ໂອ່ຍ! ຈັ່ງແມ່ນຂ້ອຍຢາກຢຸດເວລາໄວ້ນະນາທີນີ້ແທ້ເດ"ນາທີທີ່ມີພຽງເຮົາສອງຄົນທີ່ຢືນເບິ່ງທ້ອງຟ້າເບິ່ງບັນດາໝູ່ດາວທີ່ປະກາຍແສງຍິບຍັບປະສານແສງໄຟທີ່ສ່ອງສະຫວ່າງຢູ່ເທິງໜ້າດິນ ເຈົ້າເຮັດໃຫ້ຂ້ອຍຍິ້ມຄ້າງໃຈເຕັ້ນບໍ່ເປັນຈັງຫວະອີກແລ້ວຂ້ອຍໄດ້ແຕ່ຍິ້ມພ້ອມກັບອາການທີ່ອາຍສຸດຂີດການກະທຳຂອງເຈົ້າເຮັດໃຫ້ຂ້ອຍລັກມີຄວາມຫວັງຢູ່ເລິກໆວ່າໃຈເຮົາອາດຈະຄຶດກົງກັນ ເຖິງແມ່ນເຈົ້າຈະບໍ່ເຄີຍເອີ່ຍຄຳນັ້ນອອກມາກໍຕາມ.

ເວລາຜ່ານໄປສອງມື້ ເຖິງກຳນົດທີ່ຂ້ອຍຕ້ອງໄດ້ກັບແລ້ວ ເວລາແຫ່ງຄວາມສຸກມັກຜ່ານໄປໄວສະເໝີ ເຖິງແມ່ນວ່າມັນຈະເປັນຊ່ວງເວລາສັ້ນໆແຕ່ກໍອັ່ງລົ້ນດ້ວຍຄວາມສຸກທີ່ຫາໃສບໍ່ໄດ້ ແລະຂ້ອຍບໍ່ອາດຈະລືມເຫດການທັງໝົດທີ່ເກີດຂຶ້ນໃນເທື່ອນີ້ລົງໄດ້ຢ່າງແນ່ນອນ ແລະກ່ອນຈະກັບຂ້ອຍກໍໄດ້ຝາກຈົດໝາຍສະບັບນີ້ໄວ້ໃນລົດເຈົ້າຫວັງວ່າເຈົ້າຄົງຈະໄດ້ອ່ານມັນຈັກມື້ ແລະນີ້ກໍເປັນຄຳຖາມທີ່ລໍພຽງຄຳຕອບຈາກເຈົ້າເທົ່ານັ້ນວ່າຊິເອີ້ນ **"ຄວາມສຳພັນລະຫວ່າງເຮົານີ້ວ່າຈັ່ງໃດ..?"**

……….

ພໍແຕ່ຊາຍໜຸ່ມໄດ້ອ່ານຈົດໝາຍຂອງຍິງສາວນັ້ນຈົບລົງ ລາວກໍຟ້າວຈອງປີ້ຍົນລົງໄປວຽງຈັນ ເພື່ອໄປຕອບຄຳຖາມນັ້ນທັນທີ..!!!





**ຖ້າບໍ່ເຄີຍລົ້ມ ແລ້ວເຮົາຈະລຸກໄດ້ແນວໃດ ຖ້າບໍ່ເຄີຍຫຼົງທາງ ກໍຄົງບໍ່ຮູ້ຫາທາງອອກ ຖ້າບໍ່ເຄີຍທຸກກໍຄົງບໍ່ຮູ້ຈັກສຸກ...!!**

໗ ພຶດສະພາ ໒໐໑໗



# ຖອຍ ເພື່ອ ກ້າວ

ໄມພົມຂັບລົດວີໂກຄັນໃໝ່ອ່ຽມຍັງບໍ່ທັນໃສ່ຮອດປ້າຍມາຈອດຈຶກຕໍ່ໜ້າບ້ານ ມອດຈັກລົດໄຂປະຕູພ້ອມກ້າວຂາອອກ ອັດປະຕູດັງ ກຶ້ກ! ສຽງແຮງເຕີບແລ້ວຍ່າງເຂົ້າໄປໃນເຮືອນ ດ້ວຍສີໜ້າ ທ່າທາງ ອາລົມບໍ່ດີປານໃດ.

"ກັບມາຮອດແລ້ວບໍ່? ດື່ມນ້ຳເຢັນກ່ອນຈັ່ງຊິໄດ້ຊື່ນໃຈ"ແພງເວົ້າພ້ອມຍື່ນຈອກນ້ຳເຢັນໃຫ້.

"ເອົາວາງໄວ້ຫັ້ນແຫຼະ" ໄມພົມຕອບດ້ວຍນ້ຳສຽງຊົງຮ້າຍໆແດ່.

"ເຈົ້າເປັນຫຍັງ ມີບັນຫາເລື່ອງວຽກບໍ່?" ແພງຖາມດ້ວຍຄວາມເປັນຫ່ວງ.

"ຢ່າມາສົ້ມາຖາມຢູ່ນີ້ໃດ໋ ແຮ່ງເມື່ອຍປານນີ້ ຊິໄປໃສລະໄປ" ໄມພົມຕອບພ້ອມໄລ່ເມຍໃຫ້ອອກໄປ.

ໄມພົມ ກັບແພງ ແຕ່ງງານກັນມາໄດ້ຫ້າປີແລ້ວຍັງບໍ່ໄດ້ລູກນຳກັນຈັກຄົນແຕ່ທັງສອງກໍຍັງມີຄວາມຫວັງຢູ່ ເພາະຍັງບໍ່ທັນເຖົ້າ ຫຼັງຈາກແຕ່ງງານກັນໃໝ່ທັງສອງຊ່ອຍກັນຫາເງິນຫາຄຳໄດ້ມາກໍເກັບທ້ອນໄວ້ຈົນຖານະຄອບຄົວດີຂຶ້ນຈາກເຮືອນໄມ້ທຳມະດາເປັນເຮືອນດິນກໍ່ຫຼັງໃຫຍ່ເຕີບ ແລ້ວນີ້ໄມພົມກໍຫາໄປດາວລົດວີໂກມາໃຊ້ໄດ້ສອງສາມເດືອນ ແຕ່ແພງເອງບໍ່ເຫັນດີນຳປານໃດ ລາວຢາກເກັບເງິນກ້ອນສຸດທ້າຍໄວ້ໃຊ້ໃນຍາມຈຳເປັນ ເພາະເງິນຄຳທີ່ເກັບທ້ອນມານັ້ນກໍສຸມໃສ່ສ້າງເຮືອນຈົນເກືອບໝົດແລ້ວ. ສ່ວນລົດຄັນເກົ່າເຖິງມັນຈະເກົ່າໄປແດ່ກໍຍັງພໍໃຊ້ໄດ້ຢູ່ ແຕ່ໄມພົມບໍ່ຍອມໃຊ້ລາວເປັນຄົນກຽດໃຫຍ່ຕັ້ງແຕ່ຕອນໃດບໍ່ຮູ້ ຊິໃຫ້ຂັບລົດເກົ່າໆໄປການແມ່ນເປັນໄປບໍ່ໄດ້ ເພາະເພິ່ນຫາກໍໄດ້ເລື່ອນໃຫ້ເປັນຫົວໜ້າຮັບເໝົາຝ່າຍຂົວທາງຄົນໃໝ່ ຕ້ອງມີລົດຄັນໃໝ່ໆງາມໆຂັບຈຶ່ງສົມກຽດສົມຕຳແໜ່ງ ເພາະໝູ່ຢູ່ຫ້ອງການກໍດາວລົດໃໝ່ມາຂີ່ກັນຫຼາຍຄົນ ສ່ວນແພງເປັນພະນັກງານຄູສອນຢູ່ບ້ານ ພໍເລີກສອນມາເຮືອນຍັງຕ້ອງຕ່ຳຫູກ-ຕ່ຳນາກ, ປູກຜັກ ລ້ຽງເປັດລ້ຽງໄກ່ ເພື່ອໄວ້ເປັນອາຫານ ແລະໄວ້ຂາຍເປັນການຫາ

ລາຍໄດ້ເສີມ ເພາະລາຍຈ່າຍແຕ່ລະເດືອນໄດ້ເພີ່ມຂຶ້ນຫຼາຍຈາກແຕ່ກ່ອນ.

"ໄມພິມ ມື້ນີ້ເງິນເດືອນອອກໃດ໋ ຊິຟ້າວກັບເຮັດຫຍັງ ໄປຊອກບ່ອນລະບາຍຄວາມອິດເມື່ອຍກ່ອນຕີ" ພອນເພື່ອນຮ່ວມງານເອີ່ຍຊວນ.

"ເຮົາກໍຢາກໄປຢູ່ແຕ່ມື້ນີ້ຄາວຽກນ່າ" ໄມພິມປະຕິເສດທັງທີ່ຢາກໄປໃຈຊິຂາດ ແຕ່ຈຳຕ້ອງໄດ້ເອົາເງິນໄປຈ່າຍຄ່າດາວລົດ.

"ແຕ່ວ່າຜູ້ສາວຢູ່ຮ້ານເຮົາໄປມື້ນັ້ນຖາມຫາໂຕຢູ່ໃດ໋ ລາວວ່າຢາກລອງນັ່ງລົດຄັນງາມຂອງໂຕເບິ່ງຈັກເທື່ອວ່າຊັ້ນເດ ແຕ່ໜ້າເສຍດາຍທີ່ໂຕຄາວຽກບໍ່ໄດ້ໄປເນາະ"

"ແຕ່ຈະວ່າໄປແລ້ວ ວຽກເຮົາກໍບໍ່ຟ້າວປານໃດດອກ" ພໍແຕ່ໄດ້ຍິນຄຳວ່າຜູ້ສາວທີ່ນັ້ນລະຄວາມຄິດຂອງໄມພິມປ່ຽນທັນທີ ແລ້ວທັງສອງກໍຂັບລົດອອກໄປ.

"ກິນເຕັມທີ່ເລີຍ ຢາກກິນຫຍັງສັ່ງມາໄດ້ເລີຍ ມື້ນີ້ອ້າຍລ້ຽງເອງ" ໄມພິມເວົ້າພ້ອມທັງມືຊ້າຍຖືຈອກເບຍຕຳກັບໝູ່ ມືຂວາກອດຄໍສາວນ້ອຍ ຢູ່ຮ້ານກິນດື່ມແຫ່ງໜຶ່ງທີ່ຫ່າງຈາກຕົວເມືອງແດ່ ທາງເຂົ້າກໍໄກເພາະຢູ່ກາງທົ່ງ ກໍມີແຕ່ພວກລັກລູກໜີເມຍພາສາວນ້ອຍມາລີ້ສອດເທົ່ານັ້ນແຫຼະທີ່ຮູ້ດີ.

ນັບແຕ່ນັ້ນມາ ພໍແຕ່ເງິນເດືອນອອກໄມພິມຕ້ອງໄດ້ມາປ່ອນໃຫ້ຮ້ານນີ້ນຳ ໜີ້ສິນທີ່ມີກໍເພີ່ມຂຶ້ນຈາກສິບເປັນຮ້ອຍຢ່າງໄວວາ. ຄວາມສຸກໃນຄອບຄົວກໍຫຼຸດໜ້ອຍຖອຍລົງທຸກມື້. ບາງມື້ໄມພິມກໍບໍ່ກັບຮອດບ້ານປະໃຫ້ເມຍຢູ່ບ້ານຄົນດຽວ ຍ້ອນໄປຢູ່ນຳສາວນ້ອຍມືອ່ອນເຫຍັ້ນເຫຼົ້າເຫຍັ້ນເບຍຫັ້ນແລ້ວ ເງິນເດືອນກໍບໍ່ເຫຼືອໃຫ້ເມຍ ຊ້ຳບໍ່ພໍບາງມື້ຍັງຂູ່ເອົາເງິນນຳເມຍໄປອີກ ແພງຕ້ອງໄດ້ກິນເຂົ້າກັບນ້ຳຕາເກືອບທຸກຄາບ.

ໃນຄືນທີ່ມືດມິດໄຮ້ແສງດາວ ແພງພວມນັ່ງຄຶດທົບທວນເລື່ອງລາວຕ່າງໆຢູ່ນັ້ນກໍມີສຽງໂທລະສັບດັງຂຶ້ນແພງສະດຸ້ງຕື່ນເລັກໜ້ອຍແຕ່ກໍກົດຮັບສາຍທັນທີ.

"ແພງ ມາຫາຂ້ອຍແດ່ ຢູ່ຫ້ອງການບ້ານດຽວນີ້ເດີ້ ມາໄວໆແດ່" ແພງຕົກໃຈວາບເກີດເລື່ອງຂຶ້ນ ເຖິງໄດ້ຂຶ້ນຫ້ອງການບ້ານ. ວ່າແລ້ວແພງກໍຟ້າວອອກໄປທັນທີ.

ພາຍໃນຫ້ອງການບ້ານມີປະມານ ໖-໗ ຄົນ ໃນນັ້ນມີຫົວໜ້າບ້ານ ກອງຫຼອນບ້ານ ໓ ຄົນ ພ້ອມຜູ້ຍິງອີກ ໔ ຄົນ ແລະໄມພິມນັ່ງເຮັດໜ້າຫຍຸ້ງກັນຢູ່.



"ເກີດເລື່ອງຫຍັງຂຶ້ນ?" ແພງເອີ່ຍຖາມທັນທີເມື່ອເຂົ້າໄປຮອດ.

"ຜົວເຈົ້າໄດ້ລໍ້ລວງສາວນ້ອຍນີ້ໄປເຮືອນພັກຢູ່ຄຸ້ມເທິງຫັ້ນ ເພື່ອຫວັງຮ່ວມປະເວນີ ແຕ່ແມ່ລາວພ້ອມກອງຫຼອນນຳໄປພໍ້ກ່ອນ ຢູ່ໃນຫ້ອງຂອງເຮືອນພັກ" ເມື່ອໄດ້ຍິນຫົວໜ້າບ້ານເວົ້າແບບນັ້ນ ແພງເຖິງຂັ້ນຫົວເຂົ່າອ່ອນລົງທັນທີ.

"ແຕ່ຂ້ອຍຍັງບໍ່ໄດ້ເຮັດຫຍັງໃຫ້ລາວໃດ໋ ແພງ ຂ້ອຍບໍ່ໄດ້ລໍ້ລວງ ລາວເຕັມໃຈໄປນຳເອງ…" ພໍແລ້ວບໍ່ຕ້ອງເວົ້າ. ແພງເວົ້າຕັດຄວາມຂຶ້ນພ້ອມເວົ້າຕໍ່:

"ສົ່ງໃຫ້ຕຳຫຼວດດຳເນີນຄະດີຕາມກົດໝາຍເລີຍ"

"ບໍ່ໃດ໋ແພງ ເຮັດແບບນັ້ນບໍ່ໄດ້ໃດ໋ ຖ້າເລື່ອງຂຶ້ນຮອດຂັ້ນເທິງຂ້ອຍຕ້ອງໄດ້ເຂົ້າຄຸກແທ້ໆ ແລ້ວຍັງວຽກຂ້ອຍອີກຕ້ອງມີບັນຫາແນ່ນອນ" ໄມພິມເວົ້າດ້ວຍສຽງກະວົນກະວາຍ.

"ຢ້ານເບາະ ຕອນເຮັດຄືບໍ່ຄຶດເບິ່ງແດ່ ເບິ່ງດຸເຂົາເກືອບສ່ຳຮຸ່ນລູກ ເຈົ້າຍັງກ້າເຮັດເລື່ອງອັບປີແນວນີ້ໄດ້ ໄປນອນຢູ່ຄຸກເບິ່ງຈັກເທື່ອເພື່ອຊິຄຶດຫຍັງໄດ້ແດ່" ແພງເວົ້າດ້ວຍຄວາມໂມໂຫ.

"ບໍ່ໃດ໋ແມ່ ເຮົາບໍ່ໃຫ້ເລື່ອງຂຶ້ນຮອດເມືອງຮອດແຂວງໃດ໋ ເຮົາອາຍໝູ່ຢູ່ໂຮງຮຽນ ອ້າຍລາວກໍຍັງບໍ່ໄດ້ເຮັດຫຍັງໃຫ້ເຮົາ ລົມກັນຢູ່ນີ້ກໍແລ້ວ" ເມື່ອໄດ້ຍິນສາວນ້ອຍເວົ້າຂຶ້ນຈັ່ງຊັ້ນ ໄມພິມກໍງຶກຫົວເຫັນດີນຳ.

"ແຕ່ເລື່ອງນີ້ມັນຜິດກົດໝາຍທັງຮີດຄອງນຳໃດ໋ ແລ້ວຄົນທີ່ເສຍຫາຍກໍແມ່ນໂຕເຈົ້າເອງ" ແພງເວົ້າຂຶ້ນ, ເຖິງແມ່ນຈະຮັກຜົວປານໃດ ແຕ່ເມື່ອເຮັດຜິດກໍຕ້ອງເວົ້າໄປຕາມຜິດ.

"ຖ້າແມ່ຍັງຈະໃຫ້ເລື່ອງນີ້ຂຶ້ນຮອດເມືອງຮອດແຂວງເຮົາຊິອອກໂຮງຮຽນ" ສາວນ້ອຍອວ່າຍມາເວົ້າກັບແມ່.

"ຊິອອກໂຮງຮຽນຈັ່ງໃດ ມັນຄືອະນາຄົດຂອງເຈົ້າໃດ໋" ແພງເວົ້າຕື່ມ.

"ຂ້ອຍວ່າລົມກັນແຕ່ຢູ່ນີ້ບໍ່ຖ້າໃຫ້ຂຶ້ນຮອດຂັ້ນເທິງດອກ ເອົາເປັນວ່າໃຫ້ທາງນັ້ນຈ່າຍຄ່າປົວແປງຈິດໃຈໃຫ້ກໍພໍແລ້ວ" ຍ້ອນຄວາມຮັກລູກ ຜູ້ເປັນແມ່ຈຶ່ງຕັດສິນໃຈເວົ້າແບບນັ້ນ ເຖິງແມ່ນຕົນຕ້ອງກືນກ້ອນນ້ຳຕາລົງໄປນຳກໍຕາມ.



"ເອົາເປັນວ່າຕົກລົງກັນໃຫ້ແລ້ວແຕ່ຢູ່ນີ້ເນາະ" ຫົວໜ້າບ້ານເວົ້າຂຶ້ນ.

ເມື່ອທຸກຝ່າຍຕ່າງເຫັນດີນຳກັນແລ້ວ ການເຈລະຈາກໍຖືວ່າຈົບລົງຢູ່ທີ່ຫ້ອງການບ້ານ ຕ່າງຄົນຕ່າງແຍກກັນກັບເຮືອນໃຜລາວ ລໍຖ້າຮອດມື້ນັດໝາຍມອບເງິນຈັ່ງມາໃໝ່.

"ແພງ ຂ້ອຍມີເລື່ອງປຶກສານຳ ຄືວ່າ... ພອນຊວນຂ້ອຍໂກງເງິນບໍລິສັດ ເພາະຫຼານສາວມັນເປັນນັກບັນຊີ ແລ້ວກໍຍັງມີນ້ອງມັນເປັນຜູ້ກຳເງິນສົດຢູ່ຫັ້ນ ມັນເປັນຄົນແລ່ນເຕັ້ນເອົານ້ອງ ແລະຫຼານມັນເຂົ້າມາເຮັດວຽກໄດ້ ໕-໖ ເດືອນລະແຕ່ມັນຄາຢູ່ນຳຂ້ອຍ ເພາະຂ້ອຍຮູ້ເລື່ອງຂອງມັນໝົດແລ້ວ ແລະຖ້າມີຂ້ອຍຊ່ອຍກໍຈະງ່າຍຂຶ້ນອີກ ມັນຈຶ່ງຢາກດຶງເອົາຂ້ອຍໄປຮ່ວມນຳ" ໄມພິມເວົ້າຂຶ້ນເມື່ອກັບມາຮອດເຮືອນ.

"ເລື່ອງມື້ນີ້ຍັງເກືອບເອົາໂຕບໍ່ລອດ ເງິນຊິເອົາໄປໃຫ້ເຂົາກະຍັງບໍ່ມີ ຕັ້ງຫຼາຍລ້ານ ໜີ້ສິນຊິກອງຖ້ວມຫົວລະ ເຈົ້າຍັງຊິຫາເລື່ອງຕິດຄຸກອີກຫວາ ຖ້າເຈົ້າຈະເຮັດຕາມທີ່ໝູ່ເຈົ້າບອກ ມື້ອື່ນເຮົາໄປຮ້າງກັນກ່ອນສາ ຂ້ອຍກໍເມື່ອຍນຳເຈົ້າແລ້ວ ແຕ່ລະມື້ສ້າງແຕ່ບັນຫາ ແລະທີ່ສຳຄັນຂ້ອຍບໍ່ຢາກໄປສົ່ງເຂົ້າສົ່ງນ້ຳເຈົ້າຢູ່ຄຸກ" ແພງເວົ້າດ້ວຍຄວາມໂມໂຫແລ້ວຍ່າງເຂົ້າໄປໃນຫ້ອງນອນ. ສ່ວນໄມພິມກໍໄດ້ແຕ່ນັ່ງເຮັດຄໍຕົກຄຶດທົບທວນເລື່ອງລາວຕ່າງໆຢູ່ນອກຫ້ອງຄົນດຽວຈົນແຈ້ງ.

ສອງອາທິດຜ່ານໄປ ພໍດີກົງກັບມື້ທີ່ນັດໝາຍມອບເງິນໃຫ້ເຂົາ ແພງກັບຈາກໂຮງຮຽນຍ່າງກົ້ມໜ້າຊົງຄຶດໜັກເຂົ້າໄປໃນເຮືອນທັນໃດນັ້ນສາຍຕາກໍແນມໄປເຫັນຊອງສີນ້ຳຕານວາງຢູ່ເທິງໂຕະກິນເຂົ້າ ແພງຈັບຊອງນັ້ນຂຶ້ນມາເບິ່ງມີໂຕໜັງສືຂຽນໄວ້ວ່າ "ແດ່ແພງທີ່ຮັກ" ດ້ວຍຄວາມສົງໄສແພງເລີຍໄຂຊອງນັ້ນເບິ່ງທັນທີ ແຕ່ຕ້ອງຕົກສະເງີ້ກັບສິ່ງທີ່ຢູ່ໃນຊອງນັ້ນ ແພງຈັບຊອງຍ່າງໄປຫາໄມພິມທີ່ພວມນັ່ງອ່ານໜັງສືຢູ່ດ້ວຍໃຈຮ້ອນຮົນ.

"ນີ້ມັນໝາຍຄວາມວ່າຈັ່ງໃດ? ເງິນຈຳນວນຫຼາຍປານນີ້ເຈົ້າເອົາມາແຕ່ໃສ ຫຼືວ່າເຈົ້າຮ່ວມມືກັບພອນ ເຈົ້າເຮັດແບບນີ້ໄດ້ຈັ່ງໃດ? ຂ້ອຍຜິດຫວັງໃນໂຕເຈົ້າທີ່ສຸດ" ແພງເວົ້າພ້ອມນ້ຳຕາຊຶມ.



"ໃຈເຢັນກ່ອນແພງ ເຈົ້າກຳລັງເຂົ້າໃຈຂ້ອຍຜິດ ເງິນທີ່ເຈົ້າຈັບຢູ່ຫັ້ນແມ່ນເງິນຂອງອ້າຍໃຈ ຂ້ອຍເອົາລົດໄປໃຫ້ລາວດາວຕໍ່ ແລ້ວເອົາເງິນມາໃຫ້ເຈົ້າໄປໃຊ້ໜີ້ເຂົາ ຕໍ່ໄປຂ້ອຍຈະໃຊ້ລົດຄັນເກົ່າທຽວການ. ສ່ວນເລື່ອງນັ້ນຂ້ອຍໄດ້ປະຕິເສດພອນໄປແລ້ວແລະກໍເຕືອນມັນແລ້ວ ແຕ່ມັນບໍ່ຟັງຍັງດຳເດີນການຕໍ່ ແລະກໍຖືກທາງຂັ້ນເທິງຈັບໄດ້ຕອນນີ້ມັນຖືກໄລ່ອອກການ ແລະໄດ້ໄປນອນຢູ່ໃນຄຸກຮຽບຮ້ອຍພ້ອມກັບນ້ອງ ແລະຫຼານມັນ" ແພງເກືອບບໍ່ຢາກເຊື່ອຫູຕົວເອງໃນສິ່ງທີ່ໄດ້ຍິນ ແຕ່ກໍເຮັດໃຫ້ແພງຍິ້ມທັງນ້ຳຕາອອກມາ.

"ຕອນນີ້ຂ້ອຍອອກຈາກເຫວເລິກມາໄດ້ແລ້ວ ກໍຍ້ອນມີແສງສະຫວ່າງຈາກແສງທຽນເຫຼັ້ມນີ້ທີ່ສ່ອງນຳທາງໃຫ້ຂ້ອຍ ຂອບໃຈທີ່ເຈົ້າຍັງຢູ່ກັບຂ້ອຍມາຈົນເຖິງມື້ນີ້ ເຖິງແມ່ນຂ້ອຍເປັນຜົວທີ່ບໍ່ດີປານໃດ, ຂໍໂທດກັບສິ່ງທີ່ເຄີຍເຮັດຜິດໄປ, ຂອບໃຈທີ່ໃຫ້ໂອກາດຂ້ອຍໄດ້ແກ້ໄຂໃນສິ່ງທີ່ເຄີຍເຮັດຜິດພາດ ນັບແຕ່ນີ້ໄປຂ້ອຍຈະເປັນຄົນດູແລເຈົ້າ ເພື່ອທົດແທນຊ່ວງເວລາທີ່ຜ່ານມາຂ້ອຍຈະເປັນຜົວທີ່ດີຂອງເຈົ້າໃຫ້ສົມກັບທີ່ເຈົ້າຮັກຂ້ອຍ".

"ຂ້ອຍດີໃຈທີ່ໄດ້ຍິນຄຳເວົ້ານີ້ອອກຈາກປາກເຈົ້າອີກ ແຕ່ວ່າຈະເປັນຜົວທີ່ດີຢ່າງດຽວຄືງບໍ່ພໍ" ແພງເຮັດໜ້າເສົ້າເມື່ອເວົ້າຈົບແລ້ວກໍຍິ້ມກ່ອນຈະເວົ້າຕໍ່" ແຕ່ຕ້ອງເປັນພໍ່ທີ່ດີນຳ"

"ພໍ່ທີ່ດີ.!ນີ້ໝາຍຄວາມວ່າເຮົາກຳລັງຈະມີລູກຂ້ອຍກຳລັງຈະໄດ້ເປັນພໍ່ຄົນແມ່ນບໍ່ແພງ!" ໄມພິມທັງເວົ້າທັງດຶງແພງມາກອດທັນທີດ້ວຍຄວາມດີໃຈ ຄວາມຫວັງທີ່ມີມາຕະຫຼອດຫຼາຍປີໄດ້ກາຍເປັນຈິງແລ້ວ ໃນທີ່ສຸດມື້ນີ້ຄວາມສຸກ ຮອຍຍິ້ມກໍກັບຄືນສູ່ຄອບຄົວແພງອີກຄັ້ງ ມາພ້ອມກັບສິ່ງທີ່ມີຄ່າທີ່ສຸດຂອງຄົນເປັນພໍ່ແມ່ນັ້ນກໍຄື **"ລູກ"**.



**ຄວາມຮັກ ກໍຄືກັບການອ່ານໜັງສື ທີ່ໃນປື້ມເຫຼັ້ມດຽວ ສາມາດເຮັດໃຫ້ເຮົາມີທັງຄວາມສຸກ ເສົ້າ ຮ້ອຍຍິ້ມ ນ້ຳຕາ ແລະສຽງຫົວໄດ້.**

**໑ ພຶດສະພາ ໒໐໑໗**



# ຕົ້ນຮັກ

ອາກາດຍາມບ່າຍຂອງເດືອນເມສາທີ່ຮ້ອນອົບເອົ້າ ຕາເວັນໃກ້ຈະລັບສາຍພູ ມີສຽງລົມກັນຈໍແຈໆດັງມາຈາກໂຕະຫີນກ້ອງຮົ່ມໄມ້ໃນຮົ້ວວິທະຍາໄລແຫ່ງໜຶ່ງ ຍັງມີນັກສຶກສາສອງກຸ່ມກຳລັງສົນທະນາກັນຢ່າງມ່ວນຊື່ນ.

“ວ່າແຕ່ອາທິດນີ້ເຮົາຊິໄປຊຽນບົດລາຍງານບ້ານໃຜດີ?” ທັດ ຖາມຂ້ອຍ ກັບຈັນທີ່ນັ່ງຢູ່ນຳກັນ.

“ໄປບ້ານໃຜດີລະ! ບ້ານຂ້ອຍຢ້ານບໍ່ສະດວກເພາະມີການກໍ່ສ້າງ ຢ້ານມີແນວລົບກວນຫຼາຍ” ຈັນຕອບຂຶ້ນ.

“ຄັນຊັ້ນໄປບ້ານຂ້ອຍກະໄດ້” ຂ້ອຍສະເໜີຂຶ້ນ.

“ບ້ານເຈົ້າຫັ້ນກະດີຢູ່ດອກ ບັນຍາກາດເຢັນສະບາຍຕົ້ນໄມ້ຫຼາຍ ແຕ່ບໍ່ໄຫວນຳໝາເຈົ້າຫັ້ນຕິ ໄປເທື່ອແລ້ວນີ້ໄດ້ຊື້ເກີບໃໝ່ຕື່ມຄູ່ໜຶ່ງ” ທັດເວົ້າຂຶ້ນ.

“ເອີໆ! ແມ່ນໃດ໋ເນາະ ຂ້ອຍກະເກືອບໄດ້ຊື້ໃໝ່ ໝາເຈົ້າຫັ້ນກະຕັ້ງໂພດແທ້ໃດ໋ກັດຮອດເກີບເຈົ້າຂອງ” ມີສຽງຫົວຂຶ້ນເມື່ອຈັນເວົ້າຈົບລົງ.

ພວກເຮົາສາມຄົນຮຽນບັນຊີຢູ່ຫ້ອງດຽວກັນ ແລະເປັນໝູ່ຮັກໝູ່ແພງກັນຊ່ອຍເຫຼືອກັນມາຕະຫຼອດໄລຍະທີ່ຮຽນນຳກັນເກືອບສາມປີ ນີ້ກໍເປັນສົກຮຽນສຸດ



ທ້າຍແລ້ວ ກຳລັງກະກຽມຂຽນບົດລາຍງານຫຼັງຈາກທີ່ໄປລົງເຝິກງານມາເພື່ອຂຶ້ນປ້ອງກັນບົດແລ້ວກໍກຽມຮັບໃບປະກາດ.

“ແຕ່ຈະວ່າໄປແລ້ວພວກມັນກໍເປັນຕາຮັກດີໃດ໋ເນາະ ຊື່ຫຍັງແດ່ເກາະໂຕທີ່ມັກກັດເກີບເກົ່າໆຫັ້ນ” ຈັນເອີ່ຍຖາມຂຶ້ນ.

“ລ໋ອງກ໋ອງ ກັບຢ໋ອງແຢ໋ງ” ຂ້ອຍຕອບ.

“ປາດໂທ.! ແຕ່ຊື່ກະພິລຶກຂະໜາດເນາະ” ຈັນຫ້ອງຂຶ້ນແກມສຽງຫົວ ກ່ອນຈະຖາມຕໍ່ “ວ່າແຕ່ມີຈັກໂຕລະທີ່ລ້ຽງຢູ່ເຮືອນຫັ້ນ ມັກກັດເກີບທຸກໂຕຫວາ?”.

“ມີ໔ໂຕຢາກຮູ້ບໍ່ວ່າແຕ່ລະໂຕເປັນຈັ່ງໃດຊິເວົ້າໃຫ້ຟັງ”ຂ້ອຍເວົ້າພ້ອມຮອຍຍິ້ມ

“ລ໋ອງກ໋ອງ ກັບຢ໋ອງແຢ໋ງເປັນສາວງາມປະຈຳເຮືອນ ກ່ອນທີ່ແມ່ເພິ່ນຈະຕາຍໄດ້ຖ່າຍທອດວິຊາກັດເກີບນີ້ໄວ້ໃຫ້ ຖືໄດ້ວ່າເປັນວິຊາເກົ່າແກ່ປະຈຳຕະກູນເລີຍແຫຼະ ສ່ວນທ້າວສີເຜືອກ ກັບທ້າວບຸນເຫຼືອຫັ້ນເປັນອ້າຍບ່າວປະຈຳເຮືອນເອົາເລື່ອງທ້າວສີເຜືອກກ່ອນເນາະທ້າວເພິ່ນບໍ່ແມ່ນຂອງງ່າຍເດີຄວາມດື້ເປັດນ້ອຍໄກ່ນ້ອຍ ພຽງແຕ່ໄດ້ເຫັນແມ່ນຕ້ອງນອນແນບນິ້ງຢູ່ປາກທ້າວໂລດແລ້ວ ທ້າວບໍ່ກິນດອກຢອກຫຼິ້ນຊື່ໆ ແຕ່ຢອກແຮງໂພດຈົນຕາຍຄາປາກ ແລະສ່ວນທ້າວບຸນເຫຼືອນີ້ແມ່ນໂຕເດັ່ນເລີຍ ເລື່ອງຄວາມເຕ້ຍຄວາມຕຸ້ຍໆມະຫາຕຸ້ຍ ກິນທຸກຢ່າງທີ່ຂວາງໜ້າແມ່ນແຕ່ຕຳໝາກຫຸ່ງ, ຊຸບຜັກ, ແກງໜໍ່ໄມ້ທ້າວຍັງກິນເລີຍ”.

“ອັນໂຕເຕ້ຍໆ ຕຸ້ຍໆຂົນສີຂາວກ່ານນ້ຳຕານຫັ້ນຫວາ?” ທັດຖາມຕັດຂຶ້ນ.

“ແມ່ນໆ ໂຕນັ້ນລະ” ຂ້ອຍຕອບ.

“ຂ້ອຍໄປມື້ນັ້ນເບິ່ງເພິ່ນເຫົ່າຈົນບໍ່ໄດ້ຍິນຟ້າຍິນໝອກຫຍັງເລີຍ ເຫົ່າແທ້ເຫົ່າວ່າເຫົ່າມາລາທອນ ໄດ້ຍິນແຕ່ສຽງບໍ່ເຫັນໂຕ” ທັດເວົ້າເສີມໃສ່ຕື່ມອີກ.

“ຫັ້ນລະຄວາມສາມາດພິເສດຂອງເພິ່ນ” ຂ້ອຍເວົ້າເສີມໃສ່ພ້ອມສຽງຫົວຄ່ອຍໆ.

“ໂອ່ຍ! ລຳຄານສຽງນົກສຽງກາແຖວນີ້ເດເນາະ ເຮັດທຳທ່າຮັກໝາຮັກແມວ ຖ້າຮັກປານນັ້ນຄືບໍ່ອອກໂຮງຮຽນໄປຮັບຈ້າງລ້ຽງໝາເລີຍສາ”ສຽງເວົ້າຂອງສາວນິດອດມາໃສ່ຈາກໂຕະທາງຂ້າງທີ່ນັ່ງຢູ່ນຳກັນສາມຄົນ ທັງເວົ້າທັງຫົວເຍາະເຍີ້ຍພວກຂ້ອຍແນມເບິ່ງກັນດ້ວຍສີໜ້າບໍ່ພໍໃຈ ກ່ອນທີ່ທັດຈະຕອບໄປວ່າ:



“ໄດ້ຍິນສຽງໂຕຫຍັງບໍ່ ດັງແຈດໆ ມາໃສ່ຫູ ຄ້າຍຄືສຽງຂອງບັກບຸນເຫຼືອເຈົ້າຫັ້ນລະແພງ” ທັດທັງເວົ້າພ້ອມທັງເຮັດສີໜ້າເສີຍໆ.

ໃຜກໍຮູ້ດີວ່າພວກສາວນິເປັນສາວໄຮໂຊປະຈຳໂຮງຮຽນນີ້ ພວກເພິ່ນຮຽນຢູ່ຫ້ອງດຽວກັນກັບພວກຂ້ອຍ ແຕ່ກໍຮູ້ຈັກກັນໝົດໂຮງຮຽນ ໝົດຫ້ອງກໍມີແຕ່ສາມຄົນເພິ່ນຫັ້ນລະທີ່ຫຼິ້ນນຳກັນກໍແນວວ່າປາກແບບນັ້ນໃຜຊິຢາກຫຼິ້ນນຳເບິ່ງແຕ່ການແຕ່ງໂຕພໍຊິຍ້ອຍ ເສື້ອນັກສຶກສາວ່າຊັ້ນ ຮັດພໍປານໝາກກະດຸມຊິດີດອອກມານອກ ສົ້ນກະເຂີນໆພໍແຕ່ປົກຫົວເຂົ່າ ຫົວສົ້ນກ່າຍຢູ່ລຸ່ມພຸ້ນຍ່າງໄປຄືຊິຫຼຸດລົງນີ້ ແຕ່ງໜ້າກະພໍປານວ່າຊິໄປຫຼິ້ນໝໍລຳເລື່ອງເອົາໂລດ ແກ້ມແດງເປີ້ນເວີ້ນ ພໍປານໝາກເລັ່ນສຸກ ປາກກໍແດງແຈດແວດພໍປານ... ຢ່າໃຫ້ເວົ້າເລີຍເນາະປານຫຍັງ ສ່ວນເລື່ອງໝາເລື່ອງແມວນີ້ບໍ່ຖ້າເວົ້າຮອດຈັກແມ່ນເປັນຄູ່ກຳຄູ່ເວນຫຍັງກັນ ພໍປານໝາກເຜັດກັບແກ່ນຕາເອົາໂລດ ບ່ອນໃດມີນິຕ້ອງບໍ່ມີໝາ ແລະນີ້ກໍບໍ່ແມ່ນເທື່ອທຳອິດດອກທີ່ພວກນິເວົ້າໃສ່ພວກຂ້ອຍ.

“ລົມຫຍັງກັນເດສາວໆນີ້ ຄືຍັງບໍ່ພາກັນກັບ ຊິເປັນຕາມ່ວນແທ້ໃຫ້ອ້າຍນັ່ງລົມນຳໄດ້ບໍ່?” ສຽງຂອງຮຸ່ນອ້າຍ ລາວເຄີຍຮຽນຢູ່ຝ່າຍບັນຊີແຕ່ຈົບແລ້ວ ຕອນນີ້ລາວຮຽນຕໍ່ຝ່າຍການຊ່າງໄຟຟ້າ ແລະເປັນລູກອ້າຍລູກນ້ອງກັບທັດ ລາວຊື່ອ້າຍກັນຖືວ່າເປັນອ້າຍບ່າວຫຼໍ່ຄົນໜຶ່ງເລີຍລະ.

“ໄດ້ໆນັ່ງເລີຍຂ້າງແພງຫັ້ນ”ທັດຈັດແຈງບ່ອນນັ່ງໃຫ້ທັນທີເພາະກຳລັງເຮັດໜ້າທີ່ເປັນແມ່ຊັກແມ່ສື່ໃຫ້ຂ້ອຍກັບລາວ ຕາມຄຳຂໍຂອງຜູ້ເປັນອ້າຍ.

“ພວກນ້ອງພວມລົມກັນເລື່ອງໝາຢູ່ເຮືອນແພງ ແຕ່ກໍມີນົກກະແດບເດົ້າມາຮ້ອງແວດໆກວນຢູ່” ທັດເວົ້າສຽງສູງດໆໃສ່ພວກສາວນິຫຼຽວເບິ່ງນິຄືຢາກຮ້ອງດ່າມາໃສ່ແຕ່ອົດກັ້ນໄວ້ ເພາະຢູ່ຕໍ່ໜ້າອ້າຍກັນຄົນທີ່ເພິ່ນລັກມັກຢູ່ ເລີຍຕ້ອງໄດ້ສະແດງບົດນາງເອກໄວ້ກ່ອນ.

“ຊ່າງເວົ້າແທ້ນົກກະແດບເດົ້າຢູ່ໃສ ແລ້ວນີ້ແພງກໍມັກລ້ຽງໝາບໍ່?” ອ້າຍກັນຖາມຂຶ້ນ.

“ຈັກມັກບໍ່ມັກແຫຼະ ໃຈເພິ່ນແທ້ຢາກເອົາພວກມັນໄປນອນໃນຫ້ອງນຳພຸ້ນລະ ບໍ່ຮ້າຍບໍ່ຕີ ຮັກແຮງແພງແຮງພໍປານວ່າແມ່ນລູກເອົາໂລດ” ທັດຕອບຂຶ້ນແທນຂ້ອຍ.

“ປານນັ້ນພຸ້ນຫວາ ເຮືອນອ້າຍກະລ້ຽງຄືກັນຕັ້ງ໔ ໂຕພຸ້ນນ່າ ແຕ່ກໍບໍ່ຮັກແຮງເທົ່ານ້ອງດອກ” ຂ້ອຍໄດ້ແຕ່ຍິ້ມແບບອາຍໆ ເວລາຫຼຽວເບິ່ງໜ້າລາວ.

“ນ້ອງກໍມັກລ້ຽງຄືກັນໃດ໋” ສຽງສາວນີດອດມາໃສ່ແຕ່ໂຕະ ແລ້ວກໍຍ້າຍມານັ່ງແປະລົງຂ້າງອ້າຍກັນທີ່ຍັງມີບ່ອນຫວ່າງຢູ່ ແລ້ວນີກໍສາທະຍາຍຕໍ່ທັງທີ່ບໍ່ມີໃຜຖາມ ພວກຂ້ອຍກໍນັ່ງຟັງວ່ານີຈະສະແດງບົດບາດຫຍັງ.

“ຢູ່ເຮືອນນ້ອງກໍລ້ຽງໝາໄວ້ຕັ້ງ ໕-໖ ໂຕພຸ້ນນ່າ ແຕ່ລະມື້ນ້ອງຕ້ອງລຸກມາຕົ້ມເຂົ້າໃຫ້ພວກມັນກ່ອນຈຶ່ງໄດ້ມາໂຮງຮຽນ ອາບນ້ຳໃຫ້ພວກມັນທຸກໆສາມມື້ ເວົ້າລົມກັບພວກມັນ ຫຼິ້ນກັບພວກມັນທຸກໆມື້ ເວລານ້ອງກັບແຕ່ໂຮງຮຽນພວກມັນກໍແລ່ນໂດດມາໃສ່ ຊິຮ້າຍກະຮ້າຍບໍ່ລົງ ຊິຕີກະຕີບໍ່ໄດ້ແນວວ່າຮັກມັນແຮງ”.

“ສາບານແມ່ວ່າຮັກຂ້ອຍຍ່າງກາຍໜ້າບ້ານເຈົ້າໄປມື້ນັ້ນຍັງເຫັນເຈົ້າຖືໄມ້ຄ້ອນໄລ່ຕີໝາເອົາເປັນເອົາຕາຍຢູ່” ຂ້ອຍຄິດໃນໃຈຊື່ໆດອກບໍ່ໄດ້ເວົ້າອອກໄປຢ້ານເພິ່ນຊິອາຍ ແຕ່ກໍຄືຊິແມ່ນຜີປ່າບໍ່ພ້ອມນຳຜີບ້ານ ຈຶ່ງໄດ້ເຮັດໃຫ້ເຫດການນັ້ນເກີດຂຶ້ນອີກ.

“ນີໆ ເບິ່ງພຸ້ນນ່າ ໝາມັນຍ່ຽວໃສ່ຕີນລົດເຈົ້າ ກຳລັງຄາບດຶງເສື້ອເຈົ້າລົງນຳ” ສຽງຂອງສາວນົກຮ້ອງບອກພ້ອມຊີ້ມືໄປຍັງລົດຈັກທີ່ຈອດຢູ່ກ້ອງຮົ່ມໄມ້.

“ໃສໆ? ໝາຮ່ານີ້ເນາະຈັ່ງແມ່ນຈັງໄຮ ໝົດບ່ອນຍ່ຽວລະເບາະ ຊິຄາບເສື້ອກູໄປໃສ ມຶງຕາຍນຳກູຄັກມື້ນີ້” ນີທັງເວົ້າທັງແລ່ນໄປຍັງລົດ ສາຍຕາຫຼຽວຫາໄມ້ຄ້ອນທັນຈັບໄດ້ກ້ານຟອຍກ້ານໜຶ່ງ ບໍ່ລໍຊ້າໄລ່ຟາດໝາທັນທີ ສົງໄສວ່ານີລາວຄົງຈະລືມໄປວ່າ ກຳລັງສະແດງບົດນາງເອກຜູ້ທີ່ຮັກໝາຢູ່ ເປັນພາບທີ່ບໍ່ຕ່າງກັນເລີຍກັບມື້ນັ້ນ.

“ໂອ່.! ຊ່າງເປັນນໍ້ ຈາກທີ່ເປັນນາງເອກຜູ້ໃຈດີ ປ່ຽນຮ່າງເປັນນາງມານຮ້າຍຢ່າງໄວວາປານຄົນລະຄົນ” ຈັນທັງເວົ້າທັງຫົວ ຂ້ອຍເອງກໍອົດຫົວບໍ່ໄດ້ເຊັ່ນກັນ.

“ແລ້ວເປັນຫຍັງນ້ອງຈຶ່ງຮັກໝາປານນັ້ນລະ” ຄຳຖາມກັບມາຫາຂ້ອຍອີກເທື່ອໜຶ່ງເມື່ອອ້າຍກັນຖາມ ຂ້ອຍຍິ້ມແບບພາກພູມໃຈ ໃນຫົວກໍຄິດເຖິງພາບເຫດການໃນມື້ນັ້ນ ເຖິງແມ່ນມັນຜ່ານມາສິບກວ່າປີແລ້ວແຕ່ຂ້ອຍຍັງຈື່ໄດ້ບໍ່ເຄີຍລືມ.



“ຍ່າງໄວແດ່ລູກຊິຮອດເຮືອນຄ່ຳໃດ໋! ມາຂີ່ນຂີ່ຫຼັງພໍ່ພີ້ສາ ບ່ອນນີ້ໜາມຫຼາຍຫຍ້າກະຮົກໆຢ້ານງູ” ຂ້ອຍໂດດຂຶ້ນຫຼັງພໍ່ທັນທີເມື່ອພໍ່ກົ້ມໂຕລົງ ຂ້ອຍໄດ້ຂີ່ນຂີ່ຫຼັງພໍ່ທຸກເທື່ອເມື່ອຮອດບ່ອນໃດໄປຍາກແດ່. ມື້ນີ້ກໍຄືເກືອບທຸກມື້ທີ່ຂ້ອຍອອກໄປເບິ່ງນາກັບພໍ່ ເພາະເປັນຊ່ວງພັກໂຮງຮຽນ ແລະຕອນກັບພໍ່ກໍຊອກຫາຂອງກິນເມືອເຮືອນນຳ ຕາມພາສາຄົນບ້ານນອກຂອກນາ ຊອກແຍ່ກົບແຍ່ຂຽດເກັບຜັກຫັກໜໍ່ເມືອນຳທາງຫັ້ນລະ.

“ພໍ່ຊິເຂົ້າໄປຍາມເບິ່ງແຮ້ວ ບາງເທື່ອໂຊກດີຖືກໄກ່, ປ່າມັນຮົກບໍ່ເຂົ້າໄປນຳລະ ຖ້າພໍ່ຢູ່ນີ້ເດີໄປບຶດດຽວພໍ່ຊິອອກມາ ຢ່າໄປຢູ່ໃກ້ແຄມໜອງເດີ” ພໍ່ສັ່ງຂ້ອຍກ່ອນທີ່ລາວຈະເຂົ້າໄປຍາມແຮ້ວ ຫ່າງຈາກບ່ອນຂ້ອຍຢູ່ປະມານສິບປາຍແມັດແຕ່ປ່າມັນຕຶບເບິ່ງບໍ່ເຫັນກັນ.

ຍ້ອນຄວາມດື້ຂອງເດັກນ້ອຍຫັ້ນລະ ຈື່ໄດ້ວ່າຕອນນັ້ນຂ້ອຍຫາກໍໄດ້ສິບປີ, ຂ້ອຍໄດ້ຫຍັບເຂົ້າໄປໃກ້ໆແຄມໜອງ ຫຼຽວເບິ່ງນ້ຳຄືຊິເລິກຈົນເປັນສີຂຽວຍົງໆພຸ້ນລະ ຂ້ອຍແນມເຫັນບ່ອນໜຶ່ງເຫຼື້ອມໆແຄມໜອງ ເບິ່ງແລ້ວເປັນຕາຕະຫຼູດຫຼິ້ນຄັກ ແຕ່ຂ້ອຍບໍ່ເຄີຍຕະຫຼູດລົງນ້ຳດອກຂ້ອຍຢ້ານເພາະຂ້ອຍລອຍນ້ຳບໍ່ເປັນ ແຕ່ຂ້ອຍກໍໄດ້ລອງເອົາຕີນໄປຢຽບເບິ່ງໜ້ອຍໜຶ່ງວ່າມັນຊິເປັນຈັ່ງໃດ ທໍ່ນັ້ນລະຂ້ອຍກໍໄດ້ຕະຫຼູດລົງໄປໃນນ້ຳທັນທີ ພໍປານຖິ້ມໝາກຫີນລົງນ້ຳເອົາໂລດ ຕອນນັ້ນຄຶດພຽງວ່າຕາຍຄັກໆຊິຮ້ອງເອີ້ນພໍ່ກໍຮ້ອງບໍ່ໄດ້ແນວວ່ານ້ຳເຕັມປາກຢູ່ມີແຕ່ຈົມລົງໆ ແຕ່ທັນໃດນັ້ນເອງ ກໍມີພະເອກຂີ່ມ້າຂາວມາຊ່ອຍພ້ອມກັບສຽງ “ຮ໋ອງໆ” ເປັນສຽງຂອງທ້າວຄຳຮູ້ໝາຂອງຂ້ອຍເອງ ວ່າແຕ່ເຫັນຂ້ອຍຢູ່ໃສແມ່ນຕ້ອງເຫັນມັນຢູ່ນຳໂລດ ຂ້ອຍທັນຫຼຽວເຫັນມັນໜ້ອຍໜຶ່ງ ເບິ່ງມັນທັງເຫົ່າທັງແລ່ນວົນໄປມາທ່າທາງກະວົນກະວາຍ ສົງໄສມັນຢ້ານເຈົ້າຂອງຊິຕາຍປະ ແລະຍ້ອນສຽງຂອງມັນນັ້ນແຫຼະເຮັດໃຫ້ພໍ່ໄດ້ຍິນ ແລະກັບອອກມາເຫັນແລ້ວຊ່ອຍຂ້ອຍຂຶ້ນມາໄດ້ທັນ ຖ້າຊ້າກ່ອນຫັ້ນອີກໜ້ອຍໜຶ່ງຂ້ອຍຄົງໄດ້ເປັນຜີເຝົ້າໜອງນັ້ນໄປແລ້ວ.

ພໍແຕ່ກັບມາຮອດເຮືອນຂ້ອຍກໍໃຫ້ລາງວັນທ້າວຄຳຮູ້ຢ່າງງາມໂດຍການຕົ້ມເຂົ້າປຽກໃສ່ກະດູກໝູພ້ອມປາປີ້ງໃຫ້ເພິ່ນອີກສາມໂຕ, ເບິ່ງທ່າທາງເພິ່ນກິນ



ສະແດງອອກເລີຍວ່າຖືກໃຈຢ່າງໃຫຍ່.

“ເອື້ອຍຂອບໃຈໂຕຫຼາຍໆເດີຄຳຮູ້ ຖ້າບໍ່ມີໂຕເທົ່າເອື້ອຍຕາຍໄປແລ້ວ” ຂ້ອຍເວົ້າພ້ອມທັງເອົາມືຕົບຫົວມັນຄ່ອຍໆ ມັນແກວ່ງຫາງກະດິກໆໝອບລົງຕໍ່ໜ້າເລຍມືຂ້ອຍແມບໆ ມັນກໍຄົງຢາກບອກວ່າ “ມັນຮັກຂ້ອຍ” ຈາກທີ່ພວກເຮົາໃນຄອບຄົວຮັກມັນຫຼາຍຢູ່ແລ້ວກໍຍິ່ງຮັກມັນເພີ່ມຂຶ້ນອີກ.

ສາມປີຜ່ານໄປ ຄຳຮູ້ ເປັນອ້າຍບ່າວໃຫຍ່ແລ້ວ ແລະທ້າວກໍມັກອອກໄປຊອກລົມສາວຢູ່ນອກເຮືອນສອງສາມມື້ຈັ່ງກັບເທື່ອໜຶ່ງ ບາງເທື່ອຂ້ອຍກໍຕ້ອງໄດ້ມັດມັນໄວ້ ເພາະຢ້ານພວກຂະໂມຍຊິລັກເອົາມັນໄປ ກໍແນວວ່າມັນໂຕບັກໃຫຍ່ທັງຕຸ້ຍອຸ້ຍລຸ້ຍ ຂົນຍາວໆສີຂາວກ່ານດຳ ເຮັດໃຫ້ທ້າວເພິ່ນເປັນຕາຮັກຕາແພງແທ້ໆ.

“ຄຳຮູ້ ຄຳຮູ້ ມາອາບນ້ຳໄວແມ່ຊື້ໄດດູດນ້ຳມາໃໝ່ ເອື້ອຍບໍ່ໄດ້ດຶງປ່ອມຕັກນ້ຳອາບໃຫ້ໂຕແລ້ວຮີບມາຊິອາບໃຫ້ໂຕຫອມໆຈັ່ງໄປເລາະຫາສາວ” ຂ້ອຍຮ້ອງບອກຄຳຮູ້ມາອາບນ້ຳດ້ວຍຄວາມດີໃຈທີ່ໄດ້ໄດດູດນ້ຳມາໃໝ່ ເພາະຕອນນັ້ນຍັງບໍ່ມີໃຜໃຊ້ໄດດູດນ້ຳຫຼາຍດອກ ສ່ວນຫຼາຍແມ່ນໄດ້ດຶງປ່ອມເອົາ ແມ່ຄົງອີ່ຕົນທີ່ແຕ່ລະມື້ຕ້ອງໄດ້ດຶງປ່ອມເລີກຕັ້ງສິບກວ່າແມັດ ມືຈົນແຕກຈົນໂພງໝົດ ແລະກໍມີຫຼາຍເທື່ອທີ່ຂ້ອຍເກືອບຕົກລົງໄປໃນນ້ຳສ້າງນັ້ນ ແມ່ເລີຍທ້ອນເງິນຊື້ໄດດູດນ້ຳມາໃຊ້.

ໃນຄ່ຳຄືນທີ່ງຽບສະຫງັດກໍມີສຽງນີ້ດັງຂຶ້ນປ໋າງ..! ຂ້ອຍສະເດີດຕື່ນທັງທີ່ຍັງຫຼັບຢູ່ພ້ອມກັບໄດ້ຍິນສຽງໝາຮ້ອງ ເອ໋ງໆໆໆ ຂ້ອຍອອກຈາກຫ້ອງນອນພ້ອມກັບໃຈທີ່ເຕັ້ນບໍ່ເປັນຈັງຫວະ ຕອນນັ້ນເກືອບທ່ຽງຄືນແລ້ວ ໄດ້ຍິນແມ່ເວົ້າກັບພໍ່ຢູ່ກ້ອງລ່າງເຮືອນແຕ່ຍິນບໍ່ຄັກວ່າ:

“ໂອ່ຍ! ຕາຍແລ້ວແມ່ນໃຜນໍ້ ໃຈຈືດໃຈດຳຍິງໄດ້ແມ່ນແຕ່ໝາ” ຂ້ອຍບໍ່ແນ່ໃຈໃນສິ່ງທີ່ໄດ້ຍິນ ຈຶ່ງຕັດສິນໃຈລົງຂັ້ນໄດໄປເບິ່ງ ພາບທີ່ຂ້ອຍເຫັນແມ່ນຄຳຮູ້ນອນຫາຍໃຈງາບໆຢູ່ກັບພື້ນ ຂົນສີຂາວໆກ່ານດຳປ່ຽນເປັນສີແດງຍ້ອນເລືອດ ຂ້ອຍຮີບແລ່ນເຂົ້າໄປຫາມັນທັງນ້ຳຕາກໍໄຫຼລົງຊະໆ.



“ແມ່ນໃຜຍິງມັນແມ່? ເຂົາຄືໃຈດຳແທ້ ເຂົາຍິງມັນເຮັດຫຍັງ? ມັນຊິຕາຍບໍ່ແມ່?” ຂ້ອຍທັງໄຫ້ທັງຖາມ.

”ມັນຖືກພວກຂະໂມຍທີ່ມາລັກໄດດູດນ້ຳຍິງ ໄດກະຍັງຖິ້ມປະໄວ້ເທິງປາກສ້າງຢູ່ ຄືຊິແມ່ນຍ້ອນຄຳຮູ້ນີ້ແຫຼະເທົ່າ ເຂົາຈຶ່ງຟ້າວໄປບໍ່ທັນເອົາ” ແມ່ຂ້ອຍຕອບທັງທີ່ຕາລາວເອງກໍມີນ້ຳໃສໆໂອບຢູ່ ຖ້າຕອນນັ້ນໄດ້ເອົາມັນໄປໂຮງໝໍກໍອາດຈະລອດ ແຕ່ກໍຄືວ່າຫັ້ນແຫຼະຕອນນັ້ນບ້ານເມືອງຍັງບໍ່ພັດທະນາຫຼາຍປານນີ້ ຍັງເປັນບ້ານນອກຂອກນາຢູ່ ຢ່າວ່າໂຮງໝໍສັດແຕ່ໂຮງໝໍຄົນກະຍັງຢູ່ໄກໆ ແຕ່ເຖິງມີກໍບໍ່ຮູ້ຂ້ອຍຈະມີເງິນພາມັນໄປບໍ່ ຄຶດມາລະນ້ຳຕາຕົກ ທັງອີ່ຕົນທັງຄຶດຄຽດໃຫ້ເຈົ້າຂອງ ມັນເປັນໝາຍັງຊ່ອຍຊີວິດຂ້ອຍໄດ້ ຂ້ອຍເປັນຄົນແຕ່ຊ່ອຍຫຍັງມັນບໍ່ໄດ້ເລີຍ ຂ້ອຍໄດ້ແຕ່ນັ່ງໄຫ້ ມືກໍຍ່ອງຢາໃບຫຍ້າຂິວທີ່ແມ່ເອົາມາໃຫ້ໂພະໃສ່ບາດໃຫ້ມັນ ເພື່ອບໍ່ໃຫ້ເລືອດໄຫຼອອກຫຼາຍ ມັນຖືກຍິງເຂົ້າກາງລຳໂຕ ຂ້ອຍສັງເກດເຫັນສາຍຕາຂອງມັນເສົ້າໆຄືຈັ່ງມີນ້ຳໄຫຼອອກມາ ມັນຄົງຈະເຈັບປວດຫຼາຍ ແວວຕາທີ່ມັນສື່ອອກມາມັນຄົງຈະຢາກບອກຂ້ອຍວ່າ:

“ເອື້ອຍບໍ່ຕ້ອງໄຫ້ມັນເຮັດຕາມໜ້າທີ່ຂອງມັນ” ຜ່ານໄປບໍ່ຮອດສິບນາທີມັນກໍໃຈຂາດເພາະທົນຄວາມເຈັບປວດຕໍ່ໄປບໍ່ໄຫວ ມັນຕາຍລົງຕໍ່ໜ້າຂ້ອຍ.

“ຕາຍແລ້ວແມ່ ຄຳຮູ້ຕາຍແລ້ວ ມັນບໍ່ຫາຍໃຈແລ້ວແມ່ເອີ່ຍ” ຂ້ອຍທັງຈົ່ມທັງໄຫ້ບໍ່ຈັກຂີ້ມູກນ້ຳຕາໄຫຼອອກມາຫຼາຍທໍ່ໆກັນ.

“ໄຫ້ອອກມາໃຫ້ໝົດສານ້ຳຕາຫັ້ນລູກເອີ່ຍ ໄຫ້ໃຫ້ກັບຄວາມຄຳຮູ້ ຄວາມກະຕັນຍູຂອງມັນ” ແມ່ຂ້ອຍບອກພ້ອມສຽງສັ່ນໆແກມສຽງສະອື້ນ. ໃນຄືນນັ້ນພໍ່ຂ້ອຍເປັນຄົນຂຸດຂຸມຝັງມັນໃຫ້ ຂ້ອຍເປັນຜູ້ເອົາດິນປົກຮ່າງທີ່ໄຮ້ວິນຍານຂອງມັນ ຂ້ອຍສັນຍາກັບໂຕເອງຕໍ່ຂຸມຝັງຄຳຮູ້ວ່າ ”ຊິບໍ່ຕີບໍ່ທຳຮ້າຍໝາແມວອີກເລີຍໃນຊີວິດນີ້”.

ອາທິດໜຶ່ງຜ່ານໄປ ຫຼັງຈາກທີ່ຂ້ອຍເລີກໂຮງຮຽນກັບເມືອເຮືອນກໍເຫັນໝານ້ອຍສອງໂຕ ແລ່ນໄລ່ຢອກກັນຢູ່ກາງເດີ່ນຫຍ້າໜ້າບ້ານ ຈັກແມ່ນແມ່ເອົາມາແຕ່ໃສຂ້ອຍຕັ້ງຊື່ໃຫ້ມັນວ່າ ”ກໍເຂົ້າ ກັບ ກໍກ້າ” ແຕ່ກໍໜ້າເສຍດາຍທີ່ພວກ

ມັນຢູ່ນຳຂ້ອຍໄດ້ພຽງ ๓-๔ ປີ ພວກມັນອອກໄປຫຼິ້ນແລ້ວບໍ່ກັບມາເຮືອນ ຈັກຊິເປັນຊິຕາຍຈັ່ງໃດກໍບໍ່ຮູ້ ອອກໄປຊອກຢູ່ໃສກໍບໍ່ເຫັນ ແຕ່ຍັງດີທີ່ມັນໄດ້ອອກລູກໄວ້ໃຫ້ລ້ຽງແທນໂຕມັນກ່ອນ ກໍແມ່ນພໍ່ແມ່ ລ່ອງກ່ອງ ກັບຢ່ອງແຢ່ງຫັ້ນລະ.

"ເປັນຕາອີ່ຕົນເນາະ ສົມພໍເຈົ້າຈຶ່ງຮັກໝາຫຼາຍ ຂ້ອຍເອງກໍຫາແຕ່ຮູ້ມື້ນີ້ໃດ່ນິ" ທັດເວົ້າພ້ອມທັງຍື່ມືມາປ່າຍແກ້ມຂ້ອຍເພື່ອເຊັດນ້ຳຕາທີ່ພວມໄຫຼອອກມາ.

"ເອົາເປັນວ່າອາທິດນີ້ເຮົາໄປຊຽນບົດລາຍງານຢູ່ບ້ານແພງເນາະ ຊິໄດ້ເຮັດຊຸບຜັກ ກັບແກງໜໍ່ໄມ້ໄປເພື່ອບັກບຸນເຫຼືອນຳເລີຍ" ຈັນປຸ່ງນເລື່ອງລົມເມື່ອເຫັນນ້ຳຕາຂ້ອຍໄຫຼບໍ່ເຊົາ.

"ຊັ້ນອ້າຍຂໍໄປນຳເດີບໍ່ໄດ້ໄປຫຼິ້ນບ້ານແພງຈັກເທື່ອຕາງໄປຢາມວ່າທີ່ພໍ່ເຖົ້າແມ່ເຖົ້າອ້າຍໃນອະນາຄົດເລີຍ" ອ້າຍກັນເວົ້າພ້ອມສີໜ້າອາຍໆ.

"ໄດ້ຊິເປັນຫຍັງ ແຕ່ຕ້ອງໃສ່ເກີບຄູ່ເກົ່າໄປໃດ່ ຈັ່ງຊິບໍ່ໄດ້ຊື້ຄູ່ໃໝ່ ນ້ອງບໍ່ຊື້ແທນເດະ" ຂ້ອຍເວົ້າແກມສຽງຫົວເລັກໜ້ອຍ.

..............

"ບຸນເຫຼືອເທົ່າຫຍັງ... ລ່ອງກ່ອງ ຢ່ອງແຢ່ງ ໄປໃສແລ້ວເອົາເກີບແມ່ມາ, ເອົາໄປຫຼິ້ນຢູ່ໃສ, ເອົາມາໄວ ແມ່ນໃຜມາຫັ້ນໄປເບິ່ງດູ, ເກີບເດຢູ່ໃສ ໄປເອົາມາໄວໆ ເວົ້າລະຍັງແກວ່ງຫາງດິກໆ ມືນຕາມອງໆຢູ່ນີ້ເບາະ ຕີຊ້ຳສາບໍ່ນິ ຮຶ..! ຄືພາກັນດື້ແທ້" ຂ້ອຍຮ້າຍໃສ່ໝາເມື່ອລົງຂັ້ນໄດມາບໍ່ເຫັນເກີບ.

"ເວົ້າຄືຊິກ້າຕີມັນນີ້ເນາະ" ທັດເວົ້າເມື່ອຂັບລົດມາຈອດຢູ່ໜ້າບ້ານພ້ອມອ້າຍກັນກໍນຳຫຼັງມາຕິດໆ.

"ພໍ່ແມ່ບໍ່ຢູ່ບໍ?"ອ້າຍກັນເອີ່ຍຖາມເມື່ອລົງລົດມາໃນມືຖືຖົງໝາກກ້ຽງຍື່ນໃຫ້ຂ້ອຍ.

"ບໍ່ຢູ່ ພວກເພິ່ນໄປສູ່ຂວັນບ້ານພີ່ນ້ອງ" ຂ້ອຍຕອບອ້າຍກັນກ່ອນຈະເວົ້າຕໍ່:

"ພວກເຮົາໄປນັ່ງຢູ່ກ້ອງຮົ່ມຕົ້ນມ່ວງພຸ້ນເນາະຈັ່ງເຢັນ. ນັ່ງຖ້າຢູ່ນີ້ກ່ອນເດີ ຊິໄປເອົານ້ຳມາໃຫ້ກິນ".

แล้ວແມ່ນເອົາຫຍັງມານຳຫັ້ນຄືແກັດໃຫຍ່ແທ້" ຂ້ອຍຖາມເມື່ອໄປເອົານ້ຳມາ ເຫັນແກັດບັກໃຫຍ່ວາງຢູ່ຂ້າງໆອ້າຍກັນ.



"ຢາກຮູ້ນ້ອງກໍລອງເປີດເບິ່ງແມ" ອ້າຍກັນເວົ້າພ້ອມຍື່ນແກັດນັ້ນໃຫ້ ຂ້ອຍຕ້ອງຍິ້ມອອກມາໂດຍບໍ່ຮູ້ໂຕ ເມື່ອໄດ້ເຫັນສິ່ງທີ່ຢູ່ໃນແກັດນັ້ນ ພ້ອມກັບມີສຽງ ຮ່ອງໆອອກມານຳ ເປັນໝານ້ອຍໂຕໜຶ່ງ ຂົນຍາວໆສີນ້ຳຕານ ຫາງສັ້ນໆ ຫູຕູບໆ ຕານ້ອຍໆມົນໆ ແລະມີສາຍຫ້ອຍຄໍທີ່ມີຂໍ້ຄວາມຂຽນສັ້ນໆໄວ້ວ່າ: «ຕົ້ນຮັກ»

"ມັນຊື່ຕົ້ນຮັກບໍ່? ເປັນຕາຮັກເນາະ" ຂ້ອຍຖາມເມື່ອອ່ານຂໍ້ຄວາມນັ້ນ.

"ແມ່ນແລ້ວ ແລະອ້າຍກໍຢາກເອົາຕົ້ນຮັກຂອງອ້າຍມາໃຫ້ນ້ອງດູແລ ນ້ອງຊິວ່າຈັ່ງໃດ?" ອ້າຍກັນຖາມພ້ອມກັບນ້ຳສຽງອາຍໆ.

"ຄົງຈະບໍ່ໄດ້ດອກ ນ້ອງຢ້ານຈະດູແລຕົ້ນຮັກຂອງອ້າຍບໍ່ໄດ້ດີ ເພາະນ້ອງກໍມີໝາຫຼາຍໂຕຢູ່ແລ້ວ" ອ້າຍກັນເຮັດສີໜ້າເສົ້າໆ ຄືຄົນໝົດຫວັງ ແລະປິ່ນໜ້າໜີກຳລັງຈະລຸກອອກໄປ.

"ແຕ່ຖ້າອ້າຍຈະຊ່ອຍນ້ອງດູແລຕົ້ນຮັກນີ້ໄປນຳກັນ ນ້ອງກໍຍິນດີຈະຮັບມັນໄວ້" ຂ້ອຍເວົ້າຕໍ່ດ້ວຍສຽງຄ່ອຍໆ. ອ້າຍກັນອວ່າຍໜ້າກັບມາ ພ້ອມຮອຍຍິ້ມດ້ວຍສີໜ້າທ່າທາງດີໃຈກັບສິ່ງທີ່ໄດ້ຍິນ ພ້ອມເວົ້າວ່າ:

"ແນ່ນອນ ອ້າຍຈະຕ້ອງຊ່ອຍນ້ອງດູແລຕົ້ນຮັກຂອງເຮົາໄປນຳກັນໃຫ້ມັນເຕີບໃຫຍ່ ແລະງົດງາມທີ່ສຸດ".

"ອາແຮ່ມ...! ຢ່າລືມເດີວ່ານັ່ງຢູ່ນີ້ບໍ່ໄດ້ມີແຕ່ພວກເຈົ້າສອງຄົນໃດ່" ທັດເວົ້າພ້ອມກັບສຽງຫົວດັງຂຶ້ນ.



ຄວາມຮັກ ຄວາມຖືກຕ້ອງ ເງິນທອງ ຫຼືອຸດົມການ
ຖ້າຂ້ອຍເລືອກ ແຕ່ຄວາມຮັກ ຫຼືຄວາມສຸກສະບາຍ
ໃນມື້ນັ້ນ ເຮີ່ຍ..! ບໍ່ຢາກຈະຄຶດເລີຍວ່າ ຂ້ອຍຈະໄດ້ໃສ່ຊຸດ
ສີເທົາ ສຸດແສນສະງ່າມາຢືນສອນທີ່ມີນັກຮຽນນ້ອຍສຸດ
ແສນຈະໜ້າຮັກມານັ່ງຮຽນແບບນີ້ບໍ່ ຫຼືຈະໄດ້ໄປສອນ
ໃຫ້ຍຸງໃນມຸ້ງສາຍບົວກັນແທ້...

໘໖ ເມສາ ໘໐໑໖





# ຟ້າຫຼັງຝົນ ຂອງ ຄົນຫຼັງເຂົາ

“ຫັ້ນເດ ເພັດ ມາພໍດີ ມາໆ ມານັ່ງພີ້” ພໍ່ແມ່ກັບອ້າຍພູຜາກຳລັງນັ່ງລົມກັນຢູ່ ແລະ
ເປັນສຽງແມ່ທີ່ເອີ້ນບອກເມື່ອເຫັນຂ້ອຍກັບມາຮອດເຮືອນ ເບິ່ງຈາກສີໜ້າທີ່ຍິ້ມ
ແຍ້ມແລ້ວ ພໍເດົາໄດ້ວ່າຄົງບໍ່ມີເລື່ອງຫຍັງຮ້າຍແຮງດອກ. ແຕ່ບໍ່ຮູ້ວ່າຈະດີໃຈ
ຫຼືຕົກໃຈກັນແທ້ເມື່ອໄດ້ຍິນແມ່ບອກວ່າ:

“ອ້າຍພູຜາ ເພິ່ນມາລົມກັບພໍ່ແມ່ ວ່າຊິເອົາເຖົ້າແກ່ລຸງຕາມາສູ່ຂໍລູກ ແລ້ວກໍຈະ
ແຕ່ງເລີຍຕາມຮີດຄອງ” ເຈົ້າເປັນທະຫານບ້ານແທ້ຢູ່ຊຽງຂວາງ ແຕ່ຖືກຍ້າຍມາ
ຮັບປະຈຳການຢູ່ວຽງຈັນ ຄົງເພາະຢູ່ໃກ້ກັບບ້ານຂ້ອຍ ເຈົ້າຈຶ່ງໄດ້ມາຜູກມິດຮັກ
ແພງກັບຄອບຄົວຂ້ອຍ ແລະກໍເປັນຈຸດເລີ່ມຕົ້ນລະຫວ່າງຮັກເຮົາ.

“ນ້ອງຍັງບໍ່ພ້ອມ ນ້ອງຢາກສອນກ່ອນ” ຂ້ອຍຕອບພ້ອມແນມເບິ່ງໜ້າເຈົ້າດ້ວຍ
ແວວຕາທີ່ເສົ້າແຕ່ໃນໃຈອອກຮ້ອນຮົນຄຶດເຫັນແຕ່ໜ້າອີ່ຕາເຖົ້າຫົວລ້ານ ແລະ
ຄຳເວົ້າທີ່ເຮັດໃຫ້ຂ້ອຍບໍ່ດີໃຈກັບຂ່າວດີນີ້.

“ບໍ່ມີບັນຫາ” ເຈົ້າຕອບພ້ອມເວົ້າຕໍ່ “ຄອບຄົວອ້າຍກໍມີໂຮງຮຽນ ຖ້ານ້ອງຢາກໄປ
ສອນຢູ່ຊຽງຂວາງກໍໄດ້ ຫຼືບໍ່ກໍສອນຢູ່ແຖວບ້ານເຮົານີ້ເອົາ”

“ບໍ່ນ້ອງບໍ່ໄດ້ຢາກສອນຢູ່ໂຮງຮຽນທີ່ມີພ້ອມທຸກຢ່າງທັງຄູສອນຕຶກອາຄານຮຽນ
ຫຼັງງາມໆ ມີເຄື່ອງມືອຳນວຍຄວາມສະດວກທຸກຢ່າງແນວນັ້ນ ແຕ່ນ້ອງຢາກໄປ
ສອນຢູ່ຊົນນະບົດເຂດຫ່າງໄກຄວາມຈະເລີນ ເດັກນ້ອຍເຫຼົ່ານັ້ນເປັນຕາອີ່ຕົນໃດ່
ອ້າຍ ໝົດບ້ານມີແຕ່ໂຮງຮຽນຫຼັງດຽວພໍແຕ່ກັ້ງແດດ ຍາມຝົນຕ້ອງໄດ້ພາກັນ
ແລ່ນເຂົ້າແຈນັ້ນແຈນີ້ເພື່ອຫຼີກເມັດຝົນຍ້ອນຫຼັງຄາຮົ່ວ ນີ້ຍັງບໍ່ນັບທັງຝາແອ້ມທີ່



ຖືກປວກກິນໄປແລ້ວກາຍເຄິ່ງ ໂຕະຕັ່ງເກົ່າໆທີ່ໂຍະເຍະ ກະດານທີ່ຝາມື ບໍ່ມີ
ຮອດຄູທີ່ຈະໄປສອນຊໍ້າ” ນີ້ຄືເຫດຜົນທີ່ຂ້ອຍຍົກຂຶ້ນມາເວົ້າເພື່ອຊີ້ແຈງໃຫ້ທຸກ
ຄົນເຂົ້າໃຈ ແລະເຫັນເຖິງຈຸດປະສົງຂອງຂ້ອຍ.

“ກະຮູ້ຢູ່ວ່າມັນກັນດານປານນັ້ນ ເຫດບ້ານການເມືອງດຽວນີ້ກໍບໍ່ສະຫງົບ ຖ້າໄປ
ພຸ້ນເງິນເດືອນກໍບໍ່ໄດ້ ສອນລ້າໆເສຍເຫື່ອເສຍແຮງຊື່ໆ ແລ້ວລູກຊິໄປເຮັດຫຍັງ
ຊິພາຕົນເອງໄປທຸກເຮັດຫຍັງ?” ພໍ່ຂ້ອຍເວົ້າຂຶ້ນ.

“ມັນບໍ່ແມ່ນຄວາມທຸກແຕ່ຄືຄວາມສຸກສຸກທີ່ໄດ້ສອນສອນໃຫ້ຄົນທີ່ບໍ່ມີໂອກາດ
ຈະໄດ້ຮຽນສຸກທີ່ຈະໄດ້ສ້າງຄົນໃຫ້ເປັນຄົນດີບໍ່ແມ່ນສ້າງໃຫ້ເປັນຄົນເກັ່ງເພາະ
ສັງຄົມທຸກມື້ນີ້ມີແຕ່ຄົນເກັ່ງທີ່ເປັນເຈົ້າເປັນນາຍ ບໍ່ວ່າແຕ່ເໜັງຫຍັງໜ້ອຍໜຶ່ງກໍ
ແມ່ນເງິນ ເງິນ... ແລ້ວກໍເງິນ ແລ້ວຄົນບໍ່ມີເງິນເດແມ່ນແຕ່ຈະເຂົ້າຮຽນເສັງໄດ້
ຍັງບໍ່ໄດ້ເຂົ້າກະມີເຂົ້າແລ້ວຮຽນເກັ່ງຢູ່ແຕ່ເສັງບໍ່ຜ່ານ ເສັງຜ່ານແຕ່ຍັງບໍ່ຈົບຮຽນ
ຈົບແລ້ວກໍບໍ່ໄດ້ເຮັດວຽກ ບັນຫາເຫຼົ່ານີ້ມັນເປັນຍ້ອນຫຍັງຖ້າບໍ່ຍ້ອນຄົນເກັ່ງ
ພວກນັ້ນ ເກັ່ງແຕ່ກອບໂກຍຜົນປະໂຫຍດໃສ່ຕົວ ເກັ່ງແຕ່ເອົາປຽບຄົນອື່ນຈົນລືມ
ຮອດໜ້າທີ່ ແລະຈັນຍາບັນຂອງຕົນເອງ” ຂ້ອຍຕອບດ້ວຍນ້ຳສຽງທີ່ໜັກແໜ້ນ.

“ນ້ອງເວົ້າມາມັນກະຖືກຢູ່ ແຕ່ນ້ອງຕ້ອງເຂົ້າໃຈ ທຸກມື້ນີ້ບໍ່ມີໃຜກິນຈັນຍາບັນ
ຕາງເຂົ້າໄດ້ດອກ” ເຈົ້າເວົ້າຂຶ້ນດ້ວຍນ້ຳສຽງຊົງບໍ່ພໍໃຈປານໃດ ຂ້ອຍແນມເບິ່ງ
ໜ້າເຈົ້າ ແລະພໍ່ແມ່ທີ່ກຳລັງເຄັ່ງຄຽດຢູ່ເລັກໜ້ອຍກ່ອນຈະຕອບໄປວ່າ:

“ເລື່ອງແຕ່ງງານຂໍເວລາຄຶດເບິ່ງກ່ອນແລ້ວຊິໃຫ້ຄຳຕອບອີກເທື່ອໜຶ່ງ” ຂ້ອຍຈົບ
ການສົນທະນາໄວ້ພຽງທີ່ຫັ້ນກ່ອນຈະຍ່າງເຂົ້າໄປໃນຫ້ອງ. ເຫດການທີ່ເກີດຂຶ້ນ
ເຮັດໃຫ້ຂ້ອຍຄຶດບໍ່ຕົກແທ້ໆ ທັງແຄ້ນໃຈກັບຄຳເວົ້າຂອງອີ່ຕານັ້ນ ຢູ່ຫ້ອງການ
ຕອນທີ່ໄປຍື່ນໃບສະໝັກເຮັດວຽກ ທີ່ເວົ້າດູໝິ່ນກຽດສັກສີຂອງລູກແມ່ຍິງ ຄຶດ
ຈະໃຊ້ເງິນຊື້ຂ້ອຍໃຫ້ຍອມເປັນບ່ອນສະໜອງກິເລດຕັນຫາຂອງມັນ ແລ້ວມັນ
ຈະຊ່ອຍເຫຼືອຂ້ອຍທຸກຢ່າງ, ແລ້ວຍັງເລື່ອງແຕ່ງງານນີ້ໃຫ້ຄຶດອີກ.

ຊິເຮັດຈັ່ງໃດດີທາງໜຶ່ງກໍຮັກເທີດທູນສຸດຫົວໃຈອີກທາງກໍສັດທາສຸດຊີ
ວິດໃນເມື່ອຕະຫຼອດເວລາທີ່ຮູ້ຈັກກັນມາຫຼາຍປີເຈົ້າກໍດີກັບຂ້ອຍຄອຍຈັບມືຢືນ



ຄຽງຂ້າງເວລາທີ່ພົ້ບັນຫາ ຄອຍຊ່ອຍເຫຼືອຂ້ອຍແລະຄອບຄົວມາໂດຍຕະຫຼອດ
ໃນຕອນທີ່ແມ່ຂ້ອຍບໍ່ສະບາຍນອນປິ່ນປົວຢູ່ໂຮງໝໍຫຼາຍມື້ ກໍມີແຕ່ເຈົ້າທີ່ອາສາ
ອອກຄ່າໃຊ້ຈ່າຍໃຫ້ທັງໝົດ ເລື່ອງວຽກໄຮການນາເຈົ້າກໍຄອຍຊ່ອຍມາໂດຍບໍ່
ເອີ່ຍປາກຈົ່ມພໍຄຳ ເຈົ້າທັງຮັກ ແລະຫວັງດີກັບຂ້ອຍສະເໝີ ແລ້ວຂ້ອຍຊິຖິ້ມເຈົ້າ
ໄປມັນຊິເປັນບໍ່? ຂ້ອຍຊຸ້ນຄຶດຢູ່ຫຼາຍມື້ແຕ່ກໍຍັງຕັດສິນໃຈບໍ່ໄດ້.

“ຄຶດເລື່ອງນັ້ນຢູ່ບໍ່?” ແມ່ເອີ່ຍຖາມ ເມື່ອເຫັນຂ້ອຍນັ່ງມິດຢູ່ຄົນດຽວ ຂ້ອຍງຶກຫົວ
ນ້ອມຮັບແທນຄຳຕອບຂອງຄຳຖາມນັ້ນ.

“ແມ່ສັງເກດມາແຕ່ມື້ນັ້ນແລ້ວ ເຫັນລູກເປັນກັງວົນເຂົ້າປາກະກິນໜ້ອຍດຽວ ຟັງ
ເດີ ບໍ່ມີພໍ່ແມ່ຄົນໃດຢາກເຫັນລູກຕົນລຳບາກດອກ ມີແຕ່ຢາກເຫັນລູກຢູ່ສຸກສະ
ບາຍໄດ້ເປັນເຈົ້າເປັນນາຍບໍ່ຢາກໃຫ້ລຳບາກຄືພໍ່ແມ່ເຮັດໄຮ່ເຮັດນາຕາກແດດ
ໜ້າແຫຼ້ໜ້າດຳ ແຕ່ຖ້າມັນເຮັດໃຫ້ລູກຕ້ອງອຸກໃຈບໍ່ມີຄວາມສຸກແນວນີ້ ພໍ່ແມ່ກໍ
ຈະບໍ່ຫ້າມຖ້າລູກຈະໄປສອນຢູ່ພຸ້ນທາງນີ້ພໍ່ແມ່ກໍຍັງມີເອື້ອຍແລະພີ່ນ້ອງທີ່ຢູ່ນຳ
ແຕ່ແມ່ຢາກໃຫ້ລູກຄຶດຕັດສິນໃຈດີໆອ້າຍພູຜາລາວເອງກໍເປັນຄົນດີສາມາດເບິ່ງ
ແຍງລູກໄດ້. ເອົາລະ..! ໄປນອນສາມັນເດິກຫຼາຍແລ້ວ” ແມ່ບອກທັງຕົບບ່າຂ້ອຍ
ຄ່ອຍໆກ່ອນຈະຍ່າງກັບເຂົ້າໄປໃນເຮືອນ.

ອາກາດແຈ່ມໃສຂອງເຊົ້າມື້ໃໝ່ຂ້ອຍຕື່ນຂຶ້ນມາພ້ອມກັບໄດ້ຮັບຂ່າວດີ
ຄືທາງໂຮງຮຽນແຈ້ງມາບອກວ່າ ຂ້ອຍມີລາຍຊື່ໄດ້ໄປສອນຢູ່ໄຊສົມບູນຕາມ
ຄວາມຕັ້ງໃຈແລ້ວ ແຕ່ວ່າຂ້ອຍຊິເລືອກທາງໃດ ຖ້າເລືອກທີ່ຈະແຕ່ງງານຄົງບໍ່ມີ
ໂອກາດທີ່ຈະໄດ້ໄປສອນ ແລ້ວເດັກນ້ອຍເຫຼົ່ານັ້ນເດ ຕ້ອງລໍຖ້າຮອດມື້ໃດເຖິງ
ຈະໄດ້ຮັບການສຶກສາທີ່ດີຂຶ້ນ ແຕ່ຖ້າເລືອກທີ່ຈະໄປແລ້ວຄົນຮັກ ຄອບຄົວເດ
ຂ້ອຍຊິຖິ້ມພວກເຂົາໄປເປັນບໍ່? ຂ້ອຍນັ່ງຄຶດທົບທວນເລື່ອງລາວໄປມາຢູ່ດົນ
ເຕີບແລ້ວກໍເຫັນລົດເຈົ້າມາຈອດຢູ່ໜ້າບ້ານພໍດີ.

“ອ້າຍມາເອົາຄຳຕອບຈາກນ້ອງ” ຂ້ອຍຍິ້ມກ່ອນຈະຕອບໄປວ່າ:

“ນ້ອງຈະແຕ່ງງານກັບອ້າຍ” ເຈົ້າຍິ້ມພ້ອມສີໜ້າທີ່ດີໃຈໃນຄຳຕອບ.

“ແຕ່... ນ້ອງຈະແຕ່ງງານກັບອ້າຍ ຖ້າອ້າຍຍອມໃຫ້ນ້ອງໄປສອນຢູ່ພຸ້ນກ່ອນ”



ເຈົ້າປ່ຽນສີໜ້າທັນທີ ເມື່ອຂ້ອຍເວົ້າຈົບລົງ.

“ອ້າຍບໍ່ເຂົ້າໃຈວ່ານ້ອງຈະໄປເຮັດຫຍັງສອນຢູ່ພີ້ຢູ່ກັບອ້າຍອ້າຍມີທັງເງິນທອງ
ລົດ ເຮືອນຊານ ພ້ອມໜ້າຕາໃນສັງຄົມ ອ້າຍມີໃຫ້ໄດ້ຫຼາຍກ່ອນທີ່ນ້ອງຈະໄດ້ຢູ່
ພຸ້ນຊໍ້າ ພຽງແຕ່ເຮົາແຕ່ງງານກັນອ້າຍໃຫ້ນ້ອງໄດ້ທຸກຢ່າງ”.

ຂ້ອຍຕົກສະເງີ້ໄປຊົ່ວຂະນະ ໃຜຈະຄຶດວ່າຊິໄດ້ຍິນຄຳເວົ້າແບບນີ້ອອກ
ຈາກປາກຄົນຮັກຂ້ອຍເອງ ເຊິ່ງມັນບໍ່ຕ່າງຫຍັງກັບຄຳເວົ້າຂອງອີ່ຕາເຖົ້າໃນຫ້ອງ
ການມື້ນັ້ນ ແຕ່ຂ້ອຍກໍພະຍາຍາມບອກກັບໃຈຕົນວ່າ ຄົງເພາະເຈົ້າໂມໂຫຈຶ່ງ
ເວົ້າອອກມາແບບນັ້ນຄຶດແບບນີ້ແລ້ວເຮັດໃຫ້ໃຈເຢັນລົງແດ່ກ່ອນຈະເວົ້າອອກ
ໄປວ່າ:

”ນ້ອງຂໍເວລາອ້າຍສາມປີໃຫ້ນ້ອງໄດ້ໄປສອນຢູ່ພຸ້ນ ຖ້າຊ່ວງເວລາທີ່ຫ່າງກັນນີ້
ເຮົາສອງຄົນຍັງຄືເກົ່າ ນ້ອງກໍພ້ອມທີ່ຈະກັບມາແຕ່ງງານ ແລະຢູ່ພີ້ກັບອ້າຍ”

“ປີດຽວ ອ້າຍໃຫ້ນ້ອງໄດ້ພຽງປີດຽວ ອ້າຍເຂົ້າໃຈໃນຄວາມຕັ້ງໃຈຂອງນ້ອງ ແຕ່
ອ້າຍຢາກໃຫ້ນ້ອງຮູ້ໄວ້ວ່າ ອ້າຍກໍຕ້ອງການໃຫ້ນ້ອງມາເປັນຄູສອນໃຫ້ລູກເຮົາ
ໃນອະນາຄົດເຊັ່ນກັນ ອ້າຍທັງຮັກ ທັງຫວງ ແລະກໍຫ່ວງນ້ອງຫຼາຍອ້າຍຄຶດວ່າ
ຊິໄດ້ມາຟັງຂ່າວດີຈາກນ້ອງແຕ່ກໍບໍ່ເລີຍ” ເຈົ້າເວົ້າແລ້ວກໍອອກເມືອ ບໍ່ມີຄຳເວົ້າ
ໃດໆອອກຈາກປາກຂ້ອຍ ນອກຈາກນ້ຳຕາທີ່ໄຫຼອາບແກ້ມເທົ່ານັ້ນ.

ໃນທີ່ສຸດຂ້ອຍກໍໄດ້ມາສຳຜັດກັບຊີວິດການເປັນຢູ່ຂອງຄົນຊົນນະບົດ
ດ້ວຍຕົວເອງ ແລະກໍຄຶດບໍ່ເຖິງວ່າຈະຕ້ອງໄດ້ພົ້ກັບບັນຫາແບບນີ້.

“ບໍ່ຈຳເປັນຕ້ອງຮຽນກໍໄດ້ດອກ ຊິຮຽນໄປເຮັດຫຍັງເສຍເວລາຊື່ໆ ພຽງແຕ່ເຮັດ
ວຽກໃຫ້ເກັ່ງ ມີເຂົ້າກິນ ມີເຮືອນຢູ່ກໍພໍແລ້ວ, ເບິ່ງແຕ່ພໍ່ແມ່ປູ່ຍ່າຕາຍາຍບໍ່ຮູ້ໜັງ
ສືພໍໂຕຍັງລ້ຽງລູກເປັນສິບໃຫ້ໃຫຍ່ໄດ້ ຕາມດີຜູ້ຍິງໃຫຍ່ມາກໍເອົາຜົວ ໃຫ້ຜົວລ້ຽງ
ກໍແລ້ວບໍ່ຈຳເປັນຕ້ອງຮຽນ” ເປັນຄຳເວົ້າຂອງພໍ່ແມ່ທີ່ສັ່ງສອນລູກຫຼານເຂົາມາ
ຕັ້ງແຕ່ຍັງນ້ອຍ. ໄດ້ຍິນແນວນີ້ເທື່ອໃດຄືຈັ່ງວ່າໃຈຊິຂາດ ຮ່າງກາຍບໍ່ມີແຮງ ຄືກຳ
ລັງນັ່ງເບິ່ງອຸທົກກະໄພພັດເອົາເຮືອນຊານບ້ານຊ່ອງຕົນເອງໄປເທື່ອລະໜ້ອຍ
ໂດຍທີ່ຕົນເຮັດຫຍັງບໍ່ໄດ້ເລີຍ.

ຕະຫຼອດເວລາທີ່ຢູ່ຫັ້ນຂ້ອຍຕັ້ງໃຈສິດສອນ ພະຍາຍາມປັບປຸ່ງຄວາມຄິດຂອງພວກເຂົາເທື່ອລະໜ້ອຍ ໂດຍເນັ້ນໃຫ້ເຂົາເຫັນເຖິງຄວາມສຳຄັນຂອງການສຶກສາ ທັງເອົາໃຈໃສ່ເບິ່ງແຍງດູແລຊ່ອຍເຫຼືອບໍ່ວ່າຈະເປັນວຽກໄຮ່ການນາ ຂ້ອຍເຮັດເທົ່າທີ່ຄົນໆໜຶ່ງຈະເຮັດໄດ້ ເພື່ອແລກກັບຄວາມໄວ້ເນື້ອເຊື່ອໃຈຂອງເຂົາເຈົ້າ ຈົນປະຊາຊົນຈຳນວນຫຼາຍເຫັນດີຍອມໃຫ້ລູກຫຼານເຂົາເຂົ້າໂຮງຮຽນ ແຕ່ເວລາໜຶ່ງປີຜ່ານໄປຢ່າງໄວວາ ໃກ້ເຖິງເວລາທີ່ຂ້ອຍຕ້ອງໄດ້ກັບໄປແຕ່ງງານ ແລະບໍ່ຮູ້ວ່າຖ້າໄປແລ້ວຈະມີໂອກາດໄດ້ກັບມາອີກ ຫຼືບໍ່? ແມ່ນຢູ່ວ່າອ້າຍພູຜາລາວຮັກ ແລະຈິງໃຈກັບຂ້ອຍແທ້ ແຕ່ຖ້າໄປແລ້ວພວກເຂົາເຫຼົ່ານີ້ຈະເປັນແນວໃດ? ພວກເຂົາຍັງຈະຄຶດຢາກຮຽນຢູ່ອີກບໍ່? ແລ້ວຈະມີໃຜທີ່ຍອມເສຍສະຫຼະຄວາມສຸກສະບາຍໃນເມືອງໃຫຍ່ມາສອນຢູ່ພີ້? ຖ້າຂ້ອຍໄປແລ້ວພວກເຂົາຄົງຄຶດວ່າສິ່ງທີ່ຂ້ອຍພະຍາຍາມເຮັດມານັ້ນເປັນການຂີ້ຕົວະ ພວກເຂົາຄົງບໍ່ໃຫ້ຄວາມສຳຄັນກັບການສຶກສາອີກແທ້ໆ ເດັກນ້ອຍກໍຄົງຂາດໂອກາດທີ່ຈະໄດ້ຮ່ຳຮຽນ ຢູ່ແຕ່ໃນຮູນ້ອຍໆທີ່ໄຮ້ແສງສະຫວ່າງ ເຂົາຄົງຄຶດພຽງວ່າໃຫຍ່ມາກໍຈັບຄາດໄຖໄຮ່ໄຖນາກໍແລ້ວຄືຄຳທີ່ພໍ່ແມ່ເວົ້າ ແລະພາເຮັດມາ. ຄຶດມາແລ້ວກໍອຸກໃຈຈະເຮັດແນວໃດດີ ຖ້າບໍ່ກັບໄປຄວາມສຳພັນກັບອ້າຍພູຜາກໍຄົງຕ້ອງຈົບລົງ ແຕ່ຖ້າໄປແສງສະຫວ່າງທີ່ເຍືອງທາງໃຫ້ເດັກນ້ອຍເຫຼົ່ານີ້ກໍຄົງຕ້ອງມອດລົງເຊັ່ນກັນ ທາງໜຶ່ງກໍສຸດທີ່ຮັກ ອີກທາງກໍສຸດທີ່ຫ່ວງ ເປັນຫຍັງຄືເປັນຈັ່ງຊີ້ນໍ້ ຈັ່ງແມ່ນຝົນຕົກບໍ່ທົ່ວຟ້າແທ້ໆ ເວົ້າແລ້ວກໍພໍດີເຈົ້າໂທລະສັບມາຫາ ແລ້ວນ້ຳຕາຂ້ອຍກໍໄຫຼລົງຊະໆ ເມື່ອໄດ້ຍິນເຈົ້າບອກວ່າ:

**"ເພັດ... ອາທິດໜ້າອ້າຍໄດ້ຍ້າຍໄປຮັບປະຈຳການຢູ່ເຂດພິເສດໄຊສົມບູນ..."**





**ງູເຫົ່າມີພິດຮ້າຍແຮງ ສາມາດສັງຫານຊີວິດຄົນເຮົາໄດ້ ພຽງແຕ່ພິດນັ້ນເຂົ້າສູ່ຮ່າງກາຍຂອງເຮົາ ແຕ່ດ້ວຍເຫດໃດງູເຫົ່າເຖິງບໍ່ຕາຍ ໃນເມື່ອພິດນັ້ນກໍມີຢູ່ໃນໂຕມັນ...**

**໑໑ ສິງຫາ ໒໐໑໗**



# ພິດງູ

ກາງສາຍຝົນຍາມຄ່ຳຄືນທີ່ປົກຄຸມດ້ວຍຄວາມໜາວເຢັນ ຍິງສາວຄົນໜຶ່ງກຳລັງຮ້ອງໄຫ້ຈົມຢູ່ກັບນ້ຳຕາແຫ່ງຄວາມທຸກຢືນຢູ່ແຄມໜອງໃຫຍ່ຂ້າງບ້ານ ຂາທັງສອງຄ່ອຍໆກ້າວລົງໄປຫາໜອງເທື່ອລະກ້າວ ດັ່ງຄົນໄຮ້ສະຕິຄົງຫວັງທີ່ຈະຈົບຊີວິດລົງຢູ່ໜອງນັ້ນ ລາວຍ່າງລົງໄປໃນນ້ຳເລິກເຂົ່າ ເລິກເຂົ້າຮອດແອວແລ້ວຫຼຸບລົງຮອດບ່າ ແລະຄ່ອຍໆຈົມລົງໆຮອດພຽງຄໍ ແລ້ວກໍ... ມີຊາຍໄວກາງຄົນຜ່ານມາພໍ້ພໍດີ ແລ້ວລົງໄປດຶງເອົາລາວຂຶ້ນມາພັກຢູ່ເທິງຕູບນ້ອຍແຄມໜອງກ່ອນທີ່ຊາຍຄົນນັ້ນຈະຖາມວ່າ:

"ເປັນຫຍັງເຈົ້າເຖິງຄຶດທຳຮ້າຍຕົນເອງແນວນີ້?".

"ຊີວິດຂ້ອຍບໍ່ມີຄຸນຄ່າອີກຕໍ່ໄປບໍ່ມີໃຜຮັກອີກແລ້ວ ແມ່ນແຕ່ຊາຍຄົນທີ່ຂ້ອຍຮັກດັ່ງແກ້ວຕາດວງໃຈກໍຖິ້ມຂ້ອຍໄປມີຜູ້ຍິງຄົນອື່ນ. ເຈົ້າຈະຊ່ອຍຂ້ອຍຂຶ້ນມາເຮັດຫຍັງ ຂ້ອຍຢາກຕາຍໄປສາໃຫ້ມັນແລ້ວ" ຍິງສາວຕອບພ້ອມສຽງສະອື້ນ.

"ແລ້ວມັນສົມຄວນແລ້ວບໍ່ ທີ່ເຈົ້າຈະເອົາຊີວິດມາຖິ້ມພຽງເພາະຜູ້ຊາຍຄົນດຽວທີ່ບໍ່ໄດ້ຮັກເຈົ້າ ແລະຖິ້ມເຈົ້າໄປແລ້ວ.?"



"ລາວສຳຄັນກັບຂ້ອຍ ລາວເປັນທຸກສິ່ງທຸກຢ່າງ ເປັນດັ່ງຊີວິດທັງໝົດຂອງຂ້ອຍ."

"ລາວເປັນທຸກສິ່ງທຸກຢ່າງຂອງເຈົ້າແນວໃດ? ລາວເປັນຄົນທີ່ໃຫ້ກຳເນີດຊີວິດເຈົ້າມາບໍ່? ລາວເປັນຍາດພີ່ນ້ອງທີ່ຄອຍເບິ່ງແຍງ ລ້ຽງດູ ຊ່ອຍເຫຼືອເຈົ້າມາບໍ່? ລາວເປັນຢຸກຢາອາຫານໃຫ້ເຈົ້າກິນເວລາຫິວໂຫຍ ຫຼືຍາມບໍ່ສະບາຍບໍ່? ຫຼືລາວເປັນອາກາດໃຫ້ເຈົ້າຫາຍໃຈເພື່ອມີຊີວິດຢູ່ລອດບໍ່? ເຈົ້າຈຶ່ງຈະຂາດລາວບໍ່ໄດ້ ເຈົ້າລອງບອກຂ້ອຍມາເບິ່ງ ວ່າຊາຍຄົນນັ້ນເປັນດັ່ງປັດໄຈໃດທີ່ຂ້ອຍເວົ້າມາ"

ຍິງສາວໄດ້ແຕ່ແກວ່ງຫົວປະຕິເສດພ້ອມກັບນ້ຳຕາກ່ອນທີ່ຊາຍຄົນນັ້ນຈະເວົ້າຕໍ່:

"ຂ້ອຍຂໍໃຫ້ເຈົ້າຈົ່ງຮັບຟັງເລື່ອງທີ່ຂ້ອຍຈະເລົ່າຕໍ່ໄປນີ້ໃຫ້ຈົບກ່ອນ ເພື່ອເຈົ້າຈະຄຶດຫຍັງໄດ້. ການແຕ່ງງານ ຫຼືສ້າງຄອບຄົວຮ່ວມກັນບໍ່ໄດ້ໝາຍວ່າຄວາມຮັກນັ້ນກ້າວເຖິງຈຸດສູງສຸດແລ້ວ ແຕ່ມັນຫາກໍແມ່ນກ້າວທຳອິດຂອງຄວາມຮັກຕ່າງຫາກ ເພາະການແຕ່ງງານບໍ່ໄດ້ເກີດຂຶ້ນເພາະຄວາມຮັກສະເໝີໄປ ອາດເພາະຄວາມຈຳເປັນ ຄວາມເໝາະສົມ ຫຼືຮີດຄອງຕ່າງໆກໍວ່າກັນໄປ. ດັ່ງດຽວກັບຊີວິດຄູ່ຂອງທ້າວ ອໍ ແລະນາງ ນໍ" ທີ່ຂ້ອຍຈະເລົ່າຕໍ່ໄປນີ້:

..............

"ເຈົ້າຊິມາວຸ່ນວາຍກັບຂ້ອຍເຮັດຫຍັງ? ເງິນກະຫາໃຫ້ຈ່າຍ ເຮືອນກໍມີໃຫ້ຢູ່ມີແຕ່ລ້ຽງລູກຊື່ໆບໍ່ຕ້ອງມາຫຍຸ້ງກັບຂ້ອຍເຂົ້າໃຈບໍ່?"ທ້າວອໍທັງເວົ້າທັງຊຸກນາງນໍລົ້ມລົງກັບພື້ນເຮືອນ.

"ໃຫ້ຂ້ອຍເອົາລູກຢູ່ເຮືອນແລ້ວເຈົ້າໄປເລາະຫາຄວາມສຸກ ກັບສາວນ້ອຍຫ້ອຍເມຍປາຍຫັ້ນຫວາ.!" ນາງ ນໍ ຕອບຄືນດ້ວຍນ້ຳຕາ.

"ຂ້ອຍໄປເຮັດວຽກເມື່ອຍກໍເມື່ອຍ ໃຫ້ຂ້ອຍມີຄວາມສຸກແດ່ບໍ່ໄດ້ຫວະ ເຈົ້າຢ່າໂພດຫຼາຍໃດ໋" ທ້າວ ອໍ ເວົ້າຈົບກໍຂັບລົດອອກໄປ.

ນາງ ນໍ ເປັນສາວຊົນນະບົດເຂົ້າໄປເຮັດວຽກໃນເມືອງໃຫຍ່ ແລ້ວກໍໄດ້ພໍ້ກັບທ້າວ ອໍ ດ້ວຍຄວາມເປັນໄວໜຸ່ມຄວາມສະເໜຫາຈຶ່ງຫຼາຍກວ່າຄວາມຮັກເໜືອຄວາມຮັບຜິດຊອບ ທັງສອງຈຶ່ງຍອມເປັນຂອງກັນແລະກັນ ແລ້ວຫຼັງຈາກນັ້ນບໍ່ດົນ ນາງ ນໍ ກໍຖືພາ, ທຳອິດ ທ້າວ ອໍ ໄດ້ບັງຄັບໃຫ້ເອົາລູກອອກ ແຕ່ນາງ ນໍ ບໍ່

ຍອມ ດັ່ງນັ້ນທັງສອງຈຳຕ້ອງໄດ້ແຕ່ງງານກັນ ຄືງເພາະເຫດນີ້ຈຶ່ງເຮັດໃຫ້ຊີວິດຄູ່ທັງສອງມີບັນຫາຕໍ່ປາກຕໍ່ຄຳກັນເລື້ອຍໆ.

ຕະຫຼອດເວລາທີ່ໃຊ້ຊີວິດຄູ່ຮ່ວມກັນ ນາງ ນໍ ກໍໄດ້ແຕ່ອົດທົນ ຫວັງວ່າມື້ໜຶ່ງຜົວຕົນຈະປ່ຽນແປງເຫດຜົນທີ່ອົດທົນເພາະບໍ່ຢາກປະຮ້າງໃຫ້ລູກເປັນເດັກກຳພ້າ, ບໍ່ຢາກໃຫ້ຕົນຂຶ້ນຊື່ວ່າແມ່ຮ້າງ ເພາະຄົນສ່ວນຫຼາຍມັກຄິດວ່າແມ່ຮ້າງບໍ່ດີຜົວຈຶ່ງປະ ແຕ່ຫຼາຍວັນຜັນປ່ຽນເປັນເດືອນຄວາມຮຸນແຮງກໍເພີ່ມທະວີຄູນຂຶ້ນ ທ້າວ ວໍ ຍິ່ງທຳຮ້າຍຈິດໃຈ ນາງ ນໍ ດ້ວຍການໄປຫຼິ້ນຊູ້ສູ່ສາວ ເມົາກັບມາເຮືອນທຸກຄືນ ມີຫຼາຍເທື່ອທີ່ ທ້າວ ວໍ ໄດ້ລົງມືທຳຮ້າຍຮ່າງກາຍຕົບຕີນາງ ນໍ ຈົນໜ້າກ່ຳດຳຂຽວ ບໍ່ຊ້ຳບ່ອນເກົ່າເລີຍ ແລະທັງເວົ້າປ້ອຍດ່າ ທຳຮ້າຍຈິດໃຈລາວຢູ່ເລື້ອຍໆ:

"ຖ້າທົນບໍ່ໄດ້ ຮັບບໍ່ໄດ້ກໍຮ້າງກັນສາຂ້ອຍກໍເບື່ອເຈົ້າເກີນທົນລະ" ກໍຄືວ່າລະນໍ້ານ້ຳຕົກລົງຫີນທຸກມື້ຫີນມັນຍັງຜຸໄດ້ ນັບພາສາຫຍັງຄວາມຮູ້ສຶກ ຄວາມອົດທົນຂອງຄົນເຮົາມັນກໍຍ່ອມມີຂີດຈຳກັດຂອງມັນເຊັ່ນກັນ.

ແຕ່ຍ້ອນນາງນໍລາວເປັນຄົນຊົນນະບົດ ຄວາມຮູ້ກໍພໍແຕ່ອ່ານອອກຂຽນເປັນ ລາວຈຶ່ງຢ້ານວ່າຖ້າລາວເປັນຝ່າຍຂໍຮ້າງຜົວກ່ອນຈະມີຄວາມຜິດ ລາວຈຶ່ງໄປປຶກສາຫາລືກັບຍາດພີ່ນ້ອງໝູ່ຄູ່ໃນເລື່ອງທີ່ຕົນຈະຮ້າງກັບຜົວ ແລະໄດ້ອະທິບາຍກົກປາຍສາເຫດໃຫ້ເຂົາຟັງທັງໝົດ.

"ຖ້າເປັນດັ່ງທີ່ເອື້ອຍເວົ້າມານັ້ນກໍສາມາດຂໍຮ້າງກັບຜົວເອື້ອຍໄດ້" ສາວສຸກນ້ອງສາວຂອງໝູ່ລາວທີ່ເປັນຕຳຫຼວດເວົ້າພ້ອມຈົກເອົາປຶ້ມເຫຼັ້ມໜຶ່ງມາໃຫ້ລາວເບິ່ງ "ນີ້ເປັນປຶ້ມກົດໝາຍຄອບຄົວ ມາດຕາ໒໐ ວ່າດ້ວຍສາເຫດຂອງການຢ່າຮ້າງໄດ້ກ່າວໄວ້ວ່າ: ຜົວ ຫຼືເມຍ ຈະຂໍຢ່າຮ້າງກັນໄດ້ ເມື່ອມີສາເຫດດັ່ງນີ້: ໃຊ້ຄວາມຮຸນແຮງ ປ້ອຍດ່າດ້ວຍຄວາມຫຍາບຊ້າຕໍ່ກັນ, ບໍ່ຊື່ສັດຕໍ່ກັນ ຫຼືທໍລະມານຈິດໃຈກັນ, ຕິດເຫຼົ້າເມົາຢາເປັນອາຈິນ ຫຼືຫຼິ້ນກິນຟຸມເຟືອຍເປັນຕົ້ນ"

ເມື່ອນາງ ນໍ ໄດ້ເຫັນໄດ້ຮູ້ແບບນັ້ນແລ້ວກໍບໍ່ລໍຊ້າທີ່ຈະພາຕົນ ແລະລູກອອກມາຈາກການຕົກເປັນຝ່າຍຖືກກະທຳ ເປັນເຄື່ອງມືຮອງຮັບອາລົມຂອງຜົວ



ອີກຕໍ່ໄປ ໃນທີ່ສຸດທັງສອງກໍໄດ້ຮ້າງກັນ ແລະລາວກໍໄດ້ພາລູກກັບຄືນມາຢູ່ບ້ານນຳແມ່. ສ່ວນທ້າວ ວໍ ກໍຍັງຫຼິ້ນກິນໄປເລື້ອຍໆ ໄດ້ຂ່າວວ່າໄປລັກຫຼິ້ນເມຍເຂົາຖືກເຂົາລັດຕີເກືອບຕາຍ ຊ້ຳບໍ່ພໍເຂົາຍັງຟ້ອງເອົາເລື່ອງໄດ້ຕິດຄຸກຢູ່ຫຼາຍເດືອນ.

"ແລ້ວນາງນໍລາວທົນຕໍ່ການກ່າວຫາວ່າຂວັນຂອງຄົນອື່ນວ່າເປັນຍິງບໍ່ດີຈຶ່ງໄດ້ເປັນແມ່ຮ້າງໄດ້ແນວໃດ?" ຍິງສາວຖາມຂຶ້ນ ພ້ອມເຊັດນ້ຳຕາທີ່ພວມໄຫຼ.

"ລາວບອກວ່າ: ງູເຫົ່າມັນຈະບໍ່ຕາຍຍ້ອນພິດມັນເອງ ເພາະມັນເກັບພິດນັ້ນໄວ້ໃນບ່ອນທີ່ບໍ່ເປັນອັນຕະລາຍແກ່ໂຕມັນ. ໃນຊ່ວງເວລາທຳອິດລາວກໍຮັບສະພາບເຫດການນັ້ນບໍ່ໄດ້ ຍ້ອນຜູ້ຄົນພາກັນເວົ້າຕ່າງໆນາໆວ່າທີ່ຕ້ອງປະກັບຜົວນັ້ນເປັນເພາະລາວບໍ່ດີ, ມັກຫຼິ້ນກິນເຮຮາ ຫຼິ້ນໄພ້ຫຼິ້ນເບີ ຄົບຊູ້ສູ່ຊາຍຕ່າງໆ ຈຶ່ງຖືກຜົວປະ ຈົນໄດ້ຫອບລູກກັບມາຢູ່ບ້ານໃຫ້ແມ່ລ້ຽງ ແລ້ວກໍຄືງໜີບໍ່ພົ້ນໄປຊອກເປັນແມ່ຈ້າງນາງເລງ ເພື່ອເອົາເງິນມາລ້ຽງລູກມັນຫັ້ນແຫຼະ ແລະດີບໍ່ດີລູກມັນໃຫຍ່ມາກໍຄືງເປັນຄືກັນກັບແມ່ມັນຫັ້ນລະ.

ໄທບ້ານໄທເມືອງພາກັນເວົ້າເປັນສຽງດຽວ ຈົນລາວເຄີຍຄິດທີ່ຈະເຮັດແບບດຽວກັບເຈົ້າໃນຕອນນີ້ແລ້ວ ແຕ່ດ້ວຍຄວາມຮັກຂອງພໍ່ແມ່ ແລະຄວາມຮັກທີ່ລາວມີຕໍ່ລູກເຮັດໃຫ້ລາວເຂັ້ມແຂງຂຶ້ນ ບໍ່ຫວັ່ນເກງຕໍ່ຄຳດູໝິ່ນຂອງຄົນພວກນັ້ນ ລາວເຮັດທຸກຢ່າງດ້ວຍຕົວຄົນດຽວບໍ່ຈັກຄ້າຂາຍ ຮັບຈ້າງວຽກໜັກງານເບົາລາວເຮັດໝົດ ລາວເຮັດທຸກຢ່າງດ້ວຍສອງມື ແລະທຸ່ມເທເຫື່ອແຮງເພື່ອລ້ຽງດູສົ່ງເສີມໃຫ້ລູກໄດ້ຮ່ຳຮຽນມີຄວາມຮູ້ ຈະໄດ້ບໍ່ຕ້ອງມາພໍ້ສະຕາກຳແບບດຽວກັບລາວ".

"ແລ້ວເປັນຫຍັງລາວເຖິງບໍ່ແຕ່ງງານໃໝ່ລະ ຫຼືສັງຄົມບໍ່ຍອມຮັບທີ່ລາວເປັນແມ່ຮ້າງ?" ຍິງສາວຖາມຕໍ່ດ້ວຍຄວາມສົນໃຈ.

"ລາວຕ່າງຫາກທີ່ບໍ່ຍອມເປີດໃຈໃຫ້ແກ່ໃຜອີກບໍ່ດັ່ງນັ້ນຂ້ອຍກໍຄືງໄດ້ຊ່ອຍແບ່ງເບົາພາລະລາວໄດ້ຫຼາຍກວ່ານີ້ແລ້ວ" (ຊາຍຄົນນັ້ນຄິດຢູ່ໃນໃຈ) ກ່ອນຈະເວົ້າອອກໄປວ່າ: "ກົງກັນຂ້າມ ເຖິງລາວຈະເປັນແມ່ຮ້າງ ເປັນຍິງບ້ານນອກຂອກນາກໍຈິງ ແຕ່ຄວາມງາມ ຄວາມດີຖືວ່າບໍ່ເປັນຮອງໃຜ ມີບ່າວນ້ອຍບ່າວໃຫຍ່ມາວົນວຽນກ້ຽວຫາລາວບໍ່ໄດ້ຂາດ ແຕ່ລາວກໍບໍ່ສົນໃຈລາວບອກວ່າ "ຖ້າຈະແຕ່ງງານ



ໃໝ່ກໍຢ້ານວ່າຜົວບໍ່ຮັກລູກຂອງລາວ ຢ້ານເຂົາທຳຮ້າຍລູກທີ່ເປັນດັ່ງແກ້ວຕາດວງໃຈຂອງລາວ ຄືດັ່ງທີ່ອອກຂ່າວວ່າ ພໍ່ນ້າທຳຮ້າຍລູກນ້າຕ່າງໆນາໆ" ພໍເຫັນແບບນັ້ນ ລາວກໍບໍ່ຄິດທີ່ຈະແຕ່ງງານໃໝ່ອີກເລີຍ ເພາະວ່າລາວຮັກລູກຫຼາຍກວ່າຄວາມສຸກຕົນ ຈົນໃນທີ່ສຸດລາວກໍໄດ້ພິສູດໃຫ້ໄທບ້ານໄທເມືອງເຫັນແລ້ວວ່າ ແມ່ຮ້າງບໍ່ແມ່ນບໍ່ດີສະເໝີໄປ ເພາະການທີ່ເປັນແມ່ຮ້າງກໍມີຫຼາຍປັດໄຈດັ່ງດຽວກັບການແຕ່ງງານຫັ້ນແຫຼະ"

"ເປັນຕາອີ່ຕົນລາວນໍ້ສັງຄົມທຸກມື້ນີ້ກໍມີແຕ່ກຽມຖ້າຈະຢຽບກັນໃຫ້ຈົມດິນບໍ່ເຄີຍມີຄຳວ່າໂອກາດ ແລະອະໄພໃຫ້ກັນເລີຍ,ບໍ່ຢຳເກງຮອດກົດໝາຍບ້ານເມືອງຊ້ຳ ແລ້ວນີ້ນາງ ນໍ ລາວເປັນຄົນບ້ານເຮົານີ້ບໍ່? ເຈົ້າຄືຮູ້ເລື່ອງລາວຂອງລາວດີແທ້"

"ລາວເປັນຄົນບ້ານເຮົານີ້ແຫຼະ ລາວຊື່ ນົກ, ຜົວລາວຊື່ ວັນນາ, ແລະລູກສາວຄົນດຽວຂອງລາວທີ່ຫາກໍຮຽນຈົບມາຊື່ ດວງໃຈ. ແຕ່ກໍໜ້າເສຍດາຍທີ່ລູກສາວລາວ ມີຄວາມເຂັ້ມແຂງບໍ່ໄດ້ແມ່ນແຕ່ສ້ຽວໜຶ່ງຂອງແມ່ລາວ ບໍ່ສົມທີ່ແມ່ລາວທຸ່ມເທທຸກຢາດເຫື່ອເພື່ອລາວ ແຕ່ລາວກັບຍອມແພ້ພຽງແຕ່ພໍ້ບັນຫານ້ອຍໆ…"

ຊາຍຄົນນັ້ນຍັງເວົ້າບໍ່ທັນຈົບ ຍິງສາວຜູ້ຊື່ດວງໃຈ ກໍຟ້າວລຸກຂຶ້ນແລ່ນກັບເມືອເຮືອນພ້ອມກັບນ້ຳຕາໄຫຼອາບແກ້ມ ແລະສຽງຮ້ອງຄ່ອຍໆວ່າ: **ແມ່ ແມ່ ແມ່ນົກຂອງລູກ ລູກຂໍໂທດ…!!!**





**ຖ້າເຫັນວ່າທາງຜ່ານບໍ່ມີຄຸນຄ່າ ກໍລອງໃຫ້ທາງຜ່ານ ຂາດຂຶ້ນມາ ແລ້ວຈະຮູ້ວ່າ ເປົ່າໝາຍຢູ່ຕໍ່ໜ້າກໍໄປ ຄວ້າມັນມາບໍ່ໄດ້**

**໗ ຕຸລາ ໒໐໑໗**

# ທາງຜ່ານ

ບັນຍາກາດຄ້ອຍຄ່ຳຍາມແລງ ແສງຕາເວັນເລີ່ມລັບສາຍພູ ຢູ່ກາງທົ່ງນາເຂົ້າພວມກ່ອງຮອງເປັນສີເຫຼືອງ ອ້ອມຮອບດ້ວຍປ່າດົງອັນຕຶບໜາ.

“ອາກາດຢູ່ນີ້ດີນໍ້ ບໍ່ຄືຢູ່ຕົວເມືອງສັບສົນວຸ່ນວາຍ ບໍ່ຈັກຄົນ ບໍ່ຈັກລົດແລ່ນແຂ່ງກັນເປັນອື້ນຫວັ່ນໆ ບໍ່ຄືຢູ່ນີ້ໄດ້ຍິນແຕ່ສຽງນົກກັບສາຍລົມພັດປະສານກັນເປັນຕາອອນຊອນ ງາມທັງທຳມະຊາດ ງາມທັງຄົນ ຈົນຂ້ອຍຢາກຍ້າຍມາຢູ່ພີ້ເລີຍ” ເປັນສຽງຄາລົມຫວານຂອງອ້າຍບ່າວໃນເມືອງເວົ້າອ້ອນສາວບ້ານນາ.

“ຄືປາກຫວານແທ້ນໍ້ ສາວບ້ານນອກບໍ່ສູ້ສາວໃນເມືອງດອກ” ສາວນາງຕອບໄປ.

“ແມ່ນຢູ່ດອກສາວໃນເມືອງພຸ້ນງາມແຕ່ຂ້ອຍມັກສາວບ້ານນາທຳມະດາບໍ່ແຕ່ງບໍ່ແປງຫຼາຍກວ່າ” ອ້າຍບ່າວເພັດເວົ້າເສີມໃສ່ຕື່ມ ຈົນສາວນາງອາຍໜ້າແດງ.

ເພັດເປັນຊາຍໜຸ່ມຮູບງາມມາແຕ່ວຽງຈັນ ເປັນຫົວໜ້າໄຟຟ້າທີ່ລົງມາສຳຫຼວດຕັດແລວທາງ ແລ່ນເອົາໄຟຟ້າເຂົ້າໃຫ້ເຂດບ້ານທີ່ຢູ່ຫ່າງໄກ ສ່ວນສາວນາງເປັນລູກສາວຫົວໜ້າບ້ານຢູ່ທັ້ນ ເລື່ອງຄວາມງາມກໍບໍ່ເປັນຮອງສາວໃດໃນບ້ານ ທັງສອງໄດ້ຮູ້ຈັກສະໜິດສະໜົມກັນຂຶ້ນເລື້ອຍໆນັບແຕ່ມື້ເພັດລົງມາເຮັດວຽກຢູ່ນີ້ກໍເປັນເວລາສາມເດືອນປາຍແລ້ວ ແລະ ໂຄງການກໍໃກ້ຈະສຳເລັດແລ້ວ.

“ກິ້ງ ກິ້ງ ກິ້ງ…” ສຽງໂທລະສັບດັງຂຶ້ນ, ເພັດຍ່າງອອກໄປຮັບຢູ່ໄກຈາກນາງແດ່.

“ໃກ້ຈະສຳເລັດເຂົ້າໄປອີກຂັ້ນແລ້ວຫົວໜ້າ ຄາດວ່າຈະສຳເລັດພ້ອມກັບໂຄງການໄຟຟ້ານີ້ແຫຼະ” ເພັດຕອບຄຳຖາມປາຍສາຍກ່ອນຈະວາງສາຍໄປ.

“ນາງ..! ອີກສອງອາທິດຂ້ອຍກໍຈະໄດ້ກັບແລ້ວ, ຮື..!! ບໍ່ຢາກກັບເລີຍ ເພາະກັບໄປກໍຄົງມີແຕ່ຕົວ ຫົວໃຈຂອງຂ້ອຍໄດ້ຝາກໄວ້ນຳຄົນທາງນີ້ແລ້ວ” ເພັດໄຂວາຈາຄຳລວງຫຼອກໃຫ້ສາວນາງຕາຍໃຈ ສ່ວນນາງກໍໄດ້ແຕ່ຍິ້ມແລ້ວກໍຍິ້ມ ເພັດ



ເລີຍເວົ້າຕໍ່: “ແລ້ວເລື່ອງທີ່ຂ້ອຍໃຫ້ເຈົ້າໄປລົມກັບພໍ່ເພິ່ນວ່າຈັ່ງໃດ?”

“ມື້ແລງພໍ່ບອກໃຫ້ເຈົ້າໄປກິນເຂົ້ານຳຢູ່ເຮືອນເພິ່ນຊິລົມເລື່ອງນີ້ນຳເຈົ້າຫັ້ນລະ” ນາງເອີ່ຍປາກຊວນເພັດຕາມຄຳບອກຂອງພໍ່.

“ໄດ້ໆ ແລ້ວມື້ແລງພໍ້ກັນນໍ້” ເພັດເວົ້າແລ້ວທັງສອງກໍແຍກທາງກັນ ເພັດກັບໄປບ່ອນພັກ ສ່ວນນາງກັບເມືອເຮືອນເພື່ອກຽມຂອງກິນ.

ຫຼັງຈາກກິນເຂົ້າແລງແລ້ວກອງປະຊຸມນ້ອຍລະຫວ່າງເພັດ ກັບພໍ່ນາງກໍເລີ່ມຂຶ້ນ ໂດຍມີນາງນັ່ງຟັງນຳ, ເພັດບໍ່ລໍຊ້າເລີ່ມເຂົ້າຫາຈຸດປະສົງທັນທີ.

“ພໍ່ຄົງຈະຮູ້ຈຸດປະສົງຂອງລູກແລ້ວເນາະ ພຽງແຕ່ພໍ່ຕົກລົງເປີດທາງໃຫ້ພວກລູກໄດ້ເຂົ້າໄປ ແລະ ເປັນຕົ້ນທາງຊ່ອຍໃຫ້ພວກລູກອອກໄປຫວິດເຂດບ້ານນີ້ກໍຈະມີລິດມາລໍຮັບເອົາຢູ່ຫັ້ນ ແລ້ວພວກເຮົາກໍກຽມລວຍກັນຢ່າງດຽວ” ເພັດເວົ້າດ້ວຍທ່າທາງຂຶງຂັງ.

“ພໍ່ບໍ່ເຄີຍເຮັດຈັກເທື່ອ ຢ້ານທາງການເພິ່ນຮູ້ລະຊິບໍ່ຊວຍກັນພໍດີບໍ່?” ພໍ່ນາງເວົ້ານ້ຳສຽງສັ່ນໆ.

“ພໍ່ບໍ່ຕ້ອງຢ້ານດອກ ພໍ່ເອງກໍເປັນຫົວໜ້າບ້ານຢູ່ນີ້ ຖ້າພໍ່ຕົກລົງຄົນໃນບ້ານບໍ່ມີໃຜກ້າໄປແຈ້ງທາງຂັ້ນເທິງດອກ ແລະ ບ້ານເຮົາກໍຢູ່ໄກຕົວເມືອງຫຼາຍ ລູກຄິດວ່າພຽງພໍ່ຍອມຮ່ວມມືໄປລົມກັບພວກໄທບ້ານບໍ່ໃຫ້ຂັດຂວາງກໍພໍແລ້ວນອກນັ້ນລູກຈັດການເອງ”

“ແລ້ວລູກຈະລົງມືມື້ໃດ?” ພໍ່ນາງຖາມຕໍ່.

“ອາທິດນີ້ເລີຍແຫຼະເຂົ້າໄປເລາະສຳຫຼວດແລ້ວລົງມືເລີຍ ເອົາເປັນວ່າພໍ່ຕົກລົງຮ່ວມມືນຳລູກລະເນາະ ຊັ້ນລູກກັບກ່ອນຊິໄປກຽມການກັບລູກນ້ອງ” ເວົ້າແລ້ວເພັດກໍລົງເຮືອນໄປທັນທີພ້ອມກັບຮອຍຍິ້ມອັນແສນມີຄວາມສຸກ.

”ພວກໜ້າໂງ່ເອີ່ຍ ບໍ່ຄິດວ່າຊິງ່າຍປານນີ້ ກູຕົວະສ່ຳນີ້ກໍເຊື່ອກູພໍດີ ຄືຊິຢາກໄດ້ກູເປັນລູກເຂີຍແຮງກູຊິເອົາທັງໄມ້ ແລະ ລູກສາວມຶງມາເປັນເມຍນ້ອຍກູໃຫ້ເບິ່ງສົມໃຈພວກສູໂລດແຫຼະ” ເພັດທັງເວົ້າ ທັງຫົວຄົນດຽວຄ່ອຍໆໄປຕາມທາງ.

ແຫຼະແລ້ວມື້ທີ່ນັດໝາຍກໍມາຮອດ ເພັດກັບລູກນ້ອງອີກ ໖ ຄົນພ້ອມເຄື່ອງມືຄົບຊຸດກໍເຂົ້າປ່າໄປ ໂດຍມີພໍ່ນາງ, ນາງ ແລ້ວກໍໄທບ້ານໄປນຳຈຳນວນ



ໜຶ່ງເພື່ອນຳທາງ.

ໃນຂະນະທີ່ພວກເພັດພວມຍົກຈັກສະຕິບຂຶ້ນວາງແນບໃສ່ກັບລຳຕົ້ນໄມ້ ທັນໃດນັ້ນເອງກໍມີສຽງປືນດັງຂຶ້ນ ພ້ອມແຂກທີ່ບໍ່ໄດ້ຮັບເຊີນກໍອອກມາ ໄທບ້ານທີ່ໄປນຳກໍຍົກປືນທີ່ພາຍແນໃສ່ພວກເພັດປິດວົງອ້ອມທັນທີ ບໍ່ຕ່າງກັບຝູງເສືອອ້ອມກວາງນ້ອຍ ພວກເພັດທັງໝົດຖືກຈັບມັດສອກມາໂຮມກັນໄວ້ບ່ອນດຽວ.

“ນີ້ມັນໝາຍຄວາມວ່າຈັ່ງໃດ” ເພັດຖາມທັງຂຶ້ນທັງແນມເບິ່ງໜ້າພໍ່ນາງ ແລະ ນາງດ້ວຍຄວາມໂມໂຫຮ້າຍສຸດຂີດ.

“ກໍໝາຍຄວາມວ່າ ພວກເຈົ້າທັງໝົດຖືກຈັບແລ້ວໃນຂໍ້ຫາລັກຕັດໄມ້ໃນເຂດປ່າສະຫງວນ ພ້ອມຂໍ້ມູນ ແລະ ຫຼັກຖານຄົບຖ້ວນ” ນາງຕອບຂຶ້ນດ້ວຍນ້ຳສຽງທີ່ພໍໃຈ ພ້ອມຍົກມືຖືທີ່ມີຮູບຖ່າຍຕອນພວກເພັດກຳລັງຈະຕັດຕົ້ນໄມ້ໃຫ້ເບິ່ງ.

“ມັນເປັນແບບນີ້ໄດ້ຈັ່ງໃດ? ພວກມຶງຫັກຫຼັງກູໄປແຈ້ງຕຳຫຼວດຊັ້ນຫວະ?” ເພັດຖາມຂຶ້ນອີກ.

“ບໍ່ ພວກຂ້ອຍບໍ່ໄດ້ຫັກຫຼັງເຈົ້າ ພຽງແຕ່ເຈົ້າຍ່າງມາຖືກກັບດັກທີ່ພວກຂ້ອຍວາງໄວ້ຕ່າງຫາກ ຄວາມຈິງແລ້ວຂ້ອຍເປັນຕຳຫຼວດປະຈຳຢູ່ໃນເມືອງ ໄດ້ຮັບມອບໝາຍມາຈັດການກັບພວກເຈົ້າທີ່ທາງຂັ້ນເທິງຕ້ອງການຕົວຢູ່ ແລະ ທຸກຢ່າງທີ່ພວກຂ້ອຍເຮັດລົງໄປກໍເພື່ອໃຫ້ເຈົ້າຕາຍໃຈ ຍອມເຜີຍຕົວຕົນທີ່ແທ້ຈິງອອກມາແລ້ວໃນທີ່ສຸດກໍເປັນໄປຕາມແຜນທີ່ວາງໄວ້ທຸກປະການ ບາດນີ້ເຂົ້າໃຈແລ້ວນໍ້ວ່າເປັນຫຍັງພວກຂ້ອຍຄືຍອມຮ່ວມມືກັບເຈົ້າແບບງ່າຍໆ ຢ່າຄິດວ່າທາງຜ່ານຄືພວກຂ້ອຍຈະປູດ້ວຍຜ້າພົມທີ່ງົດງາມ ໃຫ້ເຈົ້າຂົນເອົາຊັບສົມບັດຂອງຊາດໄປຜານຫຼົ້ນໄດ້ຢ່າງສະບາຍໃຈ ຄົນຄືພວກເຈົ້າສົມຄວນທີ່ຈະໄດ້ຮັບຜົນກຳທີ່ກໍ່ໄວ້ແລ້ວລະ ແລະ ອີກຢ່າງໜຶ່ງປ່າໄມ້ແຫ່ງນີ້ປຽບດັ່ງຖົງອີກຊີແຊນໃຫຍ່ ທັງເປັນບ່ອນຊອກຢູ່ຫາກິນຂອງພວກເຮົາທຸກຄົນ ບໍ່ມີທາງທີ່ຈະຍອມໃຫ້ໃຜມາຮຸກຮານໄດ້ງ່າຍໆດອກ. ເອົາໂຕພວກລາວຂຶ້ນລົດໄປດຳເນີນຄະດີ ເອົາເລື່ອງໃຫ້ເຖິງທີ່ສຸດ”. ນາງເວົ້າດ້ວຍນ້ຳສຽງທີ່ໜັກແໜ້ນ. ສ່ວນເພັດປາກບໍ່ອອກພໍຄວາມ ໄດ້ແຕ່ເຮັດໜ້າເຫຼືອໃຈຂຶ້ນລົດຕຳຫຼວດໄປພ້ອມກັບພັກພວກ.



ເມື່ອໃດກໍຕາມ ທີ່ມໍລະສຸມພາຍຸພັດເຂົ້າມາ ໃຫ້ຄິດສະເໝີວ່າ ມັນມາຊ່ອຍພັດເອົາຄວາມຜິດພາດ ຄວາມອ່ອນແອເຮົາອອກໄປ ເພື່ອໃຫ້ເຮົາໄດ້ຮຽນຮູ້ ແລະ ສ້າງຄວາມເຂັ້ມແຂງຂຶ້ນມາແທນ ເພາະວ່າທຸກເທື່ອທີ່ເຮົາລົ້ມລົງ ກໍມີພຽງຂາສອງຂ້າງຂອງເຮົາທີ່ເປັນເສົາຫຼັກຊ່ອຍຄ້ຳຮ່າງກາຍໃຫ້ລຸກຂຶ້ນຢືນໄດ້ອີກເທື່ອນຶ່ງ..!!!



# ນໍລະສຸນ

"ໂອ່ຍ.! ເຖົ້າເອີ່ຍບໍ່ຮູ້ວ່າຟ້າຝົນປີນີ້ຈະເປັນແນວໃດນໍ້ຄືມາຝົນຫຼາຍແຕ່ຫົວປີແທ້ ນໍ້າຊິບໍ່ຖ້ວມຄືປີກາຍນີ້ອີກບໍ່?".

"ຂ້ອຍກໍພາວະນາຢ່າໃຫ້ເປັນຄືປີກາຍ ຖ້າຖ້ວມອີກປີນີ້ເຮົາຊິເຮັດຈັ່ງໃດ!".

ສອງຜົວເມຍປ້າສີ ແລະລຸງມີນັ່ງລົມກັນຢູ່ຖຽງນາທ່າມກາງບັນຍາກາດເຢັນສົດຊື່ນ ແຕ່ສີໜ້າທັງສອງໂສກເສົ້າຊຶງກຸ້ມອົກກຸ້ມໃຈພໍປານແບກໜ່ວຍພູເອົາໄວ້ ຄົງເປັນຍ້ອນປີກາຍຝົນຕົກໜັກ ນໍ້າຖ້ວມໄຮ່ນາຕາກ້າຜົນຜະລິດເສຍຫາຍຫຼາຍເຕີບ ຈົນປີນີ້ຕ້ອງຢືບຢືມເງິນມາເປັນທຶນແຮໄວ້ ແລະຟ້າຝົນປີນີ້ກໍຄືວ່າຊິບໍ່ເປັນໃຈອີກ ຍ້ອນຝົນຫຼາຍແຕ່ຫົວປີ ນີ້ກໍຫາແຕ່ຕົກເຂົ້າເອົາກ້າແລ້ວ ຝົນກໍຕົກລົງທຸກມື້ ຢ້ານແຕ່ນໍ້າຊິຖ້ວມ ຖ້າເປັນແບບນັ້ນກໍຄົງຂາດທຶນອີກ ແຮ່ງມີແຕ່ສອງເຖົ້າຢູ່ນໍາກັນ ລູກຫຼານກໍບໍ່ມີ ເຮັດໄຮ່ນາເປັນຫຼັກ ແລະເຮັດຮົ້ວເຮັດສວນລ້ຽງເປັດໄກ່ໄວ້ກິນພໍໄດ້ຫຼຸດລາຍຈ່າຍໃນຊີວິດປະຈໍາວັນລົງ.

"ເຖົ້າເອີຍ! ຈັກໜ້ອຍເຈົ້າໄປປະຊຸມຢູ່ເຮືອນອາວພັນຫົວໜ້າບ້ານເດີ ເດັກນ້ອຍແລ່ນມາບອກກີ້ນີ້" ປ້າສີບອກຜູ້ເປັນຜົວເມື່ອກິນເຂົ້າແລງແລ້ວ.

"ພໍດີລະ ມີເລື່ອງຢາກສະເໜີຢູ່" ລຸງມີເວົ້າແລ້ວກໍເອົາຜ້າແພອີໂປ້ພາດບ່າຍ່າງລົງເຮືອນໄປ.

ຢູ່ກາງເດີ່ນເຮືອນຫົວໜ້າບ້ານ ຜູ້ຄົນມາກໜ້າຫຼາຍຕາ ກໍາລັງສົນທະນາໂສເຫຼົ່າກັນຢູ່ ສຽງດັງຈໍ່ແຈໆພໍປານນົກກິນໝາກໄຮ.

"ຊິເຂົ້າມານັ່ງຢູ່ໃນເຮືອນ ຫຼືຊິນັ່ງຕາກລົມຢູ່ນອກ?" ສຽງຂອງຫົວໜ້າບ້ານຮ້ອງອອກມາຖາມ.

"ນັ່ງຢູ່ນອກພີ້ກະໄດ້ແຫຼະລົມເຢັນດີ" ສຽງໜຶ່ງຕອບຂຶ້ນແລ້ວການປະຊຸມໂອ້ລົມ



ກັນພາຍໃນບ້ານກໍເລີ່ມຂຶ້ນ. ບັນຍາກາດດໍາເນີນໄປດ້ວຍສຽງວິນແຊວເລັກໜ້ອຍ ເພາະບໍ່ມີໃຜສົນໃຈເລື່ອງທີ່ໂອ້ລົມປານໃດ ໂດຍເລີ່ມຈາກເລື່ອງແປງຂົວຂ້າມບ້ານ ເຮັດອະນາໄມລວມ ແລະອື່ນໆ. ຈົນມາເຖິງເລື່ອງທີ່ລຸງມີສະເໜີຂຶ້ນຈຶ່ງພໍມີຄົນສົນໃຈນໍາແດ່.

"ຄືວ່າຈັ່ງຊີ້ ຕັ້ງແຕ່ມີພວກນາຍທຶນເຂົາມາສໍາປະທານດິນຢູ່ທາງດ້ານເໜືອບ້ານເຮົານີ້ນ່າ ມີທາງສຽງວ່າມີການລັກຕັດໄມ້ຢູ່ເທິງພູນໍາໃດ່ຫັ້ນ, ຖ້າຄືຕາມທີ່ໄດ້ຟັງຂ່າວວິທະຍຸເຂົາວ່າ ເປັນແນວນີ້ມັນຈະສົ່ງຜົນກະທົບຕໍ່ການທໍາມາຫາກິນຂອງພວກເຮົາໃດ່ ຮວມທັງປະຊາຊົນນັບທັງສັດສາວາສິ່ງ ເຄື່ອງປູກຂອງຝັງກໍຈະໄດ້ຮັບຄວາມເສຍຫາຍນໍາອີກ ຖ້າເປັນແນວນັ້ນເຮົາຈະແກ້ໄຂແນວໃດ?" ລຸງມີເວົ້າດ້ວຍນໍ້າສຽງທີ່ຈິງຈັງ.

"ແມ່ນ ແມ່ນ ແມ່ນ ຊິປະໄວ້ແນວນີ້ດົນບໍ່ໄດ້..." ມີສຽງຈໍານວນໜຶ່ງທີ່ເຫັນດີນໍາ ແລະອີກສ່ວນໜຶ່ງແມ່ນຄັດຄ້ານ:

"ຍາກຫຼາຍຄືບໍ່ເອົາດິນໃຫ້ເຂົາເຊົ່າສາ ໄດ້ເງິນມາເປັນກ້ອນເປັນກໍາໄປໃຊ້ຈ່າຍຫຍັງກໍໄດ້ ບໍ່ຖ້າໄດ້ມານັ່ງກຸ້ມໃຈວ່ານໍ້າຊິຖ້ວມ ຫຼືຟ້າຊິແລ້ງ ສະບາຍຄືຫຍັງນີ!"

"ເຮັດແບບນັ້ນບໍ່ໄດ້ດອກ ໄດ້ຍິນມາວ່າສານເຄມີທີ່ພວກເຂົາໃຊ້ຫັ້ນອັນຕະລາຍຫຼາຍໃດ່ ມັນທໍາລາຍດິນເຮົານໍາອີກ" ລຸງມີເວົ້າຂຶ້ນຕື່ມ.

"ຢ່າມາຮູ້ດີຫຼາຍ ເຂົາຮຽນຈົບຊັ້ນສູງປະລິນຍາມາ ເຈົ້າເປັນຊາວນາທໍາມະດາຊິຮູ້ດີທໍ່ເຂົາຫວະ!"

"ເອົາລະ! ເຊົາຖຽງກັນກ່ອນ" ຫົວໜ້າບ້ານເວົ້າຕັດຂຶ້ນເມື່ອເຫັນທ່າບໍ່ດີ. ພ້ອມເວົ້າຕໍ່:

"ເອົາເປັນວ່າຈະສະເໜີໄປຫາທາງຂັ້ນເທິງພົວພັນກັບພາກສ່ວນທີ່ກ່ຽວຂ້ອງວ່າພວກເພິ່ນຈະມີວິທີແກ້ໄຂຊ່ອຍຈັ່ງໃດ ຄົງຈະໄດ້ຄໍາຕອບໄວໆນີ້" ຫົວໜ້າບ້ານເວົ້າສຸດກອງປະຊຸມກໍຈົບລົງ.

ໄທບ້ານສ່ວນຫຼາຍແມ່ນເອົາດິນດອນຕອນຫຍ້າຂອງຕົນໃຫ້ແກ່ພວກນາຍທຶນເຊົ່າ ເພື່ອທໍາການປູກມັນຕົ້ນ ປູກກ້ວຍສົ່ງປ້ອນເຂົ້າໂຮງງານ. ຍັງເຫຼືອແຕ່ຈໍານວນໜ້ອຍເທົ່ານັ້ນທີ່ຍັງດໍາເນີນເຮັດນາຕໍ່. ນັບແຕ່ການປ່ຽນແປງທີ່ພວກນາຍທຶນເອີ້ນວ່າ: "ການພັດທະນາ" ນັ້ນເຂົ້າມາ ມັນໄດ້ສົ່ງຜົນກະທົບຕໍ່ໄທບ້ານ



ຫຼາຍ ເພາະວ່າເຂົາບໍ່ໄດ້ເອົາພຽງແຕ່ດິນຫວ່າງເປົ່າເທົ່ານັ້ນ ແຕ່ໄດ້ເອົາເນື້ອທີ່ປ່າໄມ້ໄປນໍາ ໂດຍສະເພາະແມ່ນປ່າຕົ້ນນໍ້າ ເຊິ່ງສົ່ງຜົນກະທົບ ໂດຍກົງໃຫ້ຝົນຟ້າຕົກບໍ່ຖືກຕ້ອງຕາມລະດູ ເປັນຕົ້ນເຫດສ້າງຄວາມເສຍຫາຍໃຫ້ແກ່ການປູກຝັງນໍາອີກ.

ເດືອນສິງຫາຍ່າງເຂົ້າ ກໍເຂົ້າເລີ່ມຕັ້ງລໍາ ໃບຂຽວສະອຸ່ມໄປທົ່ວທ້ອງທົ່ງນາສອງເຖົ້າປ້າສີ ແລະລຸງມີນັ່ງແຍງລົມພັດຕົ້ນເຂົ້າເອນຊ້າຍຍ້າຍຂວາດ້ວຍຄວາມເພີດເພີນ.

"ເຖົ້າ! ປີນີ້ຟ້າຝົນເປັນໃຈໃຫ້ເຮົາກະຍັງໄຄເນາະ" ປ້າສີເວົ້າກັບຜູ້ເປັນຜົວ.

"ຂ້ອຍກໍຂໍໃຫ້ເປັນຊັ້ນລະ ເຮົາຍັງພໍຊິໄດ້ເຂົ້າໃຊ້ໜີ້ໃຊ້ສິນເພິ່ນແດ່" ທັງສອງລົມກັນດ້ວຍໃຈທີ່ມີຫວັງ, ຕາມທໍາມະດາຂອງຊາວນາໃນເຂດນອກແລ້ວ ພໍຕົກກ້າດໍານາແລ້ວແມ່ນຍ້າຍເປັດໄກ່ ງົວຄວາຍມານອນຢູ່ນາ ພໍໄດ້ເຝົ້າເບິ່ງນໍ້າ ແລະຖາກຖາງຄັນນາຕ່າງໆ ຈົນເຖິງລະດູເກັບກ່ຽວຜົນຜະລິດແລ້ວຈຶ່ງກັບເມືອເຮືອນ ສ່ວນຄອບຄົວລຸງມີ ແມ່ນກັບເມືອນອນເຮືອນທຸກມື້ ຍ້ອນນາບໍ່ໄດ້ຢູ່ໄກຫຼາຍ ແລະທີ່ສໍາຄັນບໍ່ມີໃຜເຝົ້າເຮືອນ.

ໃນຄໍ່າຄືນນັ້ນເອງຢູ່ໆກໍມີສິ່ງທີ່ບໍ່ຄາດຄິດເກີດຂຶ້ນສຽງຊວາດ!ຊວາດ!ດັງມາແຕ່ໄກທັງລົມແຮງບວກກັບຟ້າຄະນອງ ແລ້ວຫ່າຝົນກໍໄດ້ທົ່ງເທລົງມາຢ່າງບໍ່ຂາດສາຍແກ່ຍາວເປັນເວລາຫຼາຍຊົ່ວໂມງເຕີບ ຈົນຟ້າແຈ້ງຈ່າງປ່າງຝົນຈັ່ງຂາດເມັດ ແລ້ວສອງເຖົ້າກໍຟ້າວໄປເບິ່ງນາທີ່ເປັນຄວາມຫວັງດຽວ ແຕ່ພໍໄປຮອດຕ້ອງອ່ອນແຮງດັບວູບລົງກັບໜ້ອງ ເມື່ອພາບທີ່ເຫັນຕໍ່ໜ້າມີພຽງນໍ້າປົກຄຸມແທນທົ່ງນາສີຂຽວ ບໍ່ເຫຼືອແມ່ນແຕ່ປາຍຍອດເຂົ້າໃຫ້ເຫັນພໍຕົ້ນ.

ທັງສອງຄືດັ່ງໃຈຈະຂາດລົງກັບບ່ອນຮ່າງກາຍໄຮ້ເຫື່ອແຮງຫົວເຂົ່າຂາແຂນອ່ອນຍຸບລົງນັ່ງຢູ່ກັບພື້ນ ນໍ້າຕາແຫ່ງຄວາມເສົ້າໂສກກໍໄຫຼລິນມາບໍ່ຂາດ ແລະບໍ່ພຽງແຕ່ນາຂອງລຸງມີເທົ່ານັ້ນ ນາຂອງຄອບຄົວອື່ນກໍເປັນເຊັ່ນກັນ.

"ໝົດແລ້ວເຖົ້າ ບໍ່ເຫຼືອພໍຕົ້ນ" ປ້າສີເວົ້າຂຶ້ນພ້ອມນໍ້າຕາ.

"ໃຈເຢັນກ່ອນເຖົ້າເອີ່ຍ ຖ້ານໍ້າມັນບົກໄວເຮົາກໍພໍຈະໄດ້ເກັບກ່ຽວຢູ່ດອກ ມື້ແລງນີ້ຫົວໜ້າບ້ານເພິ່ນນັດປະຊຸມ ເພິ່ນວ່າມີຄົນມາຊ່ອຍແກ້ບັນຫາໃຫ້ພວກເຮົາໄດ້



ແລ້ວ ເຈົ້າບໍ່ຕ້ອງກັງວົນ ເຮົາຈະຕ້ອງຜ່ານວິກິດການອັນໂຫດຮ້າຍນີ້ໄປໄດ້ຢ່າງແນ່ນອນ" ລຸງມີເວົ້າໃຫ້ກໍາລັງໃຈເມຍ ໃນຂະນະທີ່ສະພາບຈິດໃຈຕົນກໍບໍ່ໄດ້ແຕກຕ່າງຫຍັງກັນ.

ກອງປະຊຸມໄດ້ເລີ່ມຂຶ້ນອີກຄັ້ງຢູ່ເຮືອນຫົວໜ້າບ້ານ:

"ນີ້ແມ່ນຄໍາຈັນຄົນທີ່ຈະມາຊ່ອຍເຮົາແກ້ໄຂບັນຫາໃນເທື່ອນີ້. ລາວເຮັດການຢູ່ເມືອງເຮົານີ້ແຫຼະ ຂ້ອຍຄິດວ່າລາວຄົງມີຫົນທາງອອກທີ່ດີໃຫ້ເຮົາໄດ້ ບໍ່ຫຼາຍກໍໜ້ອຍ" ຫົວໜ້າບ້ານສະເໜີ.

"ສະບາຍດີ! ເຮົາພໍຮູ້ບັນຫາທີ່ເກີດຂຶ້ນແດ່ແລ້ວ ຈາກການລົງສໍາຫຼວດຢູ່ຫຼາຍເທື່ອ ແລະ ໄດ້ຮັບຂໍ້ມູນຈາກຫົວໜ້າບ້ານ. ສາເຫດໜຶ່ງທີ່ບາງປີຝົນຕົກຫຼາຍເກີດນໍ້າຖ້ວມ ແລະບາງປີຝົນຕົກໜ້ອຍກໍແຫ້ງແລ້ງທັງໝົດທັງມວນນີ້ ຍ້ອນວ່າບໍ່ມີຕົ້ນໄມ້ຄອຍດູດເກັບກັກນໍ້າໄວ້ ພໍຝົນຕົກແຮງກໍໄຫຼລົງບ່ອນຕໍ່າໝົດ ແລະບາງເທື່ອອາດພາໃຫ້ເກີດດິນເຈື່ອນໄດ້ນໍາອີກ. ແຕ່ພໍຕົກແລ້ງກໍແລ້ງໜັກນີ້ກໍຍ້ອນບໍ່ມີຕົ້ນໄມ້ ເມື່ອບໍ່ມີຕົ້ນໄມ້ດິນກໍຈະແຫ້ງແລ້ງ ພາໃຫ້ເກີດບັນຫາຕ່າງໆຕາມມາ.

ສ່ວນວ່າເລື່ອງເຈັບໄຂ້ໄດ້ປ່ວຍນັ້ນ ສາເຫດໜຶ່ງກໍຍ້ອນໄດ້ຮັບສານເຄມີມາຈາກສວນສໍາປະທານຫັ້ນແຫຼະ ສານນັ້ນມັນອາດຈະປົນມາກັບນໍ້າເພາະຫ້ວຍນໍ້າຕ່າງໆຢູ່ບ້ານເຮົາແມ່ນໄຫຼຈອດໃສ່ກັນ ແລະປະຊາຊົນເຮົາກໍແມ່ນໃຊ້ນໍ້ານັ້ນບໍ່ວ່າຊອກຢູ່ຫາກິນ ຫຼືໃຊ້ດື່ມໃຊ້ອາບເວລາໄປຮົ້ວໄປສວນແລະສັດສາວາສິ່ງນັ້ນບໍ່ຖ້າເວົ້າຮອດແມ່ນແຕ່ເປັດໄກ່ຫຼືສັດໂຕໃດຫຼົງເຂົ້າໄປໃນສວນນັ້ນກໍອາດຈະເຍົາ ຫຼືຕາຍເລີຍແຫຼະ ນີ້ຄືຜົນຮ້າຍຂອງມັນ ແລະຍັງບໍ່ໝົດສານເຄມີເຫຼົ່ານັ້ນຍັງໄປທໍາລາຍດິນເຮົາອີກ ຈາກທີ່ເຄີຍເປັນດິນອຸດົມສົມບູນກໍຈະກາຍເປັນດິນທີ່ເສື່ອມຄຸນນະພາບ".

"ແລ້ວເຮົາຈະແກ້ໄຂແນວໃດ?" ຜູ້ໜຶ່ງຖາມຂຶ້ນ.

"ນາພວກເຮົາສ່ວນຫຼາຍກໍແມ່ນຢູ່ອ້ອມໜອງໃຫຍ່ຕົນບ້ານແມ່ນບໍ່? ດັ່ງນັ້ນໃຫ້ພວກເຮົາທຸກຄົນໄປເຮັດອະນາໄມຈໍາພວກຫຍ້າທີ່ຂຶ້ນຢູ່ເຕັມໜອງນັ້ນອອກເພື່ອໃຫ້ມັນກວ້າງ ແລະສະດວກຂຶ້ນໃນເວລາຊອກຢູ່ຫາກິນ ແລ້ວຈາກນັ້ນກໍໃຫ້ແຕ່ລະຄອບຄົວຂຸດຮ່ອງລະບາຍນໍ້າ ຈາກນາຕົນໃຫ້ໄປປ່ອງໃສ່ໜອງນັ້ນ ຖ້າຫາກ

ຝົນຕົກແຮງນ້ຳຖ້ວມນາ ເຮົາກໍປ່ອຍນ້ຳໃຫ້ມັນໄຫຼລົງສູ່ໜອງ ແຕ່ຖ້າປີໃດຝົນໜ້ອຍນາແຫ້ງແລ້ງ ເຮົາກໍດູດເອົານ້ຳຈາກໜອງນັ້ນຂຶ້ນມາໃສ່.

ສ່ວນວ່າເລື່ອງເຈັບປ່ວຍນັ້ນ ພວກເຮົາຕ້ອງປັບປຸງການຢູ່ການກິນຄືນໃໝ່ ຂອງກິນກໍຕ້ອງໃຫ້ສະອາດ ແລະສຸກດີ ນ້ຳດື່ມນ້ຳໃຊ້ກໍເຊັ່ນກັນ ໂດຍສະເພາະເວລາໄປໄຮ່ໄປສວນບໍ່ແມ່ນເຫັນນ້ຳໃສໆກໍຕັກກິນ ໂລດ ເຮົາຄວນຕົ້ມຕອງໃຫ້ສະອາດກ່ອນ ຫຼືບໍ່ກໍຕ້ອງເອົານ້ຳດື່ມບໍລິສຸດໄປນຳແຕ່ເຮືອນ.

ສ່ວນເລື່ອງສັດລ້ຽງເຮົາບໍ່ຄວນປ່ອຍປະຊະຊາຍ ຕ້ອງເຮັດຄອກຂັງແລ້ວໝັ່ນເອົາປູນຂາວຢາຍອ້ອມ ແລະເອົາຕົ້ນລາຊາບີ (ຟ້າທະລາຍໂຈນ) ໄປໃຫ້ມັນກິນ ຕົ້ນຫຍ້ານີ້ຊ່ອຍປ້ອງກັນບໍ່ໃຫ້ເປັດໄກ່ເປັນພະຍາດ ຢູ່ບ້ານເຮົາຄືເຫັນມີຫຼາຍ ແລະພວກເຮົາຄວນເຮັດອາຊີບເສີມຢູ່ບ້ານນຳເຊັ່ນ: ປູກຜັກປອດສານພິດ ລ້ຽງເປັດໄກ່ ລ້ຽງກົບ ປູກເຫັດ ເຊິ່ງຕອນນີ້ທາງຂັ້ນເທິງ ເພິ່ນມີນະໂຍບາຍໃຫ້ລົງມາເຝິກອົບຮົມໃຫ້ປະຊາຊົນ ໂຊກດີທີ່ບ້ານເຮົາກໍໄດ້ຮັບທຶນນັ້ນ. ສ່ວນເລື່ອງທີ່ວ່າມີການລັກຕັດໄມ້ນັ້ນພວກເຮົາທຸກຄົນຕ້ອງເປັນຫູເປັນຕາຊ່ອຍກັນ ແລະທາງເຮົາຈະພົວພັນກັບພາກສ່ວນທີ່ກ່ຽວຂ້ອງໃຫ້ລົງມາກວດກາຕິດຕາມເບິ່ງ".

ເວລາຜ່ານໄປເກືອບສາມຊົ່ວໂມງໃນການປຶກສາຫາລືກັນ ແລະທຸກຄົນກໍຕົກລົງເຫັນດີ ພ້ອມພຽງກັນປະຕິບັດຕາມຄຳແນະນຳຂອງຄຳຈັນ ແລະນັບຈາກນັ້ນມາບັນຫາຕ່າງໆກໍຄ່ອຍໆຫຼຸດລົງເທື່ອລະໜ້ອຍ ກຸ່ມຄົນທີ່ເອົາດິນໃຫ້ເຂົາເຊົ່ານັ້ນກໍໄດ້ມາຂໍເຮັດນານຳພວກລຸງມີ ເພາະເງິນກ້ອນທີ່ໄດ້ຈາກຄ່າເຊົ່າດິນນັ້ນບໍ່ພໍທີ່ຈະໃຊ້ຈ່າຍໃນຄອບຄົວໄປໄດ້ຕະຫຼອດ. ສ່ວນກຸ່ມຄົນທີ່ລັກຕັດໄມ້ກໍຖືກຈັບກຸມໄປດຳເນີນຄະດີຕາມກົດໝາຍເປັນທີ່ຮຽບຮ້ອຍແລ້ວ.

"ຕໍ່ນີ້ໄປບ້ານເຮົາກໍຈະກັບມາອຸດົມສົມບູນ ຮັ່ງມີດ້ວຍຊັບໃນດິນສິນໃນນ້ຳຄືເກົ່າແລ້ວ. ໂອ່ຍ..!! ຈັ່ງແມ່ນມີຄວາມສຸກ"

"ເຢັນສະບາຍໆ ຊາວນາ..." ປະຊາຊົນໝົດບ້ານມາໂຮມກັນຮ້ອງລຳທຳເພງຢູ່ກາງທົ່ງຢ່າງເບີກບານມ່ວນຊື່ນ ໃນງານບຸນກອງເຂົ້າໃຫຍ່ ເຊິ່ງຈະຖືກຈັດຂຶ້ນທຸກໆປີເມື່ອເກັບກ່ຽວເອົາເຂົ້າຂຶ້ນເລົ້າຂຶ້ນເຍຍແລ້ວ.





ຢ່າປັກໃຈຫຼົງເຊື່ອແຕ່ໃນຄຳສັນຍາ ຈົ່ງໃຫ້ຄ່າກັບຄຳທຳມະດາທີ່ລົງມືເຮັດ

**໓໑ ພຶດສະພາ ໒໐໑໗**



# ສັນຍາຮັກ

ຕະຫຼອດເວລາທີ່ຜ່ານມາ ບໍ່ເຄີຍມີມື້ໃດເລີຍທີ່ຂ້ອຍບໍ່ຮັກ ບໍ່ຄິດຮອດທຸກລົມຫາຍໃຈເຂົ້າອອກ ຍັງຄົງເປັນເຈົ້າສະເໝີ ຢາກໃຫ້ເຮົາກັບມາຮັກກັນຄືເກົ່າ. ທຸກມື້ຂ້ອຍຢາກໃຫ້ຄ່ຳໄວໆ ເພາະຂ້ອຍຈະໄດ້ເຫັນໜ້າເຈົ້າ ໄດ້ໂອບກອດ ໄດ້ບອກຮັກ ເຮົາເປັນຄົນຮັກກັນພຽງໃນຕອນທີ່ຂ້ອຍນອນຫຼັບຝັນເທົ່ານັ້ນ.

............

"ຄືນນີ້ທ້ອງຟ້າຄືມືດໆເນາະ ແຕ່ອາກາດກໍເຢັນສະບາຍ ເບິ່ງດາວດວງນັ້ນແມ໋" ເຈົ້າເວົ້າພ້ອມຊີ້ມືໄປຍັງທິດທີ່ດາວດວງນັ້ນຢູ່.

"ງາມດີເນາະ ຮຸ່ງກວ່າດາວທຸກດວງເລີຍ ເພິ່ນເອີ້ນວ່າດາວຫຍັງຫັ້ນນ່າ?" ຂ້ອຍຖາມເມື່ອຫຼຽວຂຶ້ນເບິ່ງ.

"ເພິ່ນເອີ້ນວ່າ ດາວເໜືອ ດາວນີ້ຊາວປະມົງມັກໃຊ້ໄວ້ເບິ່ງທິດເວລາອອກຫາປາໃນຍາມກາງຄືນ" ເຈົ້າຕອບ ພ້ອມເວົ້າຕໍ່ "ເຖິງດາວດວງນັ້ນຊິຮຸ່ງ ຊິງາມພຽງໃດກໍບໍ່ສູ້ດາວທີ່ນັ່ງຢູ່ຂ້າງຂ້ອຍຕອນນີ້ດອກ" ຂ້ອຍໄດ້ແຕ່ຍິ້ມເມື່ອໄດ້ຍິນເຈົ້າເວົ້າ.

ເຮົາສອງຄົນມັກມານັ່ງເບິ່ງດາວນຳກັນເລື້ອຍໆ ໄປມາຫາສູ່ກັນທຸກມື້ຕັ້ງແຕ່ຄາວຍັງນ້ອຍ ເພາະເຮືອນເຮົາຂັ້ນກັນພຽງຮົ້ວເທົ່ານັ້ນ ແຕ່ຕອນຍັງເປັນເດັກນ້ອຍເຮົາສອງຄົນມັກໄປແລ່ນຫຼິ້ນໝາກໄລ່ໝາກລີ້ນຳກັນ ໄປໂຮງຮຽນພ້ອມກັນ ຮຽນຢູ່ຫ້ອງດຽວກັນ ມີຫຍັງກໍປຶກສາຊ່ອຍເຫຼືອກັນມາໂດຍຕະຫຼອດ ໂດຍສະເພາະເລື່ອງຮຽນ ຍ້ອນຂ້ອຍບໍ່ເກັ່ງວິຊາເລກເຈົ້າຈຶ່ງຊ່ອຍອະທິບາຍແນະນຳວ່າແບບນີ້ຕ້ອງແກ້ແນວນີ້ຕ້ອງໃຊ້ສູດນີ້ເຂົ້າຊ່ອຍ ແລະເລື່ອງອື່ນໆອີກ. ເມື່ອເວລາ



ຜ່ານໄປ ຈາກເດັກນ້ອຍທີ່ເປັນສ່ຽວຮັກສ່ຽວແພງກັນ ກາຍມາເປັນຄົນຮັກແຕ່ຍາມໃດກໍບໍ່ຮູ້.

"ຂ້ອຍສັນຍາຕໍ່ໜ້າດວງດາວທີ່ຢູ່ເຕັມທ້ອງຟ້າ ຂ້ອຍຈະຮັກຈະດູແລເຈົ້າໄປຕະຫຼອດຊີວິດ ຊິບໍ່ເຮັດໃຫ້ເຈົ້າຕ້ອງເສຍໃຈເພາະຂ້ອຍເດັດຂາດ ເຈົ້າປຽບດັ່ງອາກາດທີ່ຂ້ອຍຂາດບໍ່ໄດ້ແມ່ນແຕ່ວິນາທີດຽວ ເມື່ອເຮົາຮຽນຈົບແລ້ວກໍຈະກັບມາຢູ່ບ້ານຊອກຫາວຽກເຮັດເພື່ອສ້າງຖານະຄອບຄົວ ແລ້ວເຮົາກໍຈະແຕ່ງງານກັນ ມີລູກຈັກສາມຄົນເຈົ້າວ່າດີບໍ່?" ຂ້ອຍຍິ້ມພ້ອມງຶກຫົວແທນຄຳຕອບຂອງຄຳຖາມ ຕາທັງສອງຄູ່ຈຶ່ງເບິ່ງກັນດ້ວຍຄວາມອ່ອນຫວານ ມືທັງສອງຈັບກັນໄວ້ຢ່າງແໜ້ນສື່ໃຫ້ເຫັນວ່າເຮົາຈະບໍ່ມີວັນປ່ອຍມືກັນບໍ່ວ່າຈະເກີດຫຍັງຂຶ້ນກໍຕາມ.

"ຢູ່ໂຮງຮຽນບໍ່ແມ່ນລັກມີຜູ້ບ່າວມາລົມນຳຕະຫຼອດເບາະ? ເຈົ້າເອີ່ຍຖາມຂຶ້ນ.

"ບໍ່ມີດອກ ໃຜກໍຮູ້ວ່າເຮົາຮັກກັນຢູ່ ໃຜຊິກ້າມາລົມເນາະ!"

"ໃຫ້ມັນແທ້ເດີ ຢ່າໃຫ້ຮູ້ເດີວ່າລັກລົມຜູ້ບ່າວວຽງຈັນນ່າ" ເຈົ້າເວົ້າຊົງຫຶງຫວງ.

ເຮົາສອງຄົນຮຽນຢູ່ໂຮງຮຽນດຽວກັນແຕ່ຕ່າງຫ້ອງຍ້ອນຮຽນຄົນລະຝ່າຍ ເຈົ້າຮຽນຝ່າຍບັນຊີສ່ວນຂ້ອຍຮຽນສິ່ງແວດລ້ອມ. ແຕ່ພວກເຮົາກໍພໍ້ກັນທຸກມື້ໄປມາຫາສູ່ກັນ ມີຫຍັງກໍຍັງປຶກສາຊ່ອຍເຫຼືອກັນຢູ່ສະເໝີ ຂ້ອຍບໍ່ຮູ້ສຶກໂດດດ່ຽວເຖິງແມ່ນຢູ່ໄກບ້ານໄກຄອບຄົວ ຍ້ອນມີເຈົ້າຢູ່ຄຽງຂ້າງສະເໝີ.

ແຕ່ເວລາສາມປີທີ່ເຮົາອາໄສຢູ່ວຽງຈັນ ເມືອງທີ່ມີແຕ່ຄວາມຈະເລີນຮຸ່ງເຮືອງ ທັງໄຟແສງສີທີ່ລໍ້ຕາລໍ້ໃຈໃຫ້ຫຼົງໄຫຼ ສັງຄົມທີ່ມີແຕ່ການແຂ່ງຂັນ ແມ່ນແຕ່ຄົນບ້ານໃກ້ເຮືອນຄຽງກັນແທ້ໆຍັງບໍ່ຮູ້ຈັກຊື່ ບໍ່ເຄີຍເຫັນໜ້າກັນກໍມີ ຫຼືເພາະສັງຄົມແບບນີ້ ທີ່ເຮັດໃຫ້ຄວາມຮູ້ສຶກທີ່ເຈົ້າມີຕໍ່ຂ້ອຍເລີ່ມປ່ຽນໄປເລື້ອຍໆ ນັບແຕ່ຜູ້ຍິງຄົນນັ້ນກ້າວເຂົ້າມາ ເຈົ້າກໍເລີ່ມອອກຫ່າງຂ້ອຍໄປເລື້ອຍໆ ບໍ່ໄດ້ພໍ້ໜ້າກັນເປັນອາທິດກໍມີ ເວລາຂ້ອຍຖາມເຈົ້າກໍອ້າງວ່າຄາຮຽນຫຼາຍ ບໍ່ມີເວລາ ໂທຫາກໍບໍ່ມັກຮັບສາຍ ຖາມຫຼາຍກໍລຳຄານ ນັບມື້ຂ້ອຍແຮ່ງເບິ່ງຄືວ່າເປັນສ່ວນເກີນໃນຊີວິດເຈົ້າໄປແລ້ວ.

ແລ້ວມື້ທີ່ເຮົາຮຽນຈົບກໍມາເຖິງ ບັນຍາກາດພາຍໃນໂຮງຮຽນຄຶກຄື້ນອັດ

ແໜ້ນດ້ວຍຜູ້ຄົນມາກໜ້າຫຼາຍຕາ ບໍ່ຈັກໃຜເປັນໃຜ ຍ່າງສົນກັນປານຢູ່ບຸນທາດຫຼວງ ອາກາດກໍຮ້ອນໆ ແຕ່ຄົນທີ່ໄດ້ເງິນແມ່ນພວກຂາຍດອກໄມ້ກັບຕຸກກະຕາຢູ່ທັ້ນແຫຼະ ຮ້ານລຽນຮ້ານຍາວຈົນສຸດທາງ ເບິ່ງໃຜກໍຫອບແຕ່ຊໍ່ດອກໄມ້ຢາງຍ່າງເລາະຊອກຫາກັນ "ຈັກແມ່ນເອົາປະເພນີອັນນີ້ມາແຕ່ໃສ" ຂ້ອຍແນມຫາພໍ່ແມ່ພີ່ນ້ອງຢູ່ເປັນຊົ່ວໂມງຈັ່ງພໍ້ພວກເພິ່ນ ແລະກໍເຫັນແມ່ເຈົ້ານຳ "ດີແຕ່ບໍ່ຫອບດອກໄມ້ຢາງມາໃຫ້ເຮົານໍ້" ຂ້ອຍເວົ້າເມື່ອຍ່າງໄປຫາພວກເພິ່ນ.
"ຍິນດີນຳເດີ ຮຽນຈົບແລ້ວໃຫ້ໄດ້ວຽກເຮັດດີໆ ແລ້ວນີ້ເຫັນທັນວາບໍ່ລູກ?" ແມ່ເຈົ້າເອີ່ຍຖາມພ້ອມຫຼຽວຫາເຈົ້າ.
"ທັ້ນເດ ມາພໍດີ ທັນວາ!" ຂ້ອຍເວົ້າພ້ອມຍົກມືຂຶ້ນໃຫ້ສັນຍານເພື່ອເຈົ້າຈະໄດ້ເຫັນ.
"ແມ່ກັບໄປກ່ອນເດີ ລູກຊິໄປສະຫຼອງກັບໝູ່ກ່ອນ ມື້ອື່ນຈັ່ງຊິກັບ" ເຈົ້າບອກແມ່ໂດຍທີ່ບໍ່ແນມເບິ່ງຂ້ອຍພໍບາດ.

ແລ້ວມື້ນັ້ນພວກຂ້ອຍກໍໄດ້ກັບກ່ອນເຈົ້າ ພໍເມືອຮອດບ້ານໝູ່ຄູ່ຍາດພີ່ນ້ອງບ້ານໃກ້ເຮືອນຄຽງ ໃນນັ້ນກໍມີແມ່ເຈົ້ານຳທີ່ມາຫຼິ້ນຮ່ວມສະແດງຄວາມຍິນດີ ແລະກິນເຂົ້າແລງຮ່ວມກັນຕາມພາສາຄົນບ້ານນອກຂອກນາ ໃນຕອນທີ່ພວມນັ່ງລົມກັນຢ່າງມ່ວນຊື່ນຢູ່ນັ້ນ ຂ້ອຍໄດ້ຮັບໂທລະສັບຈາກໝູ່ເຈົ້າໂທມາບອກວ່າ:
"ດາວ ນີ້ໃຈເດີ ຕັ້ງສະຕິດີໆເດີ ທັນວາປະສົບອຸບັດຕິເຫດ ເມົາຂັບລົດລົ້ມ ຕອນນີ້ຢູ່ໂຮງໝໍມະໂຫສົດ". "ທັນວາ!" ຂ້ອຍເວົ້າອອກພຽງເທົ່ານັ້ນ ໂທລະສັບກໍຫຼຸດອອກຈາກມືຕົກລົງພື້ນ ຮ່າງກາຍອ່ອນແຮງເຮັດຫຍັງບໍ່ຖືກ ໃຈເປັນຮ້ອນເປັນຮົນຄືຊິຫຼຸດອອກມາຢູ່ນອກ.
"ເປັນຫຍັງເກີດຫຍັງຂຶ້ນທັນວາເປັນຫຍັງ? ແມ່ເຈົ້າຖາມພ້ອມຈັບແຂນຂ້ອຍສັ່ນຄ່ອຍໆ" ຂ້ອຍເລົ່າເລື່ອງໃຫ້ລາວຟັງ ລາວລົ້ມທັງຢືນທັງຮ້ອງໄຫ້ໂອຍອາຍ ທຸກຄົນກັງວົນໂສເຫຼົ່າກັນຂຶ້ນເປັນວຸ່ນໆ ຈັກສຽງໃຜເປັນສຽງໃຜ ຟັງບໍ່ເຂົ້າໃຈເລີຍ ຂ້ອຍຮ້ອງສະຕິກັບຄືນມາ ກໍຟ້າວກະກຽມເຄື່ອງນຸ່ງເຄື່ອງໃຊ້ຈຳເປັນກ່ອນຈະອອກໄປເໝົາລົດຕູ້ຂອງຄົນເຮືອນໃກ້ເຂົ້າໄປຫາເຈົ້າຢູ່ໂຮງໝໍພ້ອມກັບແມ່ເຈົ້າ.

ພາບທີ່ຂ້ອຍເຫັນຕອນໄປຮອດໂຮງໝໍ ໃນຫ້ອງສຸກເສີນເປັນພາບຂອງ



ຊາຍໜຸ່ມທີ່ຖືກຜ້າຂາວຄວງນຫົວ ແລະຂາຂວາໄວ້ ໜ້າຕາໃຄ່ບວມເກືອບຈື່ບໍ່ໄດ້ວ່າແມ່ນເຈົ້າ.
"ໂອ່ຍ..! ລູກເອີ່ຍ ຖ້າກັບບ້ານພ້ອມກັນແຕ່ຕອນເຊົ້າກໍຄົງບໍ່ເຈັບໂຕແບບນີ້" ແມ່ເຈົ້າທັງໄຫ້ທັງຈົ່ມຄ່ອຍໆເກືອບບໍ່ໄດ້ຍິນ.
"ໃຈເຢັນກ່ອນແມ່ ຕອນນີ້ທັນວາກໍປອດໄພແລ້ວ ບໍ່ຕ້ອງກັງວົນທ່ານໝໍບອກວ່າສະໝອງບໍ່ໄດ້ຮັບການກະທົບກະເທືອນ ມີພຽງບາດແຜພາຍນອກເທົ່ານັ້ນ ອີກບໍ່ດົນກໍຈະເຊົາເປັນປົກກະຕິ" ຂ້ອຍເວົ້າພ້ອມທັງຈັບມືລາວໄວ້.

ຕະຫຼອດເວລາເກືອບສອງອາທິດທີ່ເຈົ້ານອນຢູ່ໂຮງໝໍຂ້ອຍກໍໄດ້ເຝົ້າເຈົ້າທຸກມື້ ຄອຍເຊັດໂຕໃຫ້ ປ້ອນເຂົ້າປ້ອນນໍ້າເຮັດທຸກຢ່າງຖືວ່າຕາງຕີນຕາງມືເຈົ້າເລີຍກະວ່າໄດ້ ຍ້ອນເຈົ້າຍັງບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ເທື່ອ ສ່ວນແມ່ເຈົ້າແມ່ນໄປນອນສອງສາມຄືນກໍໄດ້ກັບ ແລ້ວໃຫ້ພີ່ນ້ອງເຈົ້າຢູ່ທາງວຽງຈັນພີ້ທຽວມາສົ່ງເຂົ້າສົ່ງນໍ້າໃຫ້ຂ້ອຍ ຍ້ອນພໍ່ເຈົ້າຢູ່ບ້ານກໍບໍ່ຄ່ອຍສະບາຍ ຂ້ອຍເລີຍອາສາເບິ່ງເຈົ້າຢູ່ໂຮງໝໍ ແລ້ວໃຫ້ແມ່ເຈົ້າກັບໄປເບິ່ງແຍງທາງນັ້ນ ເພາະຍັງມີໄກ່ມີເປັດເກືອບ ໔00ໂຕ ຮວມທັງໜອງປາ ໜອງກົບອີກທີ່ຕ້ອງໄດ້ເບິ່ງ. ສ່ວນຜູ້ສາວເຈົ້າຄົນນັ້ນຂ້ອຍເຫັນລາວມາແຕ່ມື້ທຳອິດທີ່ເຈົ້າເຂົ້າໂຮງໝໍ ແລ້ວກໍບໍ່ເຫັນມາເບິ່ງເຈົ້າອີກເລີຍ.

ເມື່ອເຈົ້າໄຄຂຶ້ນແລ້ວກໍໄດ້ອອກໂຮງໝໍມາພັກຢູ່ເຮືອນ ຂ້ອຍກໍຍັງເບິ່ງແຍງດູແລເຈົ້າຢູ່ ເວລາຜ່ານໄປຫຼາຍອາທິດເຈົ້າຈຶ່ງເຊົາເປັນປົກກະຕິມີແຕ່ໜ້າທີ່ເປັນແປ້ວໜ້ອຍໜຶ່ງຢູ່ບ່ອນຄິ້ວ.
"ເມື່ອຍບໍ່? ທີ່ເບິ່ງແຍງຂ້ອຍມາໂດຍຕະຫຼອດ" ເຈົ້າຖາມເມື່ອຂ້ອຍຍ່າງໄປຫາເຈົ້າຢູ່ເຮືອນ.
"ບໍ່ເມື່ອຍດອກ ຂ້ອຍດີໃຈທີ່ໄດ້ເບິ່ງແຍງດູແລເຈົ້າ" ຂ້ອຍຕອບພ້ອມຮອຍຍິ້ມ.
"ຂອບໃຈເດີ ສຳລັບທຸກຢ່າງ ແລະຂໍໂທດທີ່ເຄີຍເຮັດໂຕບໍ່ດີ ໃນຕອນນີ້ຂ້ອຍຮູ້ແລ້ວວ່າ ຍິ່ງທ້ອງຟ້າມືດເທົ່າໃດ ກໍຍິ່ງເຫັນດວງດາວຊັດເຈນຂຶ້ນເທົ່ານັ້ນ" ເຈົ້າເວົ້າທັງຈັບມືຂ້ອຍໄວ້ ພ້ອມເວົ້າຕໍ່:



"ບໍ່ວ່າຈະເກີດຫຍັງຂຶ້ນກໍຕາມ ເຮົາຈະບໍ່ມີວັນຖິ້ມກັນ ແມ່ນແຕ່ຄວາມຕາຍກໍຈະແຍກເຮົາອອກຈາກກັນໄດ້ແຕ່ພຽງກາຍ ແຕ່ໃຈຈະມີກັນ ແລະກັນຕະຫຼອດໄປ"

ກິ່ງກິ່ງ.! ສຽງໂມງປຸກດັງຂຶ້ນພ້ອມກັບສຽງເວົ້າ "ຕື່ນລະບໍ່ລູກ?" ຂ້ອຍມືນຕາຂຶ້ນມາເຫັນຜູ້ຍິງຄົນໜຶ່ງ ທີ່ໜ້າຕາເສົ້າໝອງ ເນື້ອໜັງຫ່ຽວຍານຍ້ອນໄວສັງຂານເລີ່ມເຖົ້າ ມືທີ່ແຂງກະດ້າງຍ້ອນເຮັດວຽກໜັກ ເພື່ອໃຫ້ຂ້ອຍໄດ້ຢູ່ສະບາຍຈັບແຂນຂ້ອຍຄ່ອຍໆ ແລະເວົ້າຕໍ່ວ່າ "ລູກເປັນຈັ່ງໃດ? ບໍ່ຕ້ອງຄິດຫຍັງຫຼາຍເດີຢ່າງໃດກໍຍັງມີແມ່ຢູ່ຂ້າງເຈົ້າສະເໝີ ໃຜບໍ່ຮັກກໍບໍ່ເປັນຫຍັງ ແມ່ຮັກລູກສະເໝີ ລູກມີຄ່າເທົ່າກັບແກ້ວຕາດວງໃຈຂອງແມ່"

ຂ້ອຍລຸກຂຶ້ນກອດແມ່ດ້ວຍນໍ້າຕາແລະບໍ່ດົນກໍມີສຽງດົນຕີເສບດັງຂຶ້ນມາຈາກເຮືອນເຈົ້າ ມື້ນີ້ເປັນມື້ທີ່ເຈົ້າມີຄວາມສຸກ ແຕ່ເປັນມື້ທີ່ໃຈຂ້ອຍແຕກສະຫຼາຍ ຂ້ອຍເກັບມ້ຽນເຄື່ອງອອກເດີນທາງ ເພາະບໍ່ອາດຈະທົນເຫັນ ແລະຍອມຮັບຄວາມຈິງທີ່ໂຫດຮ້າຍນີ້ໄດ້ ຂ້ອຍບໍ່ຮູ້ບໍ່ເຂົ້າໃຈເລີຍວ່າ ເວລາພຽງປີດຽວທີ່ຂ້ອຍໄປວຽກຕ່າງແຂວງ ມັນສາມາດປ່ຽນໃຈເຈົ້າໄດ້ ຕອນນີ້ເຈົ້າກຳລັງເຂົ້າພາຂວັນແຕ່ງງານກັບຜູ້ຍິງຄົນນັ້ນ ເຈົ້າຖິ້ມຂ້ອຍທີ່ຮັກ ແລະຫວັງດີກັບເຈົ້າມາທັງຊີວິດ ເຈົ້າເຮັດລົງໄດ້ຈັ່ງໃດ ໃຈເຈົ້າຊ່າງດຳເຫຼືອເກີນ..!!!

...............

"ດວງ ມາໄວແດ່ຕິມົວອ່ານຫຍັງຢູ່ ໄວໆຊິຮອດໂມງເຂົ້າການລະນີ" ຂ້ອຍລະສາຍຕາຈາກໜັງສືທີ່ກຳລັງອ່ານຢູ່ ເມື່ອໄດ້ຍິນສຽງຄົນເອີ້ນ ຂ້ອຍເງີຍໜ້າຂຶ້ນເບິ່ງເປັນມັງກອນຄົນຮັກຂອງຂ້ອຍທີ່ຂັບລົດມາຈອດຖ້າຢູ່ໜ້າບ້ານ ຂ້ອຍພັບປຶ້ມເຂົ້າໄວ້ໃນຖົງກ່ອນຈະຍ່າງໄປຂຶ້ນລົດ ແຕ່ໃນຫົວຍັງຄຶດເຖິງເລື່ອງທີ່ອ່ານນັ້ນຢູ່ ບໍ່ຮູ້ວ່າຄົນຂຽນ ຂຽນມາຈາກຊີວິດຈິງ ຫຼືບໍ່? ຖ້າເປັນເລື່ອງຈິງ ກໍໜ້າອີ່ຕົນດາວທີ່ທຸ່ມເທທຸກຢ່າງເພື່ອຄົນຮັກ ແຕ່ກັບໄດ້ພຽງຄວາມຜິດຫວັງເຈັບຊໍ້າຕອບແທນ ແລະຖ້າເປັນເລື່ອງຈິງ ກໍຢາກຮູ້ວ່າຕອນນີ້ດາວເປັນຈັ່ງໃດ? ທຳໃຈຈາກເລື່ອງເຈັບຊໍ້ານັ້ນໄດ້ ຫຼືຍັງ..!!





**ຄວາມໄວ້ໃຈ ຄືເຄື່ອງມືອັນຕະລາຍທີ່ສຸດ ຂອງຄົນໃກ້ຊິດ**
**ທີ່ເຊື່ອໃຈ ມັກໃຊ້ທຳຮ້າຍກັນໄດ້ຢ່າງນິ້ມນວນ**
**ແລະເລືອດເຢັນທີ່ສຸດ.**

໑໗ ພຶດສະພາ ໒໐໑໗

# ຄວາມໄວ້ໃຈ

ໃນຄ່ຳຄືນທີ່ໄຮ້ແສງດາວປົກຄຸມໄປດ້ວຍຄວາມໜາວເຢັນຍ້ອນສາຍຝົນທີ່ກຳລັງຕົກລົງມາຢ່າງບໍ່ຂາດສາຍ ດອກໄມ້ນັ່ງຊື້ງບໍ່ເໜັງບໍ່ຕີງຕາຈ້ຶງເບິ່ງຢາດນ້ຳຝົນທີ່ກຳລັງຍ້ອຍລົງຜ່ານປ່ອງຢ້ຽມຢ່າງຊ້າໆ ດ້ວຍສາຍຕາທີ່ເສົ້າສຸດລະທົມ.

"ເຈົ້າມີເລື່ອງຫຍັງບໍ່ສະບາຍໃຈບອກຂ້ອຍໄດ້ບໍ່? ເພື່ອຊິໄດ້ແບ່ງເບົາຄວາມທຸກໂສກອອກຈາກໃຈເຈົ້າໄດ້" ຈັນເວົ້າທັງຈັບມືດອກໄມ້ໄວ້ຢ່າງແໜ້ນ.

ທັງສອງເປັນເພື່ອນທີ່ເຮັດວຽກຢູ່ໂຮງງານນຳກັນ ດ້ວຍຄວາມເປັນຫ່ວງທີ່ເຫັນອາການໂສກເສົ້າຂອງດອກໄມ້ມາສອງສາມມື້ແລ້ວ ຈັນເລີຍມານອນເປັນໝູ່ຢູ່ຫ້ອງພັກ.

ດອກໄມ້ແນມເບິ່ງໜ້າຈັນ ແລ້ວຖອນຫາຍໃຈບາດໃຫຍ່ໆ ແຕ່ນ້ຳຕາຍັງໄຫຼຍ້ອຍບໍ່ເຊົາ ໃນຫົວກໍຄຶດເຖິງເລື່ອງລາວທີ່ເກີດຂຶ້ນ:

..........

"ດອກໄມ້ ອາບນ້ຳແຕ່ງໂຕງາມໆເດີ ຈັກໜ້ອຍອ້າຍຊິໄປຮັບ" ອ້າຍຕົ້ນໂທມາບອກ.

"ໂດຍໆ ແລ້ວມື້ນີ້ອ້າຍຊິພານ້ອງໄປໃສ?" ຂ້ອຍຖາມລາວຄືນ.



"ອ້າຍໄປຮັບແລ້ວນ້ອງຊິຮູ້ເອງ ໄວໆເດີ"

ຂ້ອຍ ກັບ ອ້າຍຕົ້ນເຮົາຮູ້ຈັກກັນຢູ່ຮ້ານກິນດື່ມແຫ່ງໜຶ່ງ ແລະກໍລົມກັນມາໄດ້ໄລຍະໜຶ່ງແລ້ວ, ລາວນິໄສເປັນຜູ້ໃຫຍ່ຢູ່ໃກ້ແລ້ວອົບອຸ່ນຊ່າງເອົາໃ ຈເກັ່ງຢາກໄປທ່ຽວໃສກໍພາໄປ ຍາມຂ້ອຍບໍ່ສະບາຍລາວກໍດູແລຢ່າງດີ. ຈື່ໄດ້ວ່າມີເທື່ອໜຶ່ງທີ່ພາກັນໄປຢ່າງຫຼິ້ນແຄມຂອງ ຂະນະທີ່ພວມໄລ່ຢອກກັນນັ້ນຂ້ອຍໄດ້ເຕະກ້ອນຫີນເຂົ້າຢ່າງຈັງໂຕຂ້ອຍລົ້ມລົງໄປນອນນິ້ງຢູ່ກັບພື້ນ ຮູ້ສຶກເຈັບຂໍ້ຕີນພໍປານວ່າມັນຈະຂາດອອກຈາກກັນ ເຈັບຈົນຂ້ອຍລຸກເອງບໍ່ໄຫວລາວກໍໂຊມຂ້ອຍລຸກຂຶ້ນນັ່ງໂງ່ນຫີນທີ່ອ່າວສູງ ແຕ່ລາວນັ່ງລົງກັບພື້ນຂີ້ຊາຍ ແລ້ວກໍຍົກຂາເບື້ອງທີ່ຂ້ອຍເຈັບຂຶ້ນຄ່ອຍໆປົດເກີຂ້ອຍອອກຈົກເອົາແກ້ວຢາໃນຖົງອອກມາທາແລ້ວນວດໃຫ້ຄ່ອຍໆ ການກະທຳຂອງລາວເຮັດໃຫ້ຄວາມເຈັບປວດນັ້ນເຊົາໄປພໍປານປົດຖິ້ມ ລາວບໍ່ອາຍສາຍຕາຄົນອື່ນທີ່ແນມເບິ່ງເລີຍທີ່ເຮັດແບບນັ້ນໃຫ້ຂ້ອຍ.

ນັບແຕ່ຮູ້ຈັກກັບລາວກໍໄດ້ຫຼາຍເດືອນ ໄປໃສມາໃສນຳກັນຕະຫຼອດ ແຕ່ລາວບໍ່ເຄີຍລ່ວງເກີນຫຍັງໃນໂຕຂ້ອຍເລີຍ ຍ້ອນເຫດນີ້ຂ້ອຍຈຶ່ງໄດ້ຮັກລາວຫຼາຍໄວ້ໃຈລາວທຸກຢ່າງ.

ດອກໄມ້ຍິ້ມເມື່ອເວົ້າສຸດ ແລ້ວກໍເຮັດໜ້າເສົ້າກ່ອນຈະເລົ່າຕໍ່:

"ມື້ນີ້ເປັນວັນເກີດໝູ່ອ້າຍ ມັນຈັດງານວັນເກີດຢູ່ຫ້ອງແຖວບອກແຕ່ຄົນສະໜິດມາເທົ່ານັ້ນ" ລາວບອກຂ້ອຍຫຼັງໄປຮັບມາຮອດໜ້າຫ້ອງແຖວແຕ່ເປັນແຖວໃດຂ້ອຍກໍບໍ່ແນ່ໃຈເພາະຕອນນັ້ນມັນກໍມືດແດ່ແລ້ວ ແລະທາງໄປກໍສັບສົນແດ່ ແຕ່ຂ້ອຍບໍ່ຄຶດຫຍັງຫຼາຍເພາະໄປກັບລາວຂ້ອຍໄວ້ໃຈລາວທຸກຢ່າງ ແລ້ວພວກຂ້ອຍກໍເຂົ້າໄປຮ່ວມມ່ວນຊື່ນກັບພວກເຂົາ. ເວລາຜ່ານໄປຄາວໜຶ່ງຂ້ອຍເລີ່ມຮູ້ສຶກວິນຫົວທັງທີ່ດື່ມເບຍເຂົ້າໄປຈອກດຽວ.

"ແຟນມຶງເບິ່ງຊົງບໍ່ໄຫວແລ້ວຕິຫັ້ນ ບໍ່ແມ່ນມຶງໃສ່ຫຼາຍໂພດເບາະ ພາເຂົ້າໄປນອນໃນຫ້ອງກ່ອນໄປກູຊິເປັນມືກ້ອງໃຫ້" ຂ້ອຍແວ່ວໄດ້ຍິນເຂົາເຈົ້າລົມກັນ ແຕ່ບໍ່ແນ່ໃຈຍ້ອນສຽງເພັງດັງຫຼາຍ ຕາຂ້ອຍກໍຄືຊິມືນບໍ່ຂຶ້ນແລ້ວ ແລະຄາວໜຶ່ງຂ້ອຍກໍໄດ້ນອນຢູ່ເທິງຕຽງ ໃນຫ້ອງມືດໆມົວໆເຫັນຄືວ່າມີຜູ້ຊາຍສາມສີ່ຄົນຢືນລຽນ



ກັນຢູ່ "ຫຼືຂ້ອຍຕາລາຍ"ແລະໜຶ່ງໃນນັ້ນກໍຄືວ່າແມ່ນອ້າຍຕົ້ນ.

ແລ້ວຫຼັງຈາກນັ້ນກໍວຸ່ນໆກັນຈັກຫຍັງເປັນຫຍັງ ຮູ້ສຶກວ່າມີມືມາດຶງເສື້ອແຂນຍາວຂ້ອຍອອກເຫຼືອພຽງເສື້ອກ້າມ ແລ້ວຈາກນັ້ນຂ້ອຍກໍບໍ່ຮູ້ເມື່ອໂຕເລີຍ.

ມືນຕາມາອີກເທື່ອໜຶ່ງ ເຫັນຜູ້ຍິງໄວກາງຄົນຜິວຂາວຮູບຮ່າງຕຸ້ຍຄົນໜຶ່ງໃສ່ຊຸດສີຂາວ ຢືນຢູ່ຂ້າງຕຽງບ່ອນທີ່ຂ້ອຍນອນລາວເວົ້າກັບຂ້ອຍວ່າ:

"ຕື່ນແລ້ວບໍ່? ບໍ່ຕ້ອງຢ້ານເດີ ເຈົ້າປອດໄພແລ້ວ ໂຊກດີທີ່ຢາເຂົາເຈົ້າປົນໃສ່ກັບນ້ຳໃຫ້ເຈົ້າດື່ມນັ້ນມັນບໍ່ມີລິດແຮງປານໃດ ໝໍໄດ້ໃຫ້ຢາແກ້ແລ້ວ ຈັກໜ້ອຍອາການເຈົ້າກໍຈະເປັນປົກກະຕິ ຖືວ່າໂຊກດີທີ່ຕຳຫຼວດເຂົ້າໄປຊ່ອຍໄດ້ທັນເວລາ"

ຂ້ອຍເຮັດໜ້າງົງໆ ບໍ່ເຂົ້າໃຈວ່າລາວກຳລັງເວົ້າເຖິງເລື່ອງຫຍັງ.

"ມັນເກີດຫຍັງຂຶ້ນ? ຂ້ອຍມານີ້ໄດ້ແນວໃດ? ແລ້ວທຸກຄົນໄປໃສໝົດ?" ຂ້ອຍລຸກຂຶ້ນກ່ອນຈະຖາມ.

"ເຈົ້າຖືກພວກຜູ້ຊາຍທີ່ກິນເບຍນຳຫັ້ນ ເອົາຢາປະສົມກັບນ້ຳໃຫ້ເຈົ້າດື່ມຄົງຫວັງຈະລ່ວງລະເມີດທາງເພດເຈົ້າ ແຕ່ໂຊກດີທີ່ຕຳຫຼວດໄດ້ຮັບແຈ້ງຈາກຄົນຂ້າງຫ້ອງວ່າມີການຊຸມແຊວເກີນໂມງ ແລະເປີດເພັງສຽງດັງລົບກວນຜູ້ອື່ນ ເຂົາເລີຍເຂົ້າໄປກວດເບິ່ງ ແລະຊ່ອຍເຈົ້າໄວ້ທັນ. ສ່ວນພວກນັ້ນກໍຖືກພາໂຕໄປໄວ້ຫ້ອງການປກສ ເມືອງແລ້ວ. ສ່ວນເຈົ້າຕຳຫຼວດໄດ້ຕິດຕໍ່ກັບພາກສ່ວນທີ່ກ່ຽວຂ້ອງແລ້ວນຳສົ່ງໂຮງໝໍ".

ຂ້ອຍເກືອບເປັນວິນລົງກັບບ່ອນ ບໍ່ຢາກເຊື່ອໃນສິ່ງທີ່ໄດ້ຍິນ "ມັນເປັນໄປໄດ້ແນວໃດ? ອ້າຍຕົ້ນລາວກາຍເປັນຄົນແບບນີ້ໄດ້ຈັ່ງໃດ? ຄົນທີ່ຂ້ອຍຮັກໄວ້ໃຈທີ່ສຸດ ກາຍມາເປັນຜູ້ຮ້າຍທີ່ກຽມຈະສັງຫານຊີວິດຂ້ອຍຢ່າງເລືອດເຢັນ ລາວເຮັດແບບນີ້ກັບຂ້ອຍລົງໄດ້ຈັ່ງໃດ? ໂອ່ຍ! ປີສາດຮ້າຍໃນຮ່າງຂອງເທບພະບຸດແທ້ໆ ຂ້ອຍຫາກໍເຂົ້າໃຈຄຳບູຮານເພິ່ນວ່າ: "ນ້ຳກົດແຊ່ເຢັນ" ເປັນແບບນີ້ລະນໍ້ ຂ້ອຍຈົ່ມຄົນດຽວໃນໃຈ ທັງນ້ຳຕາກໍໄຫຼລົງຢ່າວໆ ຄືນນັ້ນຂ້ອຍໄດ້ນອນພັກຢູ່ໂຮງໝໍເພື່ອເບິ່ງອາການຮຸ່ງເຊົ້າຈຶ່ງໄດ້ກັບ.

..............



"ຄົງເພາະຂ້ອຍເປັນຄົນບໍ່ດີ ທຸກຄົນທີ່ເຂົ້າມາຈຶ່ງໄດ້ເຮັດຄືກັບຂ້ອຍເປັນດອກໄມ້ແຄມທາງ ທີ່ຄຶດພຽງເດັດດົມພໍໝົດກິ່ນຫອມກໍໂຍນຖິ້ມ"

"ເປັນຫຍັງຄືເວົ້າແບບນີ້ ຊີວິດເຮົາທຸກຄົນລ້ວນແຕ່ມີຄຸນຄ່າສະເໝີ ເຈົ້າຢ່າໄດ້ເອົາຊີວິດໄປບູຊາໃຫ້ກັບຄວາມຮັກໃຫ້ກັບຄົນທີ່ບໍ່ດີພຽງຄົນດຽວເລີຍ ຂ້ອຍເຊື່ອວ່າເຈົ້າຈະຕ້ອງໄດ້ພົ້ຄົນດີໆ" ຈັນເວົ້າພ້ອມທັງເຊັດນ້ຳຕາໃຫ້ດອກໄມ້.

"ໃນຊີວິດນີ້ຍັງຊິໄດ້ພົ້ນຳເຂົາຢູ່ບໍ່ຄົນດີໆແບບນັ້ນ"

"ຢ່າຟ້າວທໍ້ໃຈ ມື້ໃດທີ່ເຈົ້າຕື່ນມາຍັງມີດວງຕາເວັ້ນຂຶ້ນໃນຍາມເຊົ້າ ນັ້ນກໍສະແດງວ່າເຈົ້າຍັງມີໂອກາດເລີ່ມຕົ້ນໃໝ່ໄດ້ອີກ, ເລື່ອງມັນບໍ່ດີທີ່ຜ່ານມາກໍປ່ອຍໃຫ້ມັນຜ່ານໄປສາ ພວກນັ້ນກໍໄດ້ຮັບຜົນກຳທີ່ເຂົາເຮັດບໍ່ດີກັບເຈົ້າແລ້ວ ຕໍ່ໄປຈະມີແຕ່ເລື່ອງດີໆເຂົ້າມາ ແລະຂ້ອຍເຊື່ອວ່າບົດຮຽນຊີວິດເທື່ອນີ້ຈະເປັນໂຕຊ່ອຍເຈົ້າກັ່ນຕອງເອົາແຕ່ຄົນດີໆໄດ້ຢ່າງແນ່ນອນ..!!!".

................

ແກ໋ງ ແກ໋ງ...!

"ເອີາ... ເວລາໝົດຊໍ້າ ແລ້ວເລື່ອງຈົບແລ້ວຫວາ?" ສຽງນັກຮຽນໃນຫ້ອງຖາມພືດຂຶ້ນເມື່ອໄດ້ຍິນສຽງແກ໋ງໝົດຊົ່ວໂມງຮຽນດັງຂຶ້ນ.

"ດີຫຼາຍໆ ຊົມເຊີຍເດີ ເຈົ້າຮ້ອຍຕໍ່ເລື່ອງລາວໄດ້ໜ້າສົນໃຈ ແລະມີຄະຕິແອບແຝງໄດ້ດີຫຼາຍ ສື່ໃຫ້ເຫັນເຖິງບັນຫາສັງຄົມປັດຈຸບັນໄດ້ຢ່າງພໍເໝາະພໍດີ ຖ່າຍທອດຄວາມຮູ້ສຶກເລື່ອງລາວຕ່າງໆອອກມາໄດ້ດີຫຼາຍ ພໍປານມັນເກີດຂຶ້ນກັບຕົນເອງແທ້..." ສຽງອາຈານເວົ້າຂຶ້ນພ້ອມສຽງຕົບມືກໍດັງຂຶ້ນຕາມ ເມື່ອແວວອ່ານບົດເລື່ອງຈົບລົງ.

ຄວາມຈິງ ກັບ ຄວາມຝັນ ຕ່າງກັນທີ່ຕອນນອນຫຼັບ
ແລະຜົນຂອງຄວາມຈິງທີ່ໄດ້ຮັບກໍມັກຈະຫຼັບຕາບໍ່ລົງ

໑໔ ກຸມພາ ໒໐໑໗







# ຝັນສະຫຼາຍ

"ສຸກ ຂ້ອຍຂໍເວລາອີກສອງປີ ໃຫ້ຂ້ອຍເຮັດວຽກທ້ອນເງິນກ່ອນໄດ້ບໍ່? ຂ້ອຍໃຫ້ສັນຍາວ່າຈະຫາເງິນໄປຂໍແຕ່ງເຈົ້າໄດ້ຢ່າງແນ່ນອນ"

"ສອງປີຊັ້ນຫວະ ຂ້ອຍຖ້າດົນປານນັ້ນບໍ່ໄດ້ດອກ ແລະທີ່ສຳຄັນຕອນນີ້ຂ້ອຍກໍມີຄົນໃໝ່ທີ່ທັງດີ ທັງຫຼໍ່ ທັງລວຍກວ່າເຈົ້າເຂົ້າມາພົວພັນຢູ່ ຖ້າເຈົ້າຮັກຂ້ອຍແທ້ກໍຈົ່ງຫຼີກທາງໃຫ້ຂ້ອຍໄດ້ເລືອກສິ່ງທີ່ດີກວ່າສາ ຢ່າພະຍາຍາມດຶງຂ້ອຍລົງໄປທຸກຍາກລຳບາກນຳເຈົ້າເລີຍ"

"ແລ້ວເລື່ອງຂອງເຮົາເດ ຄວາມຜູກພັນທີ່ມີຕໍ່ກັນມາຫຼາຍປີເຈົ້າຈະຖິ້ມມັນລົງພຽງເພາະເງິນນີ້ໄດ້ຫວາ?"

"ແນ່ນອນ ເມື່ອມີຂົວຄຳໃຫ້ໄຕ່ເຫດໃດຂ້ອຍຊິທົນຂ້າມຂົວໄມ້ໂດກໆທີ່ບໍ່ຮູ້ວ່າຈະຫັກລົງເຫວມື້ໃດແນວນີ້ ຂ້ອຍວ່າເລື່ອງເຮົາຈົບລົງເທົ່ານີ້ແຫຼະດີແລ້ວ ຢ່າໄດ້ມີເຍື່ອໃຍຕໍ່ກັນອີກເລີຍ... ລາກ່ອນ" ສຸກເວົ້າຈົບກໍຍ່າງຫັນຫຼັງຈາກທອງໄປຂຶ້ນລົດເກງທີ່ຈອດຖ້າຢູ່ແຄມທາງ ຍ່າງບໍ່ຫຼຽວກັບຫຼັງມາເບິ່ງຄົນທີ່ກຳລັງລົ້ມທັງຢືນພ້ອມນ້ຳຕາໄຫຼຊະໆ.

"ເອົາເບຍມາໃຫ້ອີກແດ່ສອງແກ້ວ" ທອງເອີ້ນສັ່ງເບຍມາເພີ່ມດ້ວຍນ້ຳສຽງທີ່ຟັງເກືອບບໍ່ເຂົ້າໃຈ ທັງນັ່ງໂຫງດເຫງດຢູ່ຄືຫົວຊິປັກລົງພື້ນ.

"ພໍໄດ້ລະຕິສ່ຽວ ໂຕເມົາແຮງລະໃດ໋ ພຽງຜູ້ຍິງຄົນດຽວທີ່ບໍ່ຮັກຖິ້ມໂຕໄປຊື່ໆເຮັດໃຫ້ໂຕເປັນໄດ້ປານນີ້ຫວາ ໂຕຕ້ອງປຸ່ງນໂຕເອງລຸກຂຶ້ນມາສູ້ ບໍ່ແມ່ນມານັ່ງເມົາແອະເມົາແອ່ນໃຫ້ເຂົາຫົວຂວັນຈັ່ງຊີ້ ມັນບໍ່ໄດ້ຊ່ອຍໃຫ້ຄວາມເຈັບປວດຫາຍໄປເລີຍ ດີບໍ່ດີຊິເພີ່ມຄວາມເຈັບໃຫ້ເຕີ່ມຊ້ຳບາດຍາມເມົານ່າ ເຮົາວ່າພໍໄດ້ລະ ໄປເມືອເຮົາຊິໄປສົ່ງໂຕເອງ." ຄຳເວົ້າພ້ອມດຶງແຂນທອງລຸກຂຶ້ນ.



"ບໍ່ ເຮົາບໍ່ເມືອ ຊິກິນໃຫ້ມັນເມົາ ໃຫ້ມັນລືມຄົນຫຼາຍໃຈ..." ທອງເວົ້າເກືອບບໍ່ໝົ້ນປາກກໍຫຼັບຄາໂຕະເບຍ ຄຳກໍໄດ້ແບກທອງກັບໄຄແຕ່ເຮືອນຢູ່ບໍ່ໄກ.

ເຊົ້າມື້ໃໝ່ຕາເວັນແຫຍ່ກົ້ນທອງຈັ່ງໂງເງລຸກຈາກບ່ອນນອນ.

"ລູກໄດ້ລະເບາະ ໄປຫາອາບນ້ຳໃຫ້ຊື່ນກ່ອນຂອງກິນຢູ່ພາເຂົ້າຫັ້ນແມ່ເຮັດແກງຮ້ອນໆໃຫ້ເພື່ອຊິໄດ້ສ່ວງເມົາ ກິນເຂົ້າແລ້ວເຮົາຈັ່ງມານັ່ງລົມກັນ" ແມ່ທອງບອກພ້ອມຊີ້ມືໄປຍັງພາເຂົ້າ.

ຫຼັງຈາກກິນເຂົ້າແລ້ວການສົນທະນາລະຫວ່າງແມ່ລູກກໍເລີ່ມຂຶ້ນ:

"ລູກເອງກໍຈົບແຕ່ມໍປາຍມາຫຼາຍປີລະເນາະ ແມ່ໄປປະຊຸມມື້ວານນີ້ຢູ່ວັດ ຫົວໜ້າບ້ານເພິ່ນແຈ້ງວ່າ ທາງເມືອງເຮົາໄດ້ຮັບທຶນຊ່ອຍເຫຼືອຈາກຕ່າງປະເທດ ຖ້າໃຜເສັງໄດ້ແມ່ນໄດ້ທຶນຮຽນລ້າໆຢູ່ໂຮງຮຽນໃນຕົວເມືອງໃຫຍ່ ແມ່ວ່າກໍໜ້າສົນໃຈດີເດະ ລູກບໍ່ຢາກລອງໄປເສັງເບິ່ງເບາະ ບາງເທື່ອໂຊກເຂົ້າຂ້າງເຮົາໃດ໋"

"ໂດຍແມ່ ລູກຕົກລົງຈະເຂົ້າໄປສອບເສັງ ແລະຈະເຮັດສຸດຄວາມສາມາດທີ່ມີ" ທອງເວົ້າກັບແມ່ດ້ວຍຄວາມມານະຢ່າງສູງ ເພາະເຖິງແມ່ນຊິຈົບແຕ່ມໍປາຍມາຫຼາຍປີ ແຕ່ທອງກໍບໍ່ໄດ້ຢຸດທີ່ຈະຊອກຮູ້ຮ່ຳຮຽນເພີ່ມນຳປຶ້ມຕຳລາ ຫຼືຜູ້ຮູ້.

..............

"ສຸກ ລູກຄິດຖືກແລ້ວລະທີ່ເຊົາກັບບັກທອງ ແລ້ວເລືອກແຕ່ງງານກັບທ້າວສັກນີ້ນ່າ ດຽວນີ້ບັກທອງບໍ່ແມ່ນມັນໄປເປັນກຳມະກອນຢູ່ໃນເມືອງພຸ້ນລະເບາະ ຖ້າລູກເອົາກັບມັນ ມັນຄືຊິພາລູກພາຄອບຄົວເຮົາທຸກແທ້ໆ"

"ແນ່ນອນລະແມ່ ເຮົາກໍຕ້ອງເລືອກຄົນທີ່ລວຍກວ່າຢູ່ແລ້ວ ຍ້ອນຮັກຊື່ໆກິນຕາງເຂົ້າບໍ່ອີ່ມຄືມີເງິນມີຄຳແນວນີ້ເດະ" ສຸກເວົ້າພ້ອມແຍງເບິ່ງແຫວນ ສາຍແຂນຄຳທີ່ຕົນໃສ່ຢູ່.

"ແລ້ວນີ້ຜົວລູກໄປໃສລະ? ລະວັງໃດ໋ປະໃຫ້ໄປແຕ່ຄົນດຽວຈັກໜ້ອຍຜູ້ສາວເລາະສາວເລງກະຄຸບເອົາມັນແຫຼະ" ແມ່ສຸກເວົ້າຂຶ້ນພ້ອມຫຼຽວຫາຜູ້ລູກເຂີຍ.

"ມື້ນີ້ວັນສິນ ລາວໄປຕີໄກ່ກັບໝູ່ລາວຢູ່ບ້ານເໜືອພຸ້ນ"

"ຢູ່ສັງວຽນໄກ່ຫັ້ນແຫຼະໂຕດີນ່າ ຜູ້ສາວຫາເງິນບັກຫຼາຍໆ ໄປເຫຍັ້ນເຫຼົ້າເຫຍັ້ນເບຍຢູ່ຫັ້ນ ທາງທີ່ດີລະນຳໄປເຝົ້າເບິ່ງມັນພຸ້ນ ດີກ່ອນມານັ່ງແຕ່ງເພດຢູ່ນີ້"

"ແທ້ຫວາແມ່ ຊັ້ນເຮົາຊິໄປຈອບເບິ່ງກ່ອນ ມ້ຽນເຄື່ອງພວກນີ້ໃຫ້ເຮົາແດ່ເດີ ໄປກ່ອນ" ສຸກເວົ້າຈົບກໍຟ້າວແລ່ນໄປຫາລົດຈັກຂັບນຳໄປຫາຜົວຢູ່ສັງວຽນໄກ່.

ບັນຍາກາດພາຍໃນສັງວຽນໄກ່ເຕັມໄປດ້ວຍສຽງຟົດຟື້ນ ບໍ່ຈັກສຽງໄກ່ສຽງຄົນດັງປົນກັນແຊວຊະ ຜູ້ຄົນມາກໜ້າຫຼາຍຕາ ບໍ່ຈັກຍິງຊາຍພໍປານປາງບຸນໃຫຍ່ມີຮອດຮ້ານຂາຍເຫຼົ້າເບຍ ຂາຍເຂົ້າປາອາຫານກັບແກ້ມສາລະພັດ ຜູ້ສາວຄົນໃດກໍນຸ່ງແຕ່ໂສ້ງຂາເຂີນໆເສື້ອສາຍດ່ຽວ ອູ້ມໄກ່ຕີໃຫ້ພວກເຖົ້າແກ່ທັງຫຼາຍ. ບາງຄົນກໍເຫຍັ້ນເຫຼົ້າເຫຍັ້ນເບຍໃຫ້ເຂົາຈັບຫັ້ນບາຍນີ້ກໍໄດ້ເງິນ. ສຸກກວດສາຍຕາເບິ່ງໂດຍຮອບເພື່ອຊອກຫາຜົວ. ຢູ່ແຈສັງວຽນດ້ານຄົນຫຼາຍໆສຸກແນມເຫັນສາວຄີງບາງຮ່າງນ້ອຍພວມນັ່ງເທິງຕັກຜູ້ຊາຍຄົນໜຶ່ງພ້ອມເຊັດຂົນໃຫ້ໄກ່ຕີຢູ່ ແຕ່ກໍປານກັບລະເບີດລົງທັນທີ ເມື່ອແນມເຫັນໜ້າຜູ້ຊາຍຄົນນັ້ນແມ່ນຜົວຕົນ.

"ຈັ່ງແມ່ນບໍ່ອາຍຟ້າອາຍດິນເນາະ ອີໜ້າດ້ານມຶງບໍ່ຮູ້ເບາະນີ້ຜົວກູ" ສຸກຍ່າງໄປດຶງແຂນສາວນັ້ນອອກຈາກຕັກຜູ້ຜົວພ້ອມຊີ້ໜ້າດ່າ ບໍ່ຈັກຄົນຈັກໄກ່ແຕກກັນເປັນອື້ນໆ ທຸກສາຍຕາຈັບຈ້ອງເບິ່ງສຸກຜູ້ດຽວ.

"ຢ່າມາວິນວາຍອ້າງວ່າເປັນເມຍຢູ່ນີ້ໃດ໋ ສ່ຳເມຍກູຫາມື້ໃດກໍໄດ້ໃດ໋ ຊິເມືອລະຮິບເມືອກ່ອນຄວາມອົດກູຊິບໍ່ມີ" ສັກເວົ້າດ້ວຍຄວາມໂມໂຫແກມອາການເມົາພ້ອມຍົກມືຂຶ້ນຄືຊິຕີແຕ່ກໍຢຸດຄ້າງຢູ່ເທິງ. ສຽງຄົນຮ້ອງໂຮຂຶ້ນ ທັງຫົວຂວັນ ເບະສົບໃສ່ຈົນສຸກເກືອບຫອບຄວາມອັບອາຍອອກມາບໍ່ທັນ.

ຫຼັງຈາກເຫດການນັ້ນ ສຸກກໍກັບມາລໍຖ້າຜົວຢູ່ເຮືອນ ຈົນກາຍທ່ຽງຄືນແລ້ວ ແຕ່ກໍຍັງບໍ່ເຫັນຜົວກັບມາເທື່ອ ໂທນຳກໍນອດມືຖືໃສ່ ສຸກລໍຖ້າຈົນເຜີຫຼັບໄປ ບໍ່ດົນສຽງແກລົດກໍດັງຂຶ້ນສຸກສະເດີດຕື່ນທັງຫຼັບຟ້າວລຸກໄປໄຂປະຕູ.

"ປານນີ້ຈັ່ງກັບນໍ້! ເບິ່ງດູໜ້າຕາມີແຕ່ຮອຍສະຕິກ ເຈົ້າຄືເຮັດແນວນີ້ ພາອີ່ນັ້ນໄປໃສຮອດໃສມາແລ້ວ" ສຸກເວົ້າພ້ອມຊີ້ມືໃສ່ໜ້າຜົວບ່ອນທີ່ມີຮອຍສະຕິກຕິດຢູ່.

"ຢ່າມາວຸ່ນວາຍກັບຂ້ອຍ ມັນເລື່ອງຂອງຂ້ອຍ"

"ແຕ່ຂ້ອຍເປັນເມຍເຈົ້າໃດ໋ ແລະເຮົາກໍມີລູກນຳກັນແລ້ວ ເຈົ້າຄືຍັງຫຼິ້ນຍັງກິນແນວນີ້ຢູ່"

"ຢ່າມາອ້າງເມຍເມີຢູ່ນີ້ໃດ໋ ສ່ຳເມຍບໍ່ແມ່ນແມ່ປະມື້ອື່ນເອົາໃໝ່ມື້ອື່ນນີ້ກໍຍັງໄດ້"



ສັກເວົ້າພ້ອມຊີ້ມືໃສ່ຫົວສຸກຍູ້ອອກໄປ ແລ້ວຕົນກໍຍ່າງເຊໆເຂົ້າໄປໃນຫ້ອງ. ດີແຕ່ສຸກໃຫ້ລູກໄປນອນນຳແມ່ຕູ້ ເພື່ອບໍ່ຢາກໃຫ້ລູກເຫັນພໍ່ແມ່ຜິດຖຽງກັນ.

ສຸກເວົ້າບໍ່ອອກພໍຄວາມ ເພາະເຖິງເວົ້າໄປກໍຄົງໄຮ້ປະໂຫຍດເພາະສັກຍັງເມົາຢູ່ ສຸກໄດ້ແຕ່ນັ່ງໄຫ້ຢູ່ຕັ່ງ ຄິດເຖິງຕອນທີ່ຮັກກັນໃໝ່ໆບໍ່ຄິດວ່າຊິເປັນແນວນີ້ ປານໜ້າມືເປັນຫຼັງມື. ບໍ່ຄືຕອນຮັກກັບທອງມີແຕ່ຕົນທີ່ຊີ້ນີ້ວສັ່ງ ທັງຮ້າຍທັງດ່າແຕ່ທອງກໍບໍ່ຕອບໂຕ້ພໍຄວາມ ສຸກນັ່ງຄິດໄປໄຫ້ໄປຈົນຫຼັບຄາຕັ່ງຕອນໃດບໍ່ຮູ້ຈົນສອດແຈ້ງຈ່າງປ່າງ.

ເກືອບສິບໂມງແລ້ວສັກຈຶ່ງໂງເງລຸກອອກມາຈາກຫ້ອງ.

"ມື້ຄືນນີ້ເຈົ້າໄປໃສມາ? ແລ້ວໄປກັບໃຜ?"

"ກະໄປສ້າງສັນກັບໝູ່ກັບພວກມາຕວ່າ ຢ່າມາສົ້ມາຖາມແຕ່ເຊົ້າຫຼາຍໃດ໋"

"ໄປກັບໝູ່ຊັ້ນຫວະ ໝູ່ໃຫຍ່ຫງາຍທ້ອງໃສ່ກັນຫັ້ນຕິ"

"ແລ້ວເຈົ້າຊິເຮັດຫຍັງໃຫ້ຂ້ອຍ ເງິນຄຳກະມີໃຫ້ຈ່າຍ ເຮືອນກະມີໃຫ້ຢູ່ ລົດກະມີໃຫ້ຂີ່ ລະເຈົ້າຕ້ອງການຫຍັງອີກ"

"ຄວາມຮັກ ຄວາມສຸກຂອງຄອບຄົວເຈົ້າບໍ່ເຄີຍມີໃຫ້ຂ້ອຍເລີຍນັບແຕ່ເອົາກັນມາສີ່ຫ້າປີນີ້"

"ຄວາມຮັກຊັ້ນຫວະ! ຂ້ອຍຄິດວ່າເຈົ້າຢາກໄດ້ແຕ່ເງິນ ມັກແຕ່ເງິນບໍ່ແມ່ນເບາະຈັ່ງມາເອົາກັບຂ້ອຍ, ຖ້າເຈົ້າຕ້ອງການຄວາມຮັກເຈົ້າຊິຖິ້ມບັກແຟນເກົ່າມາເຮັດຫຍັງລະ" ສັກເວົ້າພ້ອມເບະສົບໃສ່ແລ້ວຍ່າງໄປຫາລົດຂັບອອກເຮືອນໄປ.

"ເປັນຫຍັງລູກ ຜິດຫຍັງກັນອີກ?" ແມ່ສຸກຍ່າງມາຖາມ.

"ເຮົາເລີ່ມຊິອົດບໍ່ໄດ້ແລ້ວ ແຕ່ລະມື້ໄປເຊົ້າເມົາກັບມາເດິກທຸກຄືນ ບໍ່ຈັກໄປມີເມຍນ້ອຍຫ້ອຍເມຍປາຍຢູ່ໃສແດ່ ເຮົາຊິປະກັບລາວ"

"ປະບໍ່ໄດ້ ຈັ່ງໃດກະອົດເອົາໃດ໋ ຖ້າປະກັບມັນແລ້ວຊິເອົາເງິນແຕ່ໃສມາໃຊ້ຈ່າຍຊິຫອບລູກມາຢູ່ເຮືອນນຳພໍ່ແມ່ນີ້ຫວະ ກູລ້ຽງບໍ່ກຸ້ມດອກ ຈັ່ງໃດກໍຕ້ອງອົດທົນໄປ. ແລ້ວນີ້ມີເງິນບໍ່ເອົາມາໃຫ້ແດ່ດຸ ຊິໄປຕໍ່ເອົາທຶນຄືນ ມື້ວານນີ້ເສຍຫຼາຍ"

"ແມ່ ເຮົາອຸກໃຈເລື່ອງຜົວຢູ່ປານນີ້ ເຈົ້າຍັງມາຂໍເງິນໄປຫຼິ້ນໄພ້ອີກຫວະ?"

"ໂອ່ຍ! ຜົວເມຍກະຄືແຂ້ວກັບລີ້ນນີ້ລະ ໂຕເປັນເມຍເຮັດຄືແຂ້ວເບື້ອງເທິງນີ້ລະ



ແລ້ວນ່າ ຂໍແຕ່ມີເງິນໃຊ້ບໍ່ຂາດມືກະພໍລະຕວ່າ ຊິຖ້າເອົາຫຍັງຫຼາຍອີກ. ຢູ່ໃສເງິນເອົາມາໆ" ແມ່ສຸກເວົ້າພ້ອມຫຼຽວຊອກຫາກະເປົາເງິນ ເຫັນເງິນວາງຢູ່ໂຕະຈຳນວນໜຶ່ງກໍຟ້າວຍ່າງໄປຈັບເອົາແລ້ວກໍຟ້າວອອກເຮືອນໄປ.

"ຮວ້າຍ! ເຖົ້າເອົາມາປັນກັນແດ່ຕິ ບັກສ່ຽວໂທຫາໃຫ້ໄປຊຸມກັນຢູ່ນີ້" ພໍ່ສຸກຍ່າງເຊມາແຕ່ເຮືອນຊົງຄົນເມົາ ຖາມເອົາເງິນນຳຜູ້ເປັນເມຍ ເພື່ອໄປຊຸມເຫຼົ້າກັບບັນດາສ່ຽວຂີ້ເມົາທັງຫຼາຍ.

ສຸກໄດ້ແຕ່ແນມນຳຫຼັງຜູ້ເປັນແມ່ ກັບພໍ່ ແລະຮອຍຕີນລົດຜົວດ້ວຍນ້ຳຕາແຫ່ງຄວາມເຈັບປວດແສນທຸກລະທົມ ໃນຕອນນີ້ສຸກບໍ່ເຫຼືອໃຜຈັກຄົນແມ່ນແຕ່ ຈະຮັບຟັງຄວາມທຸກຂອງຕົນ.

"ຖ້າມື້ນັ້ນຂ້ອຍບໍ່ເລືອກເງິນແລ້ວຖິ້ມເຈົ້າມາ ຂ້ອຍຄົງບໍ່ພໍ້ກັບເຫດການແບບນີ້ ມັນຄືຊິແມ່ນຜົນກຳທີ່ຂ້ອຍໄດ້ເຮັດໄວ້ກັບເຈົ້າລະນໍ້ທອງ" ສຸກນັ່ງຈົ່ມໄປໄຫ້ໄປຄົນດຽວຢູ່ໃນເຮືອນ.

"ແມ່ໄຫ້ເຮັດຫຍັງ?" ນ້ຳສຽງແຫຼມໆພ້ອມມືນ້ອຍໆມາຈັບບ່າ ສຸກເງີຍໜ້າຂຶ້ນເບິ່ງເຫັນໃບໜ້າໃສຊື່ພ້ອມແວວຕາທີ່ໄຮ້ດຽງສາຂອງລູກສາວສຸກໂອບກອດລູກໄວ້ດ້ວຍຄວາມຮັກ ແລະນ້ຳຕາ.

"ແມ່ບໍ່ໄດ້ເປັນຫຍັງ ລູກໄປຫຼິ້ນໃສມາ?" ສຸກຖາມພ້ອມເຊັດນ້ຳຕາ ເປີດຮອຍຍິ້ມໃຫ້ລູກສາວ.

"ແມ່ມີກະແລັມຢູ່ຕູ້ເຢັນເຮົາໄປກິນກະແລັມກັນເນາະ" ລູກສາວຍິ້ມພ້ອມງຶກຫົວແລ່ນໄປໄຂຕູ້ເຢັນ.

ນັບມື້ສັກແຮ່ງຕິດການພະນັນຂຶ້ນເລື້ອຍໆ ບາງມື້ບໍ່ກັບຮອດເຮືອນປະໃຫ້ເມຍກັບລູກຢູ່ເຮືອນສອງຄົນ ແລ້ວຕົນກໍໄປເລາະສຳມະເລເທເມົາ ພ້ອມການພະນັນຄົບວົງຈອນ. ຜູ້ເປັນແມ່ຕັ້ງແຕ່ໄດ້ລູກເຂີຍລວຍມານີ້ ກໍເລີ່ມຫຼິ້ນໄພ້ຈົນກາຍເປັນອາຈີນ ຫຼິ້ນຈົນເປັນໜີ້ສິນແລ້ວມາຖາມເອົາເງິນນຳລູກໄປຈ່າຍໂດຍອ້າງຄ່ານ້ຳນົມທີ່ລ້ຽງມາແຕ່ຍັງນ້ອຍ. ສ່ວນຜູ້ພໍ່ກໍເມົາທຸກມື້ ໃຊ້ຊີວິດພໍຂ້າມມື້ຂ້າມວັນໄປຊື່ໆ. ຕອນນີ້ສຸກຕ້ອງປະເຊີນກັບບັນຫາຮ້ອຍແປດນີ້ພຽງຄົນດຽວໂດຍມີລູກທີ່ພໍເປັນກຳລັງໃຈໃຫ້.



ເມື່ອນັບມື້ພຶດຕິກຳຂອງສັກຍິ່ງເພີ່ມທະວີຄວາມຮ້າຍແຮງຂຶ້ນເລື້ອຍໆ ຈົນບາງເທື່ອເຖິງຂັ້ນລົງມືຕົບຕີສຸກກໍມີ ດ້ວຍເຫດນີ້ສຸກຈຶ່ງຕັດສິນໃຈເຮັດບາງຢ່າງ ເພື່ອບໍ່ໃຫ້ລູກຕ້ອງເຕີບໃຫຍ່ຂຶ້ນມາໃນສະພາບຄອບຄົວທີ່ເຕັມດ້ວຍບັນຫາຮ້ອຍແປດແບບນີ້.

................

"ຄະດີປະຮ້າງນີ້ນັບມື້ແຮ່ງຫຼາຍ ຍ້ອນຄົນສ່ວນຫຼາຍເອົາກັນຕອນທີ່ຮັກຍັງຫອມຫວານ ແຕ່ຍັງຂາດຄວາມຮັບຜິດຊອບ ພໍເອົາກັນໄປພໍ້ບັນຫາໜ້ອຍໜຶ່ງກໍຜິດຖຽງກັນ ບໍ່ມີໃຜຍອມໃຜ ສຸດທ້າຍກະໄດ້ປະຮ້າງ. ແລະຕາມທີ່ສັງເກດຈາກການລົງເຝິກງານ ການຕັດສິນບັນຫາຂອງເຈົ້າທີ່ຜ່ານມາ ຖືວ່າຜ່ານເກນທີ່ກຳນົດໄວ້ ດັ່ງນັ້ນໃນຄະດີຢ່າຮ້າງໃນອາທິດໜ້ານີ້ ຂ້ອຍຈະໃຫ້ເຈົ້າເຂົ້າຮ່ວມຕັດສິນນຳພ້ອມກັບຄະນະ" ທອງນອມຮັບຄຳສັ່ງພ້ອມຮອຍຍິ້ມ ພ້ອມທີ່ຈະພິສູດຄວາມສາມາດຂອງຕົນໃຫ້ທຸກຄົນໄດ້ເຫັນ.

ພາຍໃນຫ້ອງສານຕັດສິນຄະດີ ບັນຍາກາດປົກຄຸມໄປດ້ວຍຄວາມເຄັ່ງຄຽດ ໂດຍມີຄົນສອງກຸ່ມນັ່ງແຍກກັນຢູ່ສອງຝ່າຍ.

"ເອກະສານທີ່ໃຫ້ໄປເອົາໄດ້ແລ້ວ" ທອງເວົ້າພ້ອມຍື່ນຊອງເອກະສານໃຫ້ຄົນໜຶ່ງທີ່ນັ່ງຢູ່ໂຕະຄະນະກຳມະການເທິງເວທີ ແລ້ວຕົນກໍນັ່ງລົງທາງຂ້າງ. ແຕ່ເຖິງກັບຕົກສະເງີ້ ເມື່ອສາຍຕາທັງສອງປະສານກັນ ສຸກຕ້ອງຫຼົບສາຍຕາທັນທີ ເມື່ອແນມເຫັນທອງນັ່ງຢູ່ເທິງເວທີເປັນໜຶ່ງໃນຜູ້ຕັດສິນຄະດີ. ໃຜຈະຄິດວ່າຄົນທີ່ຕົນຖິ້ມໄປ ເພາະດູໝິ່ນວ່າເຂົາທຸກຈົນ ດ້ອຍຄ່າ ເພື່ອໄປຫາຄົນທີ່ຕົນຄິດວ່າ ດີກວ່າລວຍກວ່າຈະເປັນຄົນດຽວທີ່ມາຕັດສິນຄະດີຢ່າຮ້າງໃຫ້ກັບຊີວິດຮັກຕົນໃນມື້ນີ້.

ຕົ້ນໄມ້ຈະຄົງຢູ່ໄດ້ນັ້ນ ບໍ່ຂຶ້ນກັບວ່າຕ້ອງມີລຳໃຫຍ່
ຫຼືປາຍຕ້ອງສູງ
ແຕ່ເພາະມີຮາກທີ່ຊ່ອຍດູດດຶງດິນໄວ້ຕ່າງຫາກ

໘ ທັນວາ ໘໐໑໗





**ຮູບພາບ** ອັກສອນທັມ ( Cr ມໍຣະດົກລາວລ້ານຊ້າງ www.lao-online.com )



# ພາສາ... ລາວ
## (ພາກ ປະຖົມ)

ບັນຍາກາດຍາມບ່າຍອັນຮ້ອນອົບເອົ້າ ແຕ່ອອນຊອນນຳສຽງດົນຕີທຳມະຊາດຂອງຈັກຈັ່ນຮ້ອງແຊວໆ.

“ເບິ່ງຫຍັງຢູ່ເຮີຍ?” ດີເອີ່ຍຖາມເມື່ອຍ່າງມາເຫັນວອນນັ່ງມິດຢູ່ຜູ້ດຽວ.

“ເບິ່ງວິທີສະກົດຄຳຕາມເຄົ້າຢູ່ ເຂົາເຈົ້າເອົາລົງໃຫ້ເບິ່ງນີ້” ວອນຕອບໂດຍທີ່ບໍ່ລະສາຍຕາຈາກໜ້າຄອມ.

“ຄືມີຫຼາຍຕົວແທ້ ພະຍັນຊະນະລາວຄືວ່າມີແຕ່ ໒໗ ຕົວບໍ່ແມ່ນຫວະ?

“ເຂົາເຈົ້າວ່ານີ້ ຖ້າຈະສະກົດຕາມເຄົ້າລາວແທ້ຕ້ອງໃຊ້ ໔໔ ຕົວພຸ້ນໃດ໋ ເບິ່ງເຂົາເຮັດອອກມານີ້” ວອນເວົ້າພ້ອມຊີ້ມືໃສ່ໜ້າຄອມໃຫ້ດີເບິ່ງ.

“ເບິ່ງບໍ່ເຂົ້າໃຈ ອ່ານຍາກນໍ້ ຫຼາຍຄົນກໍສະກົດຫຼາຍແນວ ຈັກສະກົດຈັ່ງໃດແທ້ທີ່ຖືກ ເຮົາວ່າໄປຖາມຜູ້ຮູ້ໃຫ້ເພິ່ນອະທິບາຍໃຫ້ຟັງເບາະ” ດີເອີ່ຍຊວນຂຶ້ນ.

ທັງສອງພວມສຶກສາຢູ່ວິທະຍາໄລ ຝ່າຍອັກສອນສາດ ຈຶ່ງໃຫ້ຄວາມສົນໃຈກ່ຽວກັບຕົວໜັງສືເປັນພິເສດ ໂດຍສະເພາະການສະກົດຄຳຕາມເຄົ້າທີ່ພວມມີການໂຕ້ຖຽງກັນຢູ່ໃນຕອນນີ້. ເພາະບາງຄົນກໍສະກົດຕາມເຄົ້າພຽງ ໒໗ ຕົວ ບາງຄົນກໍວ່າຕ້ອງສະກົດຕາມເຄົ້າ ໔໔ ຕົວຈັ່ງຖືກ. ດ້ວຍເຫດນີ້ທັງສອງຈຶ່ງໄດ້ພາກັນຫອບໂນດບຸກ (laptops) ຍ່າງເຂົ້າວັດໄປເພື່ອຫາຄຳຕອບ.

“ນະມັດສະການ ຂ້ານ້ອຍ” ທັງສອງຍໍມືໄຫວ້ເມື່ອເຂົ້າໄປເຫັນຄູບາບຸນມີພວມ



ກວດເດີ່ນວັດຢູ່.

“ໄປຈັ່ງໃດມາຈັ່ງໃດ?”

“ຄືວ່າພວກຂ້ານ້ອຍມີບັນຫາສົງໄສເລີຍເຂົ້າມາຂໍຄຳຕອບເພື່ອຄວາມກະຈ່າງນຳຄູບາ” ດີເອີ່ຍຂຶ້ນ.

“ແລ້ວມີບັນຫາຫຍັງລະ?”.

“ຄືວ່າຈັ່ງຊີ້ ຂ້ານ້ອຍ ດຽວນີ້ເຫັນມີຄົນອອກມາໂຕ້ຖຽງກັນກ່ຽວກັບການສະກົດຄຳຕາມເຄົ້າຫຼາຍ ເລີຍຕ້ອງໄດ້ມາລົບກວນຄູບາ ເພື່ອໄຂຂໍ້ຂ້ອງໃຈນີ້ໃຫ້ກະຈ່າງ”. ວອນເວົ້າຫຼັງຈາກໄປນັ່ງຢູ່ໂຕະຫີນກ້ອງຮົ່ມໄມ້ ພ້ອມອວ່າຍໜ້າຄອມໄປໃຫ້ຄູບາເບິ່ງ.

“ຕາມທີ່ຄູບາໄດ້ສຶກສາຄົ້ນຄວ້າມາແມ່ນຕ້ອງສະກົດຕາມເຄົ້າ ໔໔ ຕົວ ຄືຈັ່ງເພິ່ນຜູ້ນີ້ເຮັດໃຫ້ເບິ່ງຢູ່ນີ້ແຫຼະ ແຕ່ຢູ່ໃນມືຖືປົກກະຕິບໍ່ມີພະຍັນຊະນະຮອດ ໔໔ ຕົວແມ່ນບໍ່!. ນີ້ຄືຊິແມ່ນເພິ່ນໃຊ້ຄອມເຮັດແບບຮູບພາບຕັດອອກມາຕີນີ້!”.

“ແລ້ວເປັນຫຍັງບາງຄົນຍັງສະກົດພຽງ ໒໗ ຕົວຢູ່, ບາດມີຄົນທ້ວງເຂົາກໍບອກວ່າຕັ້ງສະກົດແບບນັ້ນ ຊິໃຫ້ສະກົດຕາມເຄົ້າ ໔໔ ຕົວກະໄດ້ ແຕ່ບໍ່ຢາກສະກົດເຂົາວ່ານ່າ ຂ້ານ້ອຍ” ວອນຖາມຂຶ້ນດ້ວຍຄວາມສົງໄສ.

“ມັນກໍບໍ່ຕ່າງຫຍັງກັບຄຳເພິ່ນວ່າ ຕົກຂົວຕາງອາບນໍ້າຫັ້ນແລ້ວ”.

“ໂອ່..! ພໍເຂົ້າໃຈແດ່ລະ ຂ້ານ້ອຍ ແລ້ວເຮັດຈັ່ງໃດເຮົາຊິຮູ້ວ່າໃຜສະກົດຖືກ ຫຼືບໍ່ຖືກ? ດີຖາມຕໍ່.

“ເຮົາຕ້ອງໝັ່ນສຶກສາຫຼາຍໆ ຢູ່ໆຊິໃຫ້ໄດ້ ໃຫ້ເຂົ້າໃຈໂລດບໍ່ມີດອກ” ຄູບາຕອບພ້ອມຖາມຕໍ່:

“ແລ້ວຫັ້ນພວມເບິ່ງຫຍັງຢູ່ ຊົງເຮັດໜ້າຫຍຸ້ງແທ້?

“ພວມອ່ານບົດຄວາມທີ່ລາວຜູ້ນີ້ຂຽນກ່ຽວກັບການໃຊ້ພາສາລາວຂອງຄົນລາວຢູ່ ຂ້ານ້ອຍຊິອ່ານສູ່ຟັງວ່າເປັນແນວໃດ” ວອນເວົ້າດ້ວຍຄວາມຕື່ນເຕັ້ນ.

..............

“ແມ່ນຢູ່ວ່າປະຊາຊົນລາວໃຊ້ພາສາລາວໃນການສື່ສານກັນ ແລະໃນໂຮງຮຽນ

ກໍແມ່ນນໍາໃຊ້ພາສາລາວເປັນຫຼັກ ແຕ່ເປັນຫຍັງຊົ່ວໂມງຮຽນ ນັກຮຽນຄືເອົາໂທລະສັບຂຶ້ນມາຫຼິ້ນ ຮຽນອ່ານຮຽນແປພາສາອື່ນເສີຍຢູ່ ຫຼືເພາະອາຈານສອນໜ້າເບື່ອບໍ່? ສອນບໍ່ດີບໍ ຫຼືຈັ່ງໃດ? ນັກຮຽນຈຶ່ງໄດ້ໃຫ້ຄວາມສົນໃຈເລື່ອງລາວໃນມືຖືຫຼາຍກວ່າ, ຊໍ້າບໍ່ພໍເວລາພັກຜ່ອນບໍ່ຈັກນັກຮຽນອາຈານແທນທີ່ຈະຈັບປຶ້ມຂຶ້ນໃສ່ໜ້າ ຜັດເອົາກ້ອງຈາກມືຖືຂຶ້ນມາຖ່າຍຮູບແທນ ຖ່າຍທ່ານັ້ນທ່ານີ້ໄຊໜ້າຂາວເປັ້ນເວິ້ນ,ປາກແດງປ່ອຍຫູ່ອຍ,ບາງຄົນກໍຍົກສອງນິ້ວຂຶ້ນເຮັດສົບບິດປາກບຸ້ງວເສີມອີກ ຍັງບໍ່ພໍກ່ອນທີ່ຈະໂພສ໌ລົງໄຊຊຽວ ຍັງມີຂໍ້ຄວາມທີ່ເປັນພາສາໄທພິມແນບໃສ່ອີກວ່າ **"ໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ"** ໂອ່ຍ! ໄດ້ອ່ານໄດ້ເຫັນແລ້ວກໍຊ່າງວ່າກ້າພິມລົງນໍ້ ຈັ່ງແມ່ນໃຊ້ເວລາປະໃຫ້ຄັງສາງແຫຼ່ງຄວາມຮູ້ມິດງຽບພໍປານປ່າຊ້າ ບໍ່ມີແມ່ນແຕ່ໃຜຈະເຂົ້າໄປໃຊ້ເລີຍ.

ສ່ວນເວລາອອກນອກຮົ້ວໂຮງຮຽນໄປແລ້ວຊິແນ່ໃຈໄດ້ແນວໃດວ່ານັກຮຽນ ຫຼືແມ່ນແຕ່ຄູອາຈານເອງ ຍັງຈະໃຊ້ພາສາລາວໃນການສື່ສານກັນຢູ່ ໂດຍສະເພາະເວລາຕິດຕໍ່ກັນຜ່ານທາງໂທລະສັບເປັນສື່ກາງ (ພິມ) ຕາມການສັງເກດມາເປັນເວລາດົນເຕີບທັງກ່ອນ ແລະຫຼັງທີ່ໂທລະສັບຈະຮອງຮັບພາສາລາວໄດ້ ແຕ່ທີ່ໜ້າເສົ້າໃຈກໍຄືຄົນລາວກວມເປີເຊັນກາຍເຄິ່ງຍັງໃຊ້ພາສາອື່ນໃນການສົນທະນາກັນຢູ່ ບໍ່ເຂົ້າໃຈວ່າເປັນຍ້ອນຫຍັງຄືຍັງເປັນແບບເກົ່າຢູ່.

ເປັນຍ້ອນຄິດວ່າໃຊ້ພາສາລາວແລ້ວບໍ່ທັນສະໄໝບໍ່? ເປັນຍ້ອນຄວາມລຶ້ງເຄີຍທີ່ໃຊ້ພາສາອື່ນມາດົນບໍ່? ແຕ່ກໍບໍ່ໜ້າຈະແມ່ນເພາະພາສາລາວເຮົາແຮ່ງເລີ່ມຮຽນເລີ່ມໃຊ້ຕັ້ງແຕ່ເກີດມາພຸ້ນ ຫຼືເປັນເພາະປະເທດອື່ນພັດທະນາກ່ອນບໍ່ຈຶ່ງຄ່ອຍໃຊ້ແຕ່ພາສາເຂົາ? ຫຼືເປັນຍ້ອນເຫດໃດແທ້ກໍບໍ່ຮູ້.!

"ກໍໜ້າເປັນຫ່ວງຫຼາຍນໍ້ ຖ້າຍັງສືບຕໍ່ເປັນແບບນີ້ໄປອີກ"
"ແມ່ນແຫຼະ ຂ້ານ້ອຍ ນັບມື້ແຮ່ງຊິໜັກໄປໜ້າ" ວອນຕອບຂຶ້ນພ້ອມອ່ານຕໍ່:

ບັນຫາເຫຼົ່ານີ້ຍັງຄົງຈະສືບຕໍ່ໄປອີກດົນປານໃດ ຕາມການສັງເກດຄົນ



ລາວສ່ວນຫຼາຍແມ່ນໃຊ້ພາສາລາວສະເພາະແຕ່ເວລາລົມກັນທາງປາກເວົ້າເທົ່ານັ້ນ, ແຕ່ບາງເທື່ອກໍຍັງລັກໄດ້ຍິນພາສາປະເທດເພື່ອນບ້ານ (ໄທ) ປົນຢູ່ນໍາອີກ, ໂດຍສະເພາະຄໍາທີ່ມັກໃຊ້ກັນຫຼາຍຄືຄໍາວ່າ "ແພ້" ພາສາລາວເຮົາໝາຍເຖິງ "ຊະນະ" ແຕ່ປັດຈຸບັນນີ້ປະຊາຊົນລາວສ່ວນຫຼາຍ ແມ່ນເອົາຄວາມໝາຍກົງກັນຂ້າມຂອງປະເທດເພື່ອນບ້ານມາໃຊ້ແທນເລີຍ ແມ່ນແຕ່ໂຄສົກຈັດລາຍການຕ່າງໆ ຫຼືໃນເນື້ອເພັງລາວເອງກໍຍັງໄດ້ຍິນຢູ່ ຊິບໍ່ໃຫ້ຄົນເວົ້ານໍາໄດ້ຈັ່ງໃດ.!

"ຂໍ້ນີ້ຄືຊິແມ່ນ ຄູບາກໍໄດ້ຍິນມາຫຼາຍໄວໜຸ່ມສ່ວນຫຼາຍມັກເວົ້າແພ້ ແລ້ວແປຕາມຄວາມໝາຍໄທເລີຍ. ໝົດແລ້ວບໍ່ທີ່ລາວຂຽນ?."
"ຍັງຂ້ານ້ອຍຊິອ່ານຕໍ່ເລີຍ"

ໄວໜຸ່ມສະໄໝນີ້ແຮ່ງເກືອບວ່າຂຽນພາສາລາວບໍ່ຕົກຊໍ້ານ່າ ນີ້ກໍຍ້ອນຂາດຄວາມເອົາໃຈໃສ່ ຖ້າເປັນແບບນີ້ແລ້ວອະນາຄົດຂອງຊາດຈະຝາກໄວ້ກັບໃຜ ໃນເມື່ອກະດູກສັນຫຼັງຂອງຊາດຍັງບໍ່ເອົາໃຈໃສ່ຕໍ່ພາສາຕົນ ແລ້ວຕໍ່ໄປຈະນໍາພາປະເທດຊາດກ້າວໄປໄດ້ຈັ່ງໃດເດ. ເຄີຍລອງຖາມໝູ່ທີ່ຮຽນນໍາກັນ(ຂັ້ນວິທະຍາໄລ) ແລ້ວວ່າ:

ຖ: ເປັນຫຍັງຄືບໍ່ພິມພາສາລາວ?
ຕ: ໂທລະສັບພິມບໍ່ໄດ້..
ຖ: ເປັນຫຍັງຄືບໍ່ໄປໃຫ້ຮ້ານເຂົາລົງໃຫ້ຊັ້ນ?
ຕ: ບໍ່ມີເວລາໄປ ເຮັດເອງບໍ່ເປັນ ແລະກໍບໍ່ມີເງິນໄປຈ້າງເຂົາແດ່.

ໄດ້ຍິນຄໍາຕອບແບບນັ້ນກໍພໍຢາກຖາມຕໍ່ວ່າ ແລ້ວເບຍລາວແກ້ວໜຶ່ງຈັກກີບ ຄືມີເງິນໄປຊື້ກິນເກືອບທຸກມື້ (ທີ່ຮູ້ຍ້ອນເຫັນຖ່າຍຮູບເວລາໄປຫຼິ້ນລົງໄຊຊຽວຕະຫຼອດ)ນີ້ເປັນພຽງສ່ວນນ້ອຍໆທີ່ສະທ້ອນໃຫ້ເຫັນແລ້ວວ່າໄວໜຸ່ມລາວຂາດຄວາມເອົາໃຈໃສ່ຕໍ່ພາສາລາວຫຼາຍ, ນີ້ເວົ້າສະເພາະແຕ່ທີ່ໄດ້ພົບ ເຫັນແລ້ວ



ທີ່ຍັງບໍ່ເຫັນອີກສ່ວນຫຼາຍເດຊິເປັນຈັ່ງໃດ, ຖ້າຢູ່ເມືອງລາວໂດຍສະເພາະໃກ້ສະຖາບັນສຶກສາມີຮ້ານຂາຍປຶ້ມຫຼາຍຄືຮ້ານຂາຍເຫຼົ້າຂາຍເບຍນີ້ກະຍັງໄດ ອັນນີ້ອີ່ຫຍັງແມ່ນແຕ່ໃນໂຮງຮຽນເອງຍັງລັກເຫັນມີເບຍລາວວາງຂາຍຢູ່.

"ໂອ໋.! ຢູ່ໃນໂຮງຮຽນເອງເພິ່ນກະອະນຸຍາດໃຫ້ຂາຍຫວະ? ຄືວ່າໃຫ້ຂາຍໄດ້ແຕ່ຕ້ອງຫ່າງຈາກໂຮງຮຽນຢ່າງໜ້ອຍ ໕໐໐ ແມັດບໍ່ແມ່ນຫວະ? ຄູບາຫ້ວງຂຶ້ນດ້ວຍຄວາມແປກໃຈ.
"ຂາຍແທ້ຂາຍວ່າ ຂ້ານ້ອຍ ມີໝົດທຸກແນວຢູ່ຫັ້ນ ບໍ່ຖ້າໄດ້ອອກໄປໄກຮອດຕະຫຼາດກະໄດ້" ດີຕອບຂຶ້ນ ແລ້ວວອນກໍອ່ານຕໍ່:

ຢູ່ເມືອງລາວເປັນຄົນລາວແທ້ໆແຕ່ວ່າໄປໃຫ້ຄວາມສໍາຄັນຕໍ່ພາສາອື່ນຫຼາຍກວ່າພາສາຊາດຕົນ ພວກເຮົາສາມາດເລົ່າພະຍັນຊະນະພາສາອັງກິດA-Z ໄດ້ຢ່າງລ່ຽນໄຫຼ ແລ້ວພາສາລາວ ແຕ່ **ກ-ຮ** ເລົ່າກັນໄດ້ຖືກໝົດລະບໍ່?

ຍັງບໍ່ທັນເຖິງເວລາເທື່ອບໍ່ ທີ່ເຮົາທຸກຄົນຈະຫັນມາເອົາໃຈໃສ່ ໃຫ້ຄວາມສໍາຄັນໃນການໃຊ້ພາສາລາວກັນຕື່ມອີກ ໂດຍເລີ່ມຈາກສິ່ງທີ່ໃກ້ໂຕເຮົານັ້ນກໍຄືໂທລະສັບ ໃນເມື່ອປັດຈຸບັນນີ້ໂທລະສັບສ່ວນຫຼາຍ ກໍສາມາດຮອງຮັບພາສາລາວໄດ້ແລ້ວ ຍັງມີຄວາມຈໍາເປັນຢູ່ອີກບໍ່ ທີ່ເຮົາຍັງຈະຕ້ອງໃຊ້ພາສາອື່ນໃນການສື່ສານກັນ (ສະເພາະຄົນລາວນໍາກັນ ແລະໂທລະສັບທີ່ຮັບພາສາລາວໄດ້).

ຄິດມາແລ້ວກໍໜ້າເສົ້າໃຈທີ່ພາສາລາວຖືກປະລະໂດຍຄົນລາວເອງຖ້າຍັງຄົງສືບຕໍ່ເປັນແບບນີ້ໄປເລື້ອຍໆ ແລ້ວພາສາລາວຈະມີໄວ້ໃຫ້ໃຜໃຊ້..!! ຖ້າມີຄົນຖາມມາວ່າເຮົາເປັນຄົນຊາດໃດ? ແລ້ວເຮົາຈະກ້າຕອບໄດ້ຢ່າງເຕັມປາກບໍ່ວ່າເປັນ "**ຄົນລາວ**" ໃນເມື່ອເຮົາເອງຍັງຂາດຄວາມເອົາໃຈໃສ່ໃນການໃຊ້ພາສາລາວຢູ່ ຢ່າລືມວ່າ"**ພາສາບອກຊາດ ມາລະຍາດບອກຕະກຸນ**" ຈົ່ງພູມໃຈທີ່ລາວເຮົາໄດ້ມີພາສາໃຊ້ເປັນຂອງຊາດລາວເອງ ພວກເຮົາບໍ່ຄວນເບິ່ງຂ້າມເລື່ອງເລັກນ້ອຍເພາະອາດກາຍເປັນບັນຫາໃຫຍ່ໄດ້".



"ໄດ້ຟັງແນວນີ້ແລ້ວ ເບິ່ງລາວຄືຊິເປັນຫ່ວງພາສາລາວຫຼາຍເນາະ" ດີເວົ້າຂຶ້ນເມື່ອຟັງວອນອ່ານບົດຄວາມຈົບ.
"ແນ່ນອນແລ້ວ ຖ້າຊາດໃດຫາກເສຍພາສາ ເສຍວັດທະນະທໍາກໍສໍ່າກັບເສຍຊາດເລີຍແຫຼະ ເພາະມີພຽງສິ່ງນີ້ທີ່ເປັນຕົວເອກອ້າງໄດ້ວ່າ ເຮົາຄົນຊາດໃດຄົນລາວເຖິງຈະໄປຢູ່ໃສກໍຕາມ ຖ້າຫາກບໍ່ລືມຮີດຄອງວັດທະນະທໍາ ແລະພາສາຂອງຕົນແລ້ວກໍຍັງເອີ້ນວ່າຄົນລາວ ກົງກັນຂ້າມເຖິງຈະຢູ່ເມືອງລາວແຕ່ບໍ່ໃຊ້ພາສາລາວ ລືມຮີດຄອງປະເພນີກໍບໍ່ອາດຈະເອີ້ນວ່າເປັນຄົນລາວໄດ້. ຄູບາຢູ່ວັດກໍໄດ້ປູກຝັງໃຫ້ຈົວນ້ອຍ ຮູ້ເຖິງຄວາມສໍາຄັນຂອງພາສາວັນນະຄະດີ ແລະເທດສະໜາເຜີຍແຜ່ໃຫ້ອອກຕົນຍາດໂຍມທັງຫຼາຍໄດ້ຮູ້ ໂດຍສະເພາະກອນພະເວດໃນຍາມປາງບຸນ".
"ເປັນແນວນີ້ກໍໜ້າເປັນຫ່ວງນໍ້ ນັບມື້ສື່ນິຍົມປະເທດອື່ນແຮ່ງເຂົ້າມາຫຼາຍ ຖ້າບໍ່ໃສ່ໃຈເອົາຈິງເອົາຈັງ ຕໍ່ໜ້າໄປພາສາລາວແຮ່ງຊິມີບັນຫາຫຼາຍແຫຼະເນາະຂ້ານ້ອຍ" ວອນເວົ້າຂຶ້ນດ້ວຍສຽງເສົ້າໆ.
"ແມ່ນແລ້ວ ພວກເຈົ້າຍັງໜຸ່ມນ້ອຍກໍຄວນປຸກລະດົມຊາວໜຸ່ມນໍາກັນໃຫ້ຮູ້ຮັກພາສາ ຮັກປະເທດໃຫ້ຫຼາຍຂຶ້ນ ໂດຍການຫັນມາອ່ານໜັງສືໃຫ້ຫຼາຍກວ່າກົ້ມໜ້າໃສ່ມືຖືຄືທຸກມື້ນີ້. ມື້ກ່ອນຄູບາອອກໄປບິນທະບາດເຫັນໄວໜຸ່ມຜູ້ໜຶ່ງກົ້ມໜ້າໃສ່ມືຖືບໍ່ເບິ່ງຮອດທາງເກືອບຢ່າງເຊໄປໃສ່ລົດເຂົາແລ່ນຢູ່ກາງທາງພຸ້ນ"
"ແມ່ນ ຂ້ານ້ອຍ ຄົນສະໄໝນີ້ ແມ່ນຢູ່ກັບມືຖືຫຼາຍກວ່າຄົນຢູ່ຂ້າງອີກ, ໄດ້ຟັງ ໄດ້ຮູ້ແບບນີ້ແລ້ວ ພວກຂ້ານ້ອຍກໍຊິພະຍາຍາມປຸກລະດົມຊາວໜຸ່ມໃຫ້ຫັນມາໃສ່ໃຈອ່ານໜັງສືໃຫ້ຫຼາຍຂຶ້ນ ທໍາອິດກໍແມ່ນເລີ່ມປ່ຽນທີ່ໂຕເຮົານີ້ແຫຼະກ່ອນນໍ້"ວອນເວົ້າພ້ອມງຶກຫົວໃສ່ດີ.
"ດີແລ້ວທີ່ຄິດໄດ້ແນວນັ້ນ ຫວັງວ່າມື້ໜ້າມາຄູບາຊິໄດ້ຟັງຂ່າວດີຈາກພວກເຈົ້ານໍ້"
"ແນ່ນອນ ຂ້ານ້ອຍ ຂອບໃຈຫຼາຍໆຄູບາສໍາລັບຄໍາຊີ້ແຈງ ແລະຄໍາສອນເຕືອນສະຕິ" ວອນເວົ້າຈົບແລ້ວທັງສອງກໍຍໍມືໄຫວ້ຄູບາເພື່ອລາກັບ.

ມັນຊິເກີດປະໂຫຍດອັນໃດ ເຖິງແມ່ນມີເຈົ້າຖືປາກກາລາຄາແພງ
ແຕ່ເຈົ້າຫາກຂຽນມັນບໍ່ເປັນ

................

ຈົ່ງໃຊ້ຊີວິດຄືຈັ່ງ "ນ້ຳເຕັມແກ້ວ" ແຕ່ຈົ່ງຮຽນຮູ້ຄືຈັ່ງ "ເມັດຊາຍກະຫາຍນ້ຳ"

................

ຖ້າ "ປິດຫູ ຫຼັບຕາ" ແລ້ວເຮັດໃຫ້ໃຈເຈັບໜ້ອຍລົງ ກໍຈົ່ງເຮັດຕໍ່ໄປ
ແຕ່ຈົ່ງຈຳໄວ້ ຖ້າມົວແຕ່ "ປິດຫູ ຫຼັບຕາ" ດົນເກີນໄປ ຂາອາດພາ
ໂຕໄປລົງເຫວໄດ້ເຊັ່ນກັນ

................

ບາງທີ "ດິນ" ກ້ອນໜຶ່ງ ອາດຈະມີຄ່າຫຼາຍກວ່າ "ກ້ອນຄຳ" ເພາະ
ຢ່າງໜ້ອຍຕົ້ນໄມ້ກໍບໍ່ສາມາດປົ່ງປົ່ງໃບໄດ້ເທິງ "ກ້ອນຄຳ"

................

ຄວາມຄຶດຂອງຫົວໃຈ... ຄວາມຄຶດບໍ່ເຂົ້າໃຈ.!!!





# ກ່ຽວກັບຜູ້ຂຽນ

**ດອກຄູນ ນະ ຊຽງຂວາງ**
ເປັນນາມປາກກາຂອງ ທອງຄູນ ເພັດດາລາ ເກີດເມື່ອວັນທີ ໔ງ ພຶດສະພາ ໑໙໙໔ ທີ່ບ້ານແກ້ວກູ່ ເມືອງແກ້ວອຸດົມ ແຂວງວຽງຈັນ

ຈົບການສຶກສາຊັ້ນສູງຄູປະຖົມ ທີ່ວິທະຍາໄລຄູບ້ານເກີນ ປັດຈຸບັນເຮັດວຽກຢູ່ທີ່ ສວນໄຜ່ພັນກໍ (ຫໍພິພິດທະພັນຜ້າແພບູຮານ ແລະເຄື່ອງຈັກສານລາວ) ບ້ານໄຮ່ ເມືອງໄຊທານີ ນະຄອນຫຼວງວຽງຈັນ.

ດອກເກດ
DokkeD
Publishing Co., Ltd

ISBN 978-9932-07-080-0
9 789932 070800
25.000 kip